ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ ເລກທີ 027 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 17-01-2013

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍຫລັກຊັບ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 033/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 02/ຄປຈ, ລົງວັນທີ 04 ມັງກອນ 2013;

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍຫລັກຊັບ.
ມາດຕາ 2. ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 033 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ຫລັກຊັບ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ຫລັກຊັບ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 10 ທັນວາ 2012

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u>. ຮັບຮອງເອົາ ກົດໝາຍວ່າດ້ວຍ ຫລັກຊັບ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 10 ທັນວາ 2012

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------------

ສະພາແຫ່ງຊາດ ເລກທີ 21 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 ທັນວາ 2012

# ກົດໝາຍ
# ວ່າດ້ວຍ ຫຼັກຊັບ
## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານຫຼັກຊັບ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ຍຸຕິທຳ, ໂປ່ງໃສ, ຫຼຸດຜ່ອນຄວາມສ່ຽງຕໍ່ລະບົບການເງິນ ແລະ ຊຸກຍູ້ໃຫ້ມີການເຂົ້າຮ່ວມຂອງປະຊາຊົນ ແນໃສ່ເຮັດໃຫ້ການລະດົມທຶນ ແລະ ການພັດທະນາຕະຫຼາດຫຼັກຊັບ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ຍືນຍົງ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ຫຼັກຊັບ**

ຫຼັກຊັບ ແມ່ນ ເຄື່ອງມືທາງດ້ານການເງິນ ຊຶ່ງປະກອບດ້ວຍ ຮຸ້ນ, ຮຸ້ນກູ້, ກອງທຶນຮ່ວມ ແລະ ຫຼັກຊັບປະເພດອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງຂຽນຫຍໍ້ວ່າ ຄຄຊ.

**ມາດຕາ 3 ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ວຽກງານຫຼັກຊັບ ໝາຍເຖິງ** ການຄຸ້ມຄອງ ແລະ ການເຄື່ອນໄຫວກ່ຽວກັບການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນ, ການຈົດທະບຽນຫຼັກຊັບ, ການຊື້-ຂາຍຫຼັກຊັບ,

ການສະສາງ-ຊຳລະທຸລະກຳຫຼັກຊັບ, ການຮັບຝາກ ແລະ ຮັກສາຫຼັກຊັບ, ການດຳເນີນທຸລະກິດຫຼັກຊັບ, ການລົງທຶນໃນຫຼັກຊັບ ແລະ ການບໍລິການອື່ນກ່ຽວກັບຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

2. **ຕະຫຼາດຫຼັກຊັບ ໝາຍເຖິງ** ສູນກາງໃຫ້ບໍລິການຊື້-ຂາຍຫຼັກຊັບ, ສະສາງ-ຊຳລະ ແລະ ຮັບຝາກຫຼັກຊັບ;

3. **ຮຸ້ນ ໝາຍເຖິງ** ທຶນຂອງບໍລິສັດ ຊຶ່ງຜູ້ຖືຮຸ້ນມີຖານະເປັນເຈົ້າຂອງບໍລິສັດ, ມີສິດ ແລະ ຜົນປະໂຫຍດຕາມອັດຕາສ່ວນຮຸ້ນທີ່ຕົນຖື;

4. **ຮຸ້ນກູ້ ໝາຍເຖິງ** ການກູ້ຢືມຂອງບໍລິສັດ ຊຶ່ງຜູ້ຖືຮຸ້ນກູ້ ມີຖານະເປັນເຈົ້າໜີ້ ຈະໄດ້ຮັບການຊຳລະຄືນ ທັງຕົ້ນທຶນ ແລະ ດອກເບ້ຍ ຕາມທີ່ໄດ້ກຳນົດໄວ້ໃນໃບຮຸ້ນກູ້;

5. **ໜ່ວຍລົງທຶນ ໝາຍເຖິງ** ຫົວໜ່ວຍວັດແທກກອງທຶນຮ່ວມ ທີ່ແບ່ງອອກເປັນສ່ວນ;

6. **ໃບຢັ້ງຢືນການຖືຄອງຫຼັກຊັບ ໝາຍເຖິງ** ເອກະສານທີ່ຢັ້ງຢືນ ປະເພດ, ຈຳນວນ ແລະ ມູນຄ່າຫຼັກຊັບ ຊຶ່ງຜູ້ລົງທຶນໄດ້ຮັບຫຼັງຈາກ ການຊື້-ຂາຍ ຫຼື ການໂອນ ຫຼັກຊັບ;

7. **ບໍລິສັດອອກຈຳໜ່າຍຫຼັກຊັບ ໝາຍເຖິງ** ບໍລິສັດທີ່ໄດ້ນຳຫຼັກຊັບຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

8. **ບໍລິສັດຈົດທະບຽນ ໝາຍເຖິງ** ບໍລິສັດທີ່ໄດ້ນຳຫຼັກຊັບຂອງຕົນອອກຈຳໜ່າຍແກ່ຜູ້ລົງທຶນ ແລະ ຈົດທະບຽນ ໃນຕະຫຼາດຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

9. **ຜູ້ລົງທຶນ ໝາຍເຖິງ** ບຸກຄົນ ແລະ ສະຖາບັນ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນຊື້-ຂາຍ ຫຼັກຊັບ;

10. **ຜູ້ລົງທຶນທີ່ເປັນສະຖາບັນ ໝາຍເຖິງ** ຜູ້ລົງທຶນທີ່ເປັນນິຕິບຸກຄົນ ເປັນຕົ້ນ ທະນາຄານທຸລະກິດ, ກອງທຶນຮ່ວມ, ບໍລິສັດປະກັນໄພ ແລະ ກອງທຶນປະກັນສັງຄົມ;

11. **ຜູ້ບໍລິຫານກອງທຶນຮ່ວມ ໝາຍເຖິງ** ຜູ້ໄດ້ຮັບການແຕ່ງຕັ້ງຈາກບໍລິສັດບໍລິຫານຊັບສິນໃຫ້ຄຸ້ມຄອງ ແລະ ບໍລິຫານກອງທຶນຮ່ວມ ຊຶ່ງສາມາດຕັດສິນການລົງທຶນໃນຫຼັກຊັບ ຫຼື ຊັບສິນອື່ນ ຕາມຂອບເຂດສິດ ທີ່ໄດ້ຮັບມອບໝາຍ;

12. **ສະຖາບັນສື່ກາງດ້ານຫຼັກຊັບ ໝາຍເຖິງ** ນິຕິບຸກຄົນ ທີ່ໃຫ້ບໍລິການດ້ານທຸລະກິດຫຼັກຊັບ ຊຶ່ງປະກອບດ້ວຍ ບໍລິສັດຫຼັກຊັບ, ບໍລິສັດບໍລິຫານຊັບສິນ, ທະນາຄານດູແລຊັບສິນ, ບໍລິສັດກວດ

ສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ສະມາຄົມທຸລະກິດຫຼັກຊັບ ແລະ ນິຕິບຸກຄົນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

13. **ສະມາຊິກອິດສະລະ ໝາຍເຖິງ** ສະມາຊິກສະພາບໍລິຫານ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ທີ່ບໍ່ມີສ່ວນພົວພັນກັບຜົນປະໂຫຍດຂອງບໍລິສັດ ຊຶ່ງສາມາດປະກອບຄຳເຫັນຢ່າງເປັນເອກະລາດ;

14. **ການປັ່ນຕະຫຼາດ ໝາຍເຖິງ** ການກະທຳໃດໜຶ່ງ ຊຶ່ງສົ່ງຜົນກະທົບຕໍ່ ລາຄາ ຫຼື ຈຳນວນຫຼັກຊັບ ທີ່ມີການຊື້-ຂາຍ. ການປັ່ນຕະຫຼາດ ສະແດງອອກ ໃນກໍລະນີໃດໜຶ່ງ ດັ່ງນີ້:

- ຊື້-ຂາຍຫຼັກຊັບ ດ້ວຍຕົນເອງ ຫຼື ຮ່ວມກັບພາກສ່ວນອື່ນ ໂດຍນຳໃຊ້ຄວາມໄດ້ປຽບທາງດ້ານເງິນທຶນ, ການຖືຄອງຫຼັກຊັບ ຫຼື ການເຂົ້າເຖິງຂໍ້ມູນຂ່າວສານ ເພື່ອການຊື້-ຂາຍຫຼັກຊັບ ຢ່າງຕໍ່ເນື່ອງ;
- ຊື້-ຂາຍຫຼັກຊັບ ຕາມເວລາ, ລາຄາ ຫຼື ວິທີການໃດໜຶ່ງ ທີ່ມີການຕົກລົງກັນລ່ວງໜ້າ;
- ຊື້-ຂາຍຫຼັກຊັບ ໂດຍນຳໃຊ້ຫຼາຍບັນຊີ ທີ່ຕົນຄຸ້ມຄອງ;
- ດຳເນີນດ້ວຍວິທີການອື່ນ ທີ່ກໍ່ໃຫ້ເກີດຄວາມເສັຍຫາຍໃຫ້ແກ່ຜູ້ລົງທຶນ ແລະ ສະຖຽນລະພາບຂອງຕະຫຼາດຫຼັກຊັບ;

15. **ຂໍ້ມູນພາຍໃນ ໝາຍເຖິງ** ຂໍ້ມູນກ່ຽວກັບການດຳເນີນທຸລະກິດ, ການເງິນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ການກະກຽມອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ, ການຄອບຄອງກິດຈະການ, ການຖອນການຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຂໍ້ມູນອື່ນ ທີ່ຍັງບໍ່ໄດ້ຮັບອະນຸຍາດ ໃຫ້ເປີດເຜີຍຕໍ່ມວນຊົນ ຢ່າງເປັນທາງການ ຊຶ່ງການເປີດເຜີຍດັ່ງກ່າວ ອາດມີຜົນກະທົບຕໍ່ລາຄາຫຼັກຊັບ ຫຼື ການຕັດສິນໃຈຂອງຜູ້ລົງທຶນ;

16. **ການນຳໃຊ້ຂໍ້ມູນພາຍໃນ ໝາຍເຖິງ** ການໃຫ້, ໃຊ້, ຮັບ, ສົ່ງຕໍ່, ເປີດເຜີຍ ຫຼື ເຜີຍແຜ່ຂໍ້ມູນພາຍໃນ ເພື່ອການຊື້-ຂາຍຫຼັກຊັບ ໃນນາມຕົນເອງ ຫຼື ບຸກຄົນອື່ນ ເພື່ອຜົນປະໂຫຍດຂອງຕົນ ຫຼື ຂອງບຸກຄົນອື່ນ;

17. **ຜູ້ມີອຳນາດຄວບຄຸມ ໝາຍເຖິງ** ຜູ້ຖືຮຸ້ນທີ່ມີສິດອອກສຽງ ບໍ່ວ່າທາງກົງ ຫຼື ທາງອ້ອມຫຼາຍກວ່າ ຊາວຫ້າສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ມີສິດອອກສຽງທັງໝົດຂອງບໍລິສັດ ຫຼື ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການຂອງບໍລິສັດ ທີ່ມີສ່ວນກ່ຽວຂ້ອງກັບການກຳນົດນະໂຍບາຍ, ການບໍລິຫານ ຫຼື ການເຄື່ອນໄຫວທຸລະກິດທີ່ສຳຄັນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ;

18. **ບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນ ໝາຍເຖິງ** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເປັນ ຜູ້ມີອຳນາດຄວບຄຸມ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ບໍລິສັດໃນກຸ່ມ ຫຼື ກຸ່ມບໍລິສັດ ລວມທັງ ພໍ່, ແມ່, ຜົວ ຫຼື ເມັຍ, ອ້າຍ, ເອື້ອຍ, ນ້ອງ, ລູກ ແລະ ຜົວ ຫຼື ເມັຍ ຂອງລູກ ຂອງບຸກຄົນດັ່ງກ່າວ.

## ມາດຕາ 4 ນະໂຍບາຍກ່ຽວກັບວຽກງານຫຼັກຊັບ

ລັດ ສົ່ງເສີມວຽກງານຫຼັກຊັບ ດ້ວຍການສ້າງ ແລະ ປະກອບບຸກຄະລາກອນ, ກໍ່ສ້າງພື້ນຖານໂຄງລ່າງ, ສະໜອງອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບ ເພື່ອສາມາດເຄື່ອນໄຫວຢ່າງມີປະສິດທິຜົນ.

ລັດ ຊຸກຍູ້ ແລະ ປຸກລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຄື່ອນໄຫວ ແລະ ພັດທະນາວຽກງານຫຼັກຊັບ ດ້ວຍການໂຄສະນາ ເຜີຍແຜ່, ສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານຫຼັກຊັບ ແລະ ການໃຫ້ນະໂຍບາຍອາກອນ ຕາມລະບຽບກົດໝາຍ.

ລັດ ກະຕຸກຊຸກຍູ້ ບໍລິສັດ ຈາກທຸກຂະແໜງການ ແລະ ພາກສ່ວນເສດຖະກິດ ທີ່ມີເງື່ອນໄຂພື້ນຖານຄົບຖ້ວນ ເປັນຕົ້ນ ບໍລິສັດ ທີ່ນຳໃຊ້ຊັບພະຍາກອນທຳມະຊາດ, ມີການຂະຫຍາຍຕົວດີ, ມີຜົນກຳໄລຕໍ່ເນື່ອງ ໃຫ້ຈົດທະບຽນໃນຕະຫຼາດຫຼັກຊັບ ໂດຍບໍ່ມີຜົນກະທົບຕໍ່ນະໂຍບາຍ ທີ່ບໍລິສັດໄດ້ຮັບມາກ່ອນ ແຕ່ຢ່າງໃດ.

## ມາດຕາ 5 ຫຼັກການເຄື່ອນໄຫວວຽກງານຫຼັກຊັບ

ການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ປະຕິບັດຕາມຫຼັກການ ຕົ້ນຕໍ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ;
2. ມີຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;
3. ປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງ ຕໍ່ລະບົບການເງິນ;
4. ສະໝັກໃຈ ເຂົ້າຮ່ວມໃນການຊື້-ຂາຍຫຼັກຊັບ.

ເອກະສານ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ຕ້ອງເປັນພາສາລາວ.

## ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານຫຼັກຊັບ ຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຫຼັກຊັບ ດ້ວຍການແລກປ່ຽນບົດຮຽນ, ເຕັກນິກ ແລະ ວິຊາການ, ການພັດທະນາຊັບພະຍາກອນມະນຸດ ແລະ ການແລກປ່ຽນຂໍ້ມູນຂ່າວສານ, ປະຕິບັດ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການອອກຈຳໜ່າຍຫຼັກຊັບ ແລະ ການເຄື່ອນໄຫວ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

### ໝວດທີ 1
### ການອອກຈຳໜ່າຍຫຼັກຊັບ

**ມາດຕາ 8 ການອອກຈຳໜ່າຍຫຼັກຊັບ**

**ການອອກຈຳໜ່າຍຫຼັກຊັບ ແມ່ນ ການນຳເອົາຫຼັກຊັບຂອງບໍລິສັດ ອອກຈຳໜ່າຍ ໃຫ້ແກ່ຜູ້ລົງທຶນ ເພື່ອຈຸດປະສົງໃດໜຶ່ງ ດັ່ງນີ້:**

1. ເພີ່ມທຶນ ຫຼື ລະດົມທຶນ ເພື່ອຂະຫຍາຍກິດຈະການ;
2. ປ່ຽນແປງໂຄງສ້າງການຖືຮຸ້ນ;
3. ຈ່າຍຮຸ້ນ ເພື່ອປັນຜົນ ຫຼື ໃຫ້ເປັນລາງວັນ;
4. ມີຈຸດປະສົງອື່ນ ຕາມການກຳນົດຂອງ ຄຄຊ.

ການອອກຈຳໜ່າຍຫຼັກຊັບ ຕ້ອງໄດ້ຮັບອະນຸຍາດຈາກ ຄຄຊ.

**ມາດຕາ 9 ຮູບແບບການອອກຈຳໜ່າຍຫຼັກຊັບ**

**ການອອກຈຳໜ່າຍຫຼັກຊັບ ປະກອບດ້ວຍ ສາມ ຮູບແບບ ຄື:**

1. ໃຫ້ແກ່ມວນຊົນ;
2. ໃນວົງຈຳກັດ;
3. ໃຫ້ແກ່ຜູ້ຖືຮຸ້ນເດີມ.

ການອອກຈຳໜ່າຍຫຼັກຊັບໃຫ້ແກ່ມວນຊົນ ແມ່ນ ການອອກຈຳໜ່າຍຫຼັກຊັບ ຄັ້ງທຳອິດ ຫຼື ອອກເພີ່ມ ທີ່ມີການໂຄສະນາຜ່ານພາຫະນະສື່ມວນຊົນໃນວົງກວ້າງ, ບໍ່ມີການກຳນົດປະເພດ ຫຼື ກຸ່ມຜູ້ລົງທຶນສະເພາະໃດໜຶ່ງ ຊຶ່ງມີຜູ້ລົງທຶນຫຼາຍກວ່າ ໜຶ່ງຮ້ອຍ ຂຶ້ນໄປ.

ການອອກຈຳໜ່າຍຫຼັກຊັບໃນວົງຈຳກັດ ແມ່ນ ການອອກຈຳໜ່າຍຫຼັກຊັບ ໃຫ້ແກ່ຜູ້ລົງທຶນຍຸດທະສາດ, ຜູ້ລົງທຶນປະເພດສະຖາບັນ ແລະ ບຸກຄົນ ຊຶ່ງມີຈຳນວນຜູ້ລົງທຶນ ແຕ່ ສາມສິບ ຫາ ໜຶ່ງຮ້ອຍ. ມູນຄ່າ ແລະ ຈຳນວນຄັ້ງ ແລະ ຈຳນວນຜູ້ລົງທຶນ ໃນການອອກຈຳໜ່າຍຫຼັກຊັບ ໃນວົງຈຳກັດ ຕ້ອງປະຕິບັດຕາມການກຳນົດຂອງ ຄຄຊ.

ການອອກຈຳໜ່າຍຫຼັກຊັບໃຫ້ແກ່ຜູ້ຖືຮຸ້ນເດີມ ແມ່ນ ການອອກຈຳໜ່າຍຫຼັກຊັບ ໂດຍໃຫ້ບູລິມະສິດແກ່ຜູ້ຖືຮຸ້ນເດີມ ໃນການຊື້ຫຼັກຊັບຂອງບໍລິສັດ ໃນອັດຕາສ່ວນ ແລະ ວິທີການແບ່ງປັນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ.

ມາດຕາ 10 **ເງື່ອນໄຂການອອກຈຳໜ່າຍຫຼັກຊັບ**

**ບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ ຕ້ອງມີເງື່ອນໄຂ ດັ່ງນີ້:**

1. ມີຖານະເປັນບໍລິສັດມະຫາຊົນ;
2. ມີສະພາບໍລິຫານ ທີ່ປະກອບດ້ວຍ ສະມາຊິກອິດສະລະຢ່າງໜ້ອຍ ໜຶ່ງສ່ວນສາມຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ ແລະ ມີຄະນະກຳມະການກວດກາ ພາຍໃນ;
3. ມີແຜນການນຳໃຊ້ທຶນ ແລະ ມີມະຕິຮັບຮອງຈາກ ກອງປະຊຸມຜູ້ຖືຮຸ້ນ;
4. ມີເອກະສານລາຍງານການເງິນ ຊຶ່ງຕ້ອງໄດ້ຮັບການກວດສອບຈາກ ບໍລິສັດກວດສອບ;
5. ມີຄວາມສາມາດສ້າງກຳໄລ, ມີຖານະການເງິນ ທີ່ໝັ້ນຄົງ ແລະ ບໍ່ມີໜີ້ສິນຄຸມເຄືອ;
6. ມີການຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຮຸ້ນຈາກ ບໍລິສັດຫຼັກຊັບ;
7. ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນກູ້ ຕ້ອງມີເງື່ອນໄຂ ດັ່ງນີ້:**

1. ເປັນບໍລິສັດ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ;
2. ມີແຜນການນຳໃຊ້ທຶນ;
3. ມີເອກະສານລາຍງານການເງິນ ຊຶ່ງຕ້ອງໄດ້ຮັບການກວດສອບຈາກ ບໍລິສັດກວດສອບ;
4. ມີທະນາຄານດູແລຊັບສິນ ເພື່ອຕິດຕາມ ແລະ ດູແລຜົນປະໂຫຍດຂອງຜູ້ຖືຮຸ້ນກູ້;
5. ມີຍອດເຫຼືອຮຸ້ນກູ້ທັງໝົດ ຊຶ່ງຕ້ອງຕ່ຳກວ່າ ສາມສິບສ່ວນຮ້ອຍ ຂອງມູນຄ່າຊັບສິນສຸດທິ;
6. ມີກຳໄລສະເລ່ຍສາມປີຄືນຫຼັງ ພຽງພໍສຳລັບການຊຳລະດອກເບ້ຍຮຸ້ນກູ້ທັງໝົດ ໃນໜຶ່ງປີຕໍ່ໜ້າ;

7. ມີຄວາມສາມາດຊຳລະຕົ້ນທຶນ ແລະ ດອກເບ້ຍ ຂອງຮຸ້ນກູ້ ໃນບ້ວງທີ່ໄດ້ອອກຜ່ານມາ ຕາມກຳນົດເວລາ ໃນກໍລະນີ ທີ່ມີການອອກຈຳໜ່າຍຮຸ້ນກູ້ເພີ່ມ.

ນອກຈາກ ຫຼັກຊັບ ທີ່ເປັນຮຸ້ນ ແລະ ຮຸ້ນກູ້ແລ້ວ ຄຄຊ ຍັງເປັນຜູ້ກຳນົດເງື່ອນໄຂ ກ່ຽວກັບການອອກຈຳໜ່າຍຫຼັກຊັບປະເພດອື່ນ, ການອອກຈຳໜ່າຍຫຼັກຊັບ ຂອງບໍລິສັດສ້າງຕັ້ງໃໝ່ ໃນຂະແໜງການບູລິມະສິດຂອງລັດຖະບານ, ການອອກຈຳໜ່າຍຫຼັກຊັບ ຢູ່ຕ່າງປະເທດ ແລະ ການອອກຈຳໜ່າຍຫຼັກຊັບຂອງບໍລິສັດຕ່າງປະເທດ ຢູ່ ສປປ ລາວ.

## ມາດຕາ 11 ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຫຼັກຊັບ

ບໍລິສັດ ທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ ຄຄຊ.

**ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຫຼັກຊັບ ມີ ດັ່ງນີ້:**

1. ຄຳຮ້ອງ ຕາມແບບພິມຂອງ ຄຄຊ;
2. ສຳເນົາໃບທະບຽນວິສາຫະກິດ ຫຼື ສຳເນົາໃບທະບຽນສຳປະທານ;
3. ສຳເນົາໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ;
4. ກົດລະບຽບຂອງບໍລິສັດ;
5. ມະຕິກອງປະຊຸມຜູ້ຖືຮຸ້ນ ທີ່ຮັບຮອງການອອກຈຳໜ່າຍຫຼັກຊັບ;
6. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ໜຶ່ງສ່ວນຮ້ອຍ ຂຶ້ນໄປ;
7. ໃບຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຫຼັກຊັບຈາກບໍລິສັດຫຼັກຊັບ ສຳລັບການອອກຮຸ້ນ ຫຼື ຈາກທະນາຄານທຸລະກິດໃດໜຶ່ງ ສຳລັບການອອກຮຸ້ນກູ້;
8. ບົດລາຍງານ ການປະເມີນມູນຄ່າຊັບສິນ ສຳລັບການອອກຮຸ້ນກູ້;
9. ເອກະສານລາຍງານການເງິນ;
10. ໜັງສືຊວນຊື້;
11. ສັນຍາຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ກັບບໍລິສັດຫຼັກຊັບ;
12. ເອກະສານອື່ນທີ່ກ່ຽວຂ້ອງ.

ບໍລິສັດສະເໜີອອກຈຳໜ່າຍຫຼັກຊັບ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງທີ່ມີສ່ວນຮ່ວມໃນການກະກຽມເອກະສານປະກອບການຮ້ອງຂໍອອກຈຳໜ່າຍຫຼັກຊັບ ຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບົ່ງໄວ້ໃນເອກະສານດັ່ງກ່າວ.

## ມາດຕາ 12 ເອກະສານລາຍງານການເງິນ

ເອກະສານລາຍງານການເງິນຂອງບໍລິສັດສະເໜີອອກຈຳໜ່າຍຫຼັກຊັບ ປະກອບດ້ວຍ ໃບສະຫຼຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດລວມ, ໃບລາຍງານສ່ວນປ່ຽນ

ແປງຂອງທຶນຕົນເອງ ແລະ ບົດອະທິບາຍກ່ຽວກັບຫຼັກການ, ວິທີການດ້ານການບັນຊີທີ່ໄດ້ນຳໃຊ້ ແລະ ອື່ນໆ. ເອກະສານລາຍງານການເງິນ ຕ້ອງຜ່ານການກວດສອບຈາກ ບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ຄຄຊ.

ຖ້າວ່າບໍລິສັດສະເໜີອອກຈຳໜ່າຍຫຼັກຊັບ ຫາກເປັນກຸ່ມບໍລິສັດ ເອກະສານລາຍງານການເງິນນັ້ນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນແບບແຍກກິດຈະການ ແລະ ລວມກິດຈະການ.

ມາດຕາ 13 **ໜັງສືຊວນຊື້**

**ໜັງສືຊວນຊື້ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:**

1. ຂໍ້ມູນ ກ່ຽວກັບບໍລິສັດສະເໜີອອກຈຳໜ່າຍຫຼັກຊັບ, ການດຳເນີນທຸລະກິດ ແລະ ປັດໄຈຄວາມສ່ຽງໃນການດຳເນີນທຸລະກິດ;
2. ຂໍ້ມູນ ກ່ຽວກັບສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາ ແລະ ຄະນະອຳນວຍການ;
3. ຂໍ້ມູນ ກ່ຽວກັບຫຼັກຊັບ ທີ່ສະເໜີອອກຈຳໜ່າຍ ເປັນຕົ້ນ ວິທີການສະເໜີຂາຍ, ຈຳນວນ, ມູນຄ່າກຳນົດ, ລາຄາຂາຍ, ໄລຍະເວລາຂາຍ, ວິທີການຈອງຊື້, ການແບ່ງປັນ, ການສົ່ງມອບ ແລະ ເງື່ອນໄຂໃນການໂອນຫຼັກຊັບ;
4. ຜົນຕອບແທນ ແລະ ແຜນໄຖ່ຖອນຄືນ ເມື່ອຄົບກຳນົດ ສຳລັບການອອກຮຸ້ນກູ້;
5. ຊື່ ແລະ ທີ່ຢູ່ ຂອງບໍລິສັດກວດສອບ, ບໍລິສັດທີ່ປຶກສາທາງດ້ານກົດໝາຍ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການສະເໜີອອກຈຳໜ່າຍຫຼັກຊັບ;
6. ແຜນການນຳໃຊ້ທຶນທີ່ລະດົມໄດ້ ແລະ ໂຄງການໃນອະນາຄົດ;
7. ບັນຊີລາຍຊື່ຜູ້ມີອຳນາດຄວບຄຸມ;
8. ຂໍ້ຂັດແຍ່ງທາງດ້ານກົດໝາຍ ແລະ ລາຍການທີ່ກ່ຽວພັນ;
9. ຂໍ້ມູນ ກ່ຽວກັບຖານະການເງິນ ຂອງບໍລິສັດສະເໜີອອກຈຳໜ່າຍຫຼັກຊັບ ທີ່ຜ່ານການກວດສອບຈາກບໍລິສັດກວດສອບ.

ມາດຕາ 14 **ສັນຍາຄ້ຳປະກັນການອອກຈຳໜ່າຍຫຼັກຊັບ**

ໃນການອອກຈຳໜ່າຍຫຼັກຊັບ ແຕ່ລະຄັ້ງ ບໍລິສັດອອກຈຳໜ່າຍຫຼັກຊັບ ຕ້ອງເຮັດສັນຍາຄ້ຳປະກັນກັບບໍລິສັດຫຼັກຊັບໃດໜຶ່ງ ຍົກເວັ້ນ ການອອກຈຳໜ່າຍຫຼັກຊັບໃນວົງຈຳກັດ.

ໃນກໍລະນີ ມີຫຼາຍບໍລິສັດຫຼັກຊັບ ຮ່ວມກັນຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ຕ້ອງມອບໃຫ້ບໍລິສັດໃດໜຶ່ງ ເປັນຜູ້ຕາງໜ້າເຮັດສັນຍາຄ້ຳປະກັນ ກັບບໍລິສັດອອກຈຳໜ່າຍຫຼັກຊັບ.

**ມາດຕາ 15 ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈຳໜ່າຍຫຼັກຊັບ**

ຫຼັງຈາກໄດ້ຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຫຼັກຊັບ ຕໍ່ ຄຄຊ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ບໍລິສັດສະເໜີອອກຈຳໜ່າຍຫຼັກຊັບ ສາມາດເປີດເຜີຍຂໍ້ມູນ ກ່ຽວກັບການອອກຈຳໜ່າຍຫຼັກຊັບ ຕາມເນື້ອໃນທີ່ໄດ້ບົ່ງໄວ້ໃນເອກະສານປະກອບການຮ້ອງຂໍການ ອອກຈຳໜ່າຍຫຼັກຊັບ.

**ມາດຕາ 16 ການພິຈາລະນາການຂໍອອກຈຳໜ່າຍຫຼັກຊັບ**

ເມື່ອໄດ້ຮັບເອກະສານປະກອບການຮ້ອງຂໍອອກຈຳໜ່າຍຫຼັກຊັບ ຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ຄຄຊ ຕ້ອງພິຈາລະນາການຮ້ອງຂໍອອກຈຳໜ່າຍຫຼັກຊັບ ພາຍໃນກຳນົດ ສີ່ສິບຫ້າວັນ ນັບ ແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ເປັນຕົ້ນໄປ. ໃນກໍລະນີ ຫາກປະຕິເສດ ກໍຕ້ອງ ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຮ້ອງຂໍອອກຈຳໜ່າຍຫຼັກຊັບ ຫາກເຫັນວ່າມີຄວາມຈຳເປັນ ຄຄຊ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ລວມທັງເອກະສານຢັ້ງຢືນການກວດສອບ ຈາກ ບໍລິສັດກວດສອບ, ເຊີນບໍລິສັດສະເໜີອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຫຼັກຊັບ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ມາປຶກສາຫາລື ຫຼື ລົງເກັບກຳຂໍ້ມູນ.

**ມາດຕາ 17 ຂັ້ນຕອນການອອກຈຳໜ່າຍຫຼັກຊັບ**

**ການອອກຈຳໜ່າຍຫຼັກຊັບ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:**

1. ປະກາດການອະນຸຍາດໃຫ້ອອກຈຳໜ່າຍຫຼັກຊັບ;
2. ກຳນົດລາຄາຈຳໜ່າຍຫຼັກຊັບ;
3. ໂຄສະນາຈຳໜ່າຍຫຼັກຊັບ ຜ່ານພາຫະນະສື່ມວນຊົນ;
4. ຈອງຊື້ຫຼັກຊັບ ແລະ ວາງເງິນມັດຈຳ;
5. ແບ່ງປັນຫຼັກຊັບ;
6. ຊຳລະເງິນ ຫຼື ສົ່ງເງິນມັດຈຳຄືນ ໃນກໍລະນີຜູ້ຈອງຊື້ຫຼັກຊັບ ບໍ່ໄດ້ຮັບການແບ່ງປັນ ຫຼັກຊັບ ຕາມຈຳນວນຫຼັກຊັບທີ່ຈອງຊື້;
7. ອອກໃບຢັ້ງຢືນການຖືຄອງຫຼັກຊັບ.

ການຈຳໜ່າຍຫຼັກຊັບ ຕ້ອງໃຫ້ສຳເລັດ ພາຍໃນກຳນົດ ເກົ້າສິບວັນ ນັບແຕ່ວັນໄດ້ອະນຸຍາດ ໃຫ້ອອກຈຳໜ່າຍຫຼັກຊັບ ເປັນຕົ້ນໄປ. ໃນກໍລະນີ ການຈຳໜ່າຍຫຼັກຊັບບໍ່ສຳເລັດ ຕາມກຳນົດເວ ລາດັ່ງກ່າວ ບໍລິສັດອອກຈຳໜ່າຍຫຼັກຊັບ ສາມາດສະເໜີຕໍ່ ຄຄຊ ເພີ່ມເວລາຈຳໜ່າຍຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນ ສາມສິບວັນ.

ຜູ້ລົງທຶນຕ່າງປະເທດ ທີ່ມີຈຸດປະສົງຈອງຊື້ຫຼັກຊັບ ຕ້ອງປະຕິບັດຕາມຂັ້ນຕອນ ແລະ ເງື່ອນໄຂທີ່ ຄຄຊ ກຳນົດ.

**ມາດຕາ 18 ການລາຍງານຜົນການອອກຈຳໜ່າຍຫຼັກຊັບ**

ບໍລິສັດອອກຈຳໜ່າຍຫຼັກຊັບ ຕ້ອງລາຍງານຜົນການອອກຈຳໜ່າຍຫຼັກຊັບໃຫ້ ຄຄຊ ຊາບ ເປັນລາຍລັກອັກສອນ ພາຍໃນກຳນົດ ຫ້າວັນ ລັດຖະການ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍເປັນຕົ້ນໄປ.

ຄຄຊ ຕ້ອງຢັ້ງຢືນຜົນການອອກຈຳໜ່າຍຫຼັກຊັບ ພາຍໃນກຳນົດ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການລາຍງານເປັນຕົ້ນໄປ ເພື່ອໃຫ້ບໍລິສັດອອກຈຳໜ່າຍຫຼັກຊັບ ນຳໃຊ້ເປັນບ່ອນອີງໃນການຂຶ້ນທະບຽນເພີ່ມທຶນ, ຈາກນັ້ນ ຈຶ່ງສາມາດນຳໃຊ້ທຶນ ທີ່ໄດ້ມາຈາກການອອກຈຳໜ່າຍຫຼັກຊັບ.

ໃນກໍລະນີ ການຈຳໜ່າຍຫຼັກຊັບ ຫາກຕ່ຳກວ່າ ແປດສິບສ່ວນຮ້ອຍ ຂອງຈຳນວນຫຼັກຊັບ ທີ່ອອກຈຳໜ່າຍທັງໝົດ ຖືວ່າການອອກຈຳໜ່າຍຫຼັກຊັບດັ່ງກ່າວບໍ່ສຳເລັດ ແລະ ຕ້ອງສົ່ງເງິນຄືນໃຫ້ແກ່ຜູ້ລົງທຶນ ພາຍໃນກຳນົດ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຫຼັກຊັບ.

**ມາດຕາ 19 ການໂຈະ ແລະ ການຍົກເລີກ ການອອກຈຳໜ່າຍຫຼັກຊັບ**

ຄຄຊ ມີສິດສັ່ງໂຈະການອອກຈຳໜ່າຍຫຼັກຊັບ ໃນກໍລະນີ ການສະໜອງຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ປະຕິບັດຕາມຂັ້ນຕອນການອອກຈຳໜ່າຍຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 17 ຂອງກົດໝາຍສະບັບນີ້ ທີ່ອາດສົ່ງຜົນເສຍຫາຍຕໍ່ຜູ້ລົງທຶນ.

ຄຄຊ ມີສິດຍົກເລີກການອອກຈຳໜ່າຍຫຼັກຊັບ ໃນກໍລະນີ ບໍລິສັດອອກຈຳໜ່າຍຫຼັກຊັບ ບໍ່ສາມາດແກ້ໄຂຂໍ້ຄົງຄ້າງ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 1 ຂອງມາດຕານີ້.

ຂັ້ນຕອນຂອງການໂຈະ ແລະ ການຍົກເລີກ ການອອກຈຳໜ່າຍຫຼັກຊັບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 2
## ການເຄື່ອນໄຫວ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

### ມາດຕາ 20 ການຄຸ້ມຄອງບໍລິຫານ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງປະຕິບັດຫຼັກການຄຸ້ມຄອງບໍລິຫານທີ່ດີ ຕາມການກຳນົດຂອງ ຄຄຊ ລວມທັງລະບອບການລາຍງານ ແລະ ການເປີດເຜີຍຂໍ້ມູນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 123 ແລະ 124 ຂອງກົດໝາຍສະບັບນີ້.

### ມາດຕາ 21 ການບັນຊີ ແລະ ກວດສອບ

ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງປະຕິບັດຫຼັກການພື້ນຖານການບັນຊີ, ມາດຕະຖານການບັນຊີ, ມີເອກະສານຢັ້ງຢືນ, ປື້ມຄູ່ມື, ປື້ມບັນຊີ, ປື້ມຕິດຕາມ, ເກັບຮັກສາເອກະສານການບັນຊີ ແລະ ສ້າງເອກະສານລາຍງານການເງິນ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ. ເອກະສານລາຍງານການເງິນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຕ້ອງໄດ້ຮັບການກວດສອບຈາກບໍລິສັດກວດສອບ.

### ມາດຕາ 22 ການຄອບຄອງກິດຈະການ

ການຄອບຄອງກິດຈະການ ແມ່ນ ການເຂົ້າໄປ ຊື້ ຫຼື ຮັບໂອນຮຸ້ນ ຂອງບໍລິສັດຈົດທະບຽນໃດໜຶ່ງ ຊຶ່ງເຮັດໃຫ້ຜູ້ຊື້ ຫຼື ຜູ້ຮັບໂອນ ກາຍເປັນຜູ້ຖືຮຸ້ນ ທີ່ມີອຳນາດຄວບຄຸມບໍລິສັດຈົດທະບຽນ.

ທຸກການຊື້ ຫຼື ການໂອນຮຸ້ນ ທີ່ມີລັກສະນະຄອບຄອງກິດຈະການ ຕ້ອງໄດ້ລາຍງານໃຫ້ ຄຄຊ. ຖ້າການຊື້ ຫຼື ການໂອນຮຸ້ນນັ້ນ ເຮັດໃຫ້ອັດຕາສ່ວນການຄອບຄອງກິດຈະການ ເຖິງເພດານ ຕາມການກຳນົດຂອງ ຄຄຊ ຜູ້ທີ່ຈະຊື້ ຫຼື ຮັບໂອນຮຸ້ນນັ້ນ ຕ້ອງເປີດການສະເໜີຊື້ຮຸ້ນທັງໝົດ ຈາກບັນດາຜູ້ຖືຮຸ້ນອື່ນ ຫຼື ຂາຍຮຸ້ນ ສ່ວນທີ່ເກີນເພດານອັດຕາສ່ວນການຄອບຄອງກິດຈະການ.

ອັດຕາສ່ວນການຄອບຄອງກິດຈະການ, ການລາຍງານ, ການເປີດເຜີຍຂໍ້ມູນ ແລະ ຂັ້ນຕອນເປີດການສະເໜີຊື້ຮຸ້ນທັງໝົດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 23 ລາຍການທີ່ກ່ຽວພັນ

ລາຍການທີ່ກ່ຽວພັນ ແມ່ນ ການເຄື່ອນໄຫວທຸລະກິດໃດໜຶ່ງ ຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ ກັບບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນ.

ປະເພດ, ເງື່ອນໄຂ, ຂັ້ນຕອນ, ການລາຍງານ ແລະ ການເປີດເຜີຍຂໍ້ມູນກ່ຽວກັບລາຍການທີ່ກ່ຽວພັນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 24 ການໄດ້ມາ ແລະ ການຈຳໜ່າຍ ຊັບສິນ**

ການໄດ້ມາ ແລະ ການຈຳໜ່າຍ ຊັບສິນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ແມ່ນ ການເຄື່ອນໄຫວທຸລະກຳໃດໜຶ່ງ ທີ່ມີຂະໜາດໃຫຍ່ ຂອງບໍລິສັດ ກັບບຸກຄົນ ຫຼື ນິຕິບຸກຄົນອື່ນ ທີ່ອາດສົ່ງຜົນກະທົບຕໍ່ຖານະການເງິນ, ຜົນການດຳເນີນງານຂອງບໍລິສັດ, ສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນ.

ປະເພດ, ເງື່ອນໄຂ, ຂັ້ນຕອນ, ການລາຍງານ ແລະ ການເປີດເຜີຍຂໍ້ມູນ ກ່ຽວກັບການໄດ້ມາ ແລະ ການຈຳໜ່າຍ ຊັບສິນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 25 ໃບຮຸ້ນ**

ໃບຮຸ້ນຂອງບໍລິສັດຈົດທະບຽນ ເປັນໃບຮຸ້ນລວມ ທີ່ບໍ່ບົ່ງຊື່ຜູ້ຖືຮຸ້ນ ຊຶ່ງບໍລິສັດຈົດທະບຽນຕ້ອງນຳໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ. ສູນຮັບຝາກຫຼັກຊັບ ເປັນຜູ້ສ້າງ ແລະ ຄຸ້ມຄອງ ຖານຂໍ້ມູນ ກ່ຽວກັບບັນຊີຜູ້ຖືຮຸ້ນ ແລະ ຜູ້ມີລາຍຊື່ໃນບັນຊີດັ່ງກ່າວ ເປັນຜູ້ຖືຮຸ້ນທີ່ຖືກຕ້ອງຕາມກົດໝາຍ.

## ພາກທີ III
## ກອງທຶນຮ່ວມ
### ໝວດທີ 1
### ການສ້າງຕັ້ງກອງທຶນຮ່ວມ

**ມາດຕາ 26 ກອງທຶນຮ່ວມ**

ກອງທຶນຮ່ວມ ແມ່ນ ທຶນ ທີ່ໄດ້ມາດ້ວຍການລະດົມທຶນ ຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳໄປລົງທຶນໃສ່ຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງກົດໝາຍສະບັບນີ້. ຊັບສິນຂອງກອງທຶນຮ່ວມໃດໜຶ່ງ ເປັນຊັບສິນຂອງຜູ້ຖືໜ່ວຍລົງທຶນ ຂອງກອງທຶນຮ່ວມດັ່ງກ່າວ.

**ມາດຕາ 27 ປະເພດກອງທຶນຮ່ວມ**

**ກອງທຶນຮ່ວມ ມີ ສອງ ປະເພດ ດັ່ງນີ້:**

1. ກອງທຶນຮ່ວມປິດ;
2. ກອງທຶນຮ່ວມເປີດ.

ກອງທຶນຮ່ວມປິດ ແມ່ນ ກອງທຶນ ທີ່ມີຈຳນວນ ແລະ ມູນຄ່າກຳນົດຂອງໜ່ວຍລົງທຶນຄົງທີ່, ມີການລະດົມທຶນຈາກມວນຊົນຄັ້ງດຽວ ໃນເວລາສ້າງຕັ້ງ ແລະ ມີອາຍຸທີ່ແນ່ນອນ.

ກອງທຶນຮ່ວມເປີດ ແມ່ນ ກອງທຶນ ທີ່ມີຈຳນວນ ແລະ ມູນຄ່າກຳນົດຂອງໜ່ວຍລົງທຶນບໍ່ຄົງທີ່ ຊຶ່ງອາດເພີ່ມ ຫຼື ຫຼຸດໄດ້ ແລະ ມີອາຍຸບໍ່ແນ່ນອນ.

ມາດຕາ 28 **ຫຼັກການ ການເຄື່ອນໄຫວຂອງກອງທຶນຮ່ວມ**

**ກອງທຶນຮ່ວມ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:**

1. ຜູ້ຖືໜ່ວຍລົງທຶນ ຊື້-ຂາຍໜ່ວຍລົງທຶນ ດ້ວຍຄວາມສະໝັກໃຈ;
2. ຊັບສິນຂອງກອງທຶນຮ່ວມ ຕ້ອງເກັບຮັກສາ ແລະ ຄຸ້ມຄອງ ໂດຍທະນາຄານດູແລຊັບສິນ;
3. ບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ ຕ້ອງແຍກຊັບສິນຂອງຕົນ ອອກຈາກຊັບສິນຂອງກອງທຶນຮ່ວມ ແລະ ບໍ່ຖືວ່າເປັນຊັບສິນຂອງບໍລິສັດບໍລິຫານຊັບສິນ ຫຼື ທະນາຄານດູແລຊັບສິນ;
4. ຊັບສິນຂອງແຕ່ລະກອງທຶນຮ່ວມ ໃຫ້ແຍກອອກຈາກກັນ;
5. ລາຍຮັບ ແລະຊັບສິນອື່ນ ທີ່ໄດ້ຈາກການບໍລິຫານກອງທຶນຮ່ວມ ໂດຍບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ ຕ້ອງເປັນຊັບສິນຂອງກອງທຶນຮ່ວມ.

ມາດຕາ 29 **ການລົງທຶນຂອງກອງທຶນຮ່ວມ**

**ກອງທຶນຮ່ວມ ສາມາດລົງທຶນໃນຫຼັກຊັບ ຫຼື ຊັບສິນ ດັ່ງນີ້:**

1. ລົງທຶນໃສ່ຜະລິດຕະພັນຕະຫຼາດເງິນ ເຊັ່ນ: ເງິນຝາກ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ;
2. ຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ;
3. ຮຸ້ນກູ້;
4. ພັນທະບັດລັດຖະບານ;
5. ຫຼັກຊັບ ຫຼື ຊັບສິນອື່ນ ຕາມການກຳນົດຂອງ ຄຄຊ.

ມາດຕາ 30 **ການສ້າງຕັ້ງກອງທຶນຮ່ວມ**

ກອງທຶນຮ່ວມ ອາດສ້າງຕັ້ງຂຶ້ນ ໃນຮູບແບບ ນິຕິບຸກຄົນ ຫຼື ຕາມສັນຍາ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ຄຄຊ.

ກອງທຶນຮ່ວມໃນຮູບແບບນິຕິບຸກຄົນ ໃຫ້ສ້າງກົດລະບຽບຂຶ້ນ. ສຳລັບກອງທຶນຮ່ວມຕາມສັນຍາ ໃຫ້ສ້າງສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ລະຫວ່າງບໍລິສັດບໍລິຫານຊັບສິນ, ທະນາຄານດູແລຊັບສິນ ແລະ ຜູ້ລົງທຶນ. ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ໃຫ້ຖືເປັນກົດລະບຽບ.

**ມາດຕາ 31 ເງື່ອນໄຂການສ້າງຕັ້ງກອງທຶນຮ່ວມ**

**ການສ້າງຕັ້ງກອງທຶນຮ່ວມ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:**

1. ເປັນບໍລິສັດບໍລິຫານຊັບສິນ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

2. ມີຜູ້ບໍລິຫານກອງທຶນຮ່ວມ ທີ່ມີໃບຢັ້ງຢືນວິຊາຊີບປະເພດບໍລິຫານກອງທຶນຮ່ວມໃນຈຳນວນທີ່ເໝາະສົມ;

3. ມີແຜນການລະດົມທຶນ ແລະ ແຜນການລົງທຶນ ຂອງກອງທຶນຮ່ວມ.

**ມາດຕາ 32 ເອກະສານປະກອບການຂໍສ້າງຕັ້ງກອງທຶນຮ່ວມ**

ບໍລິສັດບໍລິຫານຊັບສິນ ທີ່ມີຈຸດປະສົງຂໍສ້າງຕັ້ງກອງທຶນຮ່ວມ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ ຄຄຊ.

**ເອກະສານປະກອບການຂໍສ້າງຕັ້ງກອງທຶນຮ່ວມ ມີ ດັ່ງນີ້:**

1. ຄຳຮ້ອງ ຕາມແບບພິມຂອງ ຄຄຊ;

2. ຊີວະປະຫວັດຫຍໍ້ຂອງ ຜູ້ບໍລິຫານກອງທຶນຮ່ວມ ຊຶ່ງໄດ້ຮັບມອບໝາຍຈາກ ບໍລິສັດບໍລິຫານຊັບສິນ;

3. ສຳເນົາ ໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ ຂອງບໍລິສັດບໍລິຫານຊັບສິນ;

4. ໜັງສືຊວນຊື້ສຳລັບການຂາຍໜ່ວຍລົງທຶນ;

5. ກົດລະບຽບຂອງກອງທຶນຮ່ວມ ແລະ ສັນຍາຄຸ້ມຄອງດູແລຊັບສິນ ລະຫວ່າງບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ ໃນກໍລະນີກອງທຶນຮ່ວມ ຫາກສ້າງຕັ້ງຕາມຮູບແບບນິຕິບຸກຄົນ;

6. ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ລະຫວ່າງບໍລິສັດບໍລິຫານຊັບສິນ, ທະນາຄານດູແລຊັບສິນ ແລະ ຜູ້ລົງທຶນ ໃນກໍລະນີກອງທຶນຮ່ວມ ຫາກສ້າງຕັ້ງຕາມແບບສັນຍາ;

7. ເອກະສານລາຍງານການເງິນ;

8. ເອກະສານອື່ນ ຕາມການກຳນົດຂອງ ຄຄຊ.

ໃນກໍລະນີ ກອງທຶນຮ່ວມໃດໜຶ່ງ ທີ່ໄດ້ເຄື່ອນໄຫວມາກ່ອນແລ້ວ ຫາກມີຈຸດປະສົງຂາຍໜ່ວຍລົງທຶນເພີ່ມໃຫ້ແກ່ມວນຊົນ ຍັງຕ້ອງປະກອບເອກະສານເພີ່ມເຕີມ ດັ່ງນີ້:

1. ມະຕິກອງປະຊຸມຜູ້ຖືໜ່ວຍລົງທຶນ ກ່ຽວກັບການຮັບຮອງແຜນການລະດົມທຶນເພີ່ມ ແລະ ແຜນການລົງທຶນ;

2. ເອກະສານລາຍງານການເງິນຂອງກອງທຶນຮ່ວມ ທີ່ໄດ້ຜ່ານການກວດສອບຈາກ ບໍລິສັດກວດສອບ ສາມປີ ຄືນຫຼັງ ຫຼື ນັບແຕ່ວັນເລີ່ມຕົ້ນເຄື່ອນໄຫວຂອງກອງທຶນຮ່ວມ ເປັນຕົ້ນມາ;

3. ໜັງສືປະເມີນຜົນການປະຕິບັດ ກົດລະບຽບ ຫຼື ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ໃນໄລຍະຜ່ານມາ ຈາກທະນາຄານດູແລຊັບສິນ.

**ມາດຕາ 33 ກົດລະບຽບ ຫຼື ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ**

**ກົດລະບຽບ ຫຼື ສັນຍາຄຸ້ມຄອງບໍລິຫານ ກອງທຶນຮ່ວມ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:**

1. ຊື່ຂອງກອງທຶນຮ່ວມ;
2. ຊື່, ສະຖານທີ່ຕັ້ງຂອງ ສຳນັກງານໃຫຍ່ ແລະ ສາຂາທັງໝົດ ຂອງບໍລິສັດບໍລິຫານຊັບສິນ;
3. ຈຸດປະສົງໃນການລະດົມທຶນ ແລະ ນະໂຍບາຍການລົງທຶນ;
4. ປະເພດ ແລະ ອາຍຸ ຂອງກອງທຶນຮ່ວມ;
5. ຈຳນວນ ແລະ ມູນຄ່າກຳນົດຂອງໜ່ວຍລົງທຶນ;
6. ທຶນຈົດທະບຽນຂອງກອງທຶນຮ່ວມ;
7. ວິທີການຄຸ້ມຄອງບໍລິຫານກອງທຶນຮ່ວມ;
8. ວິທີຄິດໄລ່ມູນຄ່າຊັບສິນສຸດທິ ຂອງກອງທຶນຮ່ວມ;
9. ວິທີການແບ່ງປັນຜົນກຳໄລ ຫຼື ເງິນປັນຜົນ ຂອງກອງທຶນຮ່ວມ;
10. ຄ່າທຳນຽມ ແລະ ຄ່າບໍລິການ ທີ່ຕ້ອງຈ່າຍໃຫ້ບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ;
11. ຂັ້ນຕອນ, ເວລາ ແລະສະຖານທີ່ ສຳລັບການຈອງ, ການຊື້-ຂາຍ ແລະການໄຖ່ຖອນໜ່ວຍລົງທຶນ;
12. ສິດ ແລະ ໜ້າທີ່ ຂອງຜູ້ຖືໜ່ວຍລົງທຶນ, ບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ;
13. ກອງປະຊຸມຜູ້ຖືໜ່ວຍລົງທຶນ ແລະ ວິທີລົງຄະແນນສຽງ;
14. ວິທີແກ້ໄຂຂໍ້ຂັດແຍ່ງ;
15. ການຍຸບເລີກ ແລະ ການ ສະສາງ-ຊຳລະ;
16. ເນື້ອໃນອື່ນ ຕາມການກຳນົດຂອງ ຄຄຊ.

ກົດລະບຽບ ຫຼື ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ໄດ້ຖືກຮັບຮອງຈາກກອງປະຊຸມ ຜູ້ຖືໜ່ວຍລົງທຶນ ແລະ ມີຜົນສັກສິດ ພາຍຫຼັງໄດ້ຮັບການເຫັນດີ ຈາກ ຄຄຊ.

**ມາດຕາ 34 ໜັງສືຊວນຊື້ ສຳລັບການຂາຍໜ່ວຍລົງທຶນ**

ໜັງສືຊວນຊື້ ສຳລັບການຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່, ປະເພດ ແລະ ອາຍຸ ຂອງກອງທຶນຮ່ວມ;
2. ຂໍ້ມູນ ກ່ຽວກັບຜູ້ບໍລິຫານກອງທຶນຮ່ວມ, ບໍລິສັດບໍລິຫານຊັບສິນ, ທະນາຄານດູແລຊັບສິນ ແລະ ບໍລິສັດທີ່ປຶກສາດ້ານກົດໝາຍ;
3. ຈຳນວນ ແລະ ມູນຄ່າກຳນົດ ຂອງໜ່ວຍລົງທຶນ;
4. ຈຸດປະສົງ, ຍຸດທະສາດ, ວິທີ, ຂັ້ນຕອນ ແລະ ຂອບເຂດຂອງການລົງທຶນ ແລະ ປັດໄຈຄວາມສ່ຽງຂອງກອງທຶນຮ່ວມ;
5. ຂໍ້ມູນ ກ່ຽວກັບຖານະການເງິນຂອງກອງທຶນຮ່ວມ ທີ່ເຄື່ອນໄຫວມາກ່ອນແລ້ວ ສາມປີຄືນຫຼັງ ຫຼື ນັບແຕ່ວັນເລີ່ມຕົ້ນເຄື່ອນໄຫວຂອງກອງທຶນຮ່ວມເປັນຕົ້ນມາ ທີ່ຜ່ານການກວດສອບຈາກບໍລິສັດກວດສອບ;
6. ຜົນຕອບແທນ ແລະ ແຜນໄຖ່ຖອນຄືນ;
7. ແຜນການອອກ ແລະ ຂາຍໜ່ວຍລົງທຶນ ແລະ ຂໍ້ມູນແນະນຳການລົງທຶນໃນກອງທຶນຮ່ວມ;
8. ຄ່າທຳນຽມ ແລະ ຄ່າບໍລິການ ໃນການຄຸ້ມຄອງບໍລິຫານກອງທຶນຮ່ວມ;
9. ຂໍ້ມູນອື່ນ ຕາມການກຳນົດຂອງ ຄຄຊ.

**ມາດຕາ 35 ການພິຈາລະນາເອກະສານປະກອບການຂໍສ້າງຕັ້ງກອງທຶນຮ່ວມ**

ເມື່ອໄດ້ຮັບເອກະສານປະກອບການຂໍສ້າງຕັ້ງກອງທຶນຮ່ວມ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ຄຄຊ ຕ້ອງພິຈາລະນາການຂໍສ້າງຕັ້ງກອງທຶນຮ່ວມ ພາຍໃນກຳນົດ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ເປັນຕົ້ນໄປ. ໃນກໍລະນີ ປະຕິເສດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຂໍສ້າງຕັ້ງກອງທຶນຮ່ວມ ຫາກເຫັນວ່າມີຄວາມຈຳເປັນ ຄຄຊ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຈາກບໍລິສັດບໍລິຫານຊັບສິນ, ທະນາຄານດູແລຊັບສິນ ແລະ ບໍລິສັດກວດສອບ.

**ມາດຕາ 36 ຂັ້ນຕອນການຂາຍໜ່ວຍລົງທຶນ**

**ການຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:**

1. ປະກາດການອະນຸຍາດໃຫ້ຂາຍໜ່ວຍລົງທຶນ;
2. ໂຄສະນາຂາຍໜ່ວຍລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້;

3. ຈອງຊື້ໜ່ວຍລົງທຶນ ແລະ ວາງເງິນມັດຈຳ;

4. ແບ່ງປັນໜ່ວຍລົງທຶນ;

5. ຊຳລະເງິນ ແລະ ສົ່ງເງິນມັດຈຳຄືນ ໃນກໍລະນີຜູ້ຈອງຊື້ໜ່ວຍລົງທຶນບໍ່ໄດ້ຮັບການແບ່ງປັນໜ່ວຍລົງທຶນ ຕາມຈຳນວນທີ່ຈອງຊື້;

6. ອອກໃບຢັ້ງຢືນການຖືຄອງໜ່ວຍລົງທຶນ.

**ມາດຕາ 37 ການລາຍງານຜົນການຂາຍໜ່ວຍລົງທຶນ**

ບໍລິສັດບໍລິຫານຊັບສິນ ຕ້ອງລາຍງານຜົນການຂາຍໜ່ວຍລົງທຶນ ໃຫ້ ຄຄຊ ຊາບ ເປັນລາຍລັກອັກສອນ ພາຍໃນກຳນົດ ຫ້າວັນ ລັດຖະການ ນັບແຕ່ວັນສິ້ນສຸດການຂາຍໜ່ວຍລົງທຶນເປັນຕົ້ນໄປ.

**ມາດຕາ 38 ການຂຶ້ນທະບຽນເງິນທີ່ໄດ້ຈາກການຂາຍໜ່ວຍລົງທຶນ**

ບໍລິສັດບໍລິຫານຊັບສິນ ຕ້ອງນຳເງິນທີ່ໄດ້ຈາກການຂາຍໜ່ວຍລົງທຶນ ໄປຂຶ້ນທະບຽນເປັນຊັບສິນຂອງກອງທຶນຮ່ວມນຳ ຄຄຊ ເພື່ອອອກແຈ້ງການອະນຸຍາດໃຫ້ບໍລິຫານກອງທຶນດັ່ງກ່າວ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງຜູ້ຖືໜ່ວຍລົງທຶນ**

**ຜູ້ຖືໜ່ວຍລົງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຊື້-ຂາຍ, ໂອນ ຫຼື ໄຖ່ຖອນ ໜ່ວຍລົງທຶນ;

2. ຊຳລະເງິນຊື້ໜ່ວຍລົງທຶນໃຫ້ຄົບຖ້ວນ ຕາມກຳນົດເວລາ;

3. ຮັບຜົນຕອບແທນຈາກການລົງທຶນຂອງກອງທຶນຮ່ວມ ຕາມອັດຕາສ່ວນໜ່ວຍລົງທຶນທີ່ຕົນຖື;

4. ຮັບສ່ວນແບ່ງຊັບສິນຂອງກອງທຶນຮ່ວມ ໃນກໍລະນີ ກອງທຶນຮ່ວມ ຖືກຍຸບເລີກ;

5. ຕິດຕາມຂໍ້ມູນຂ່າວສານ ກ່ຽວກັບຜົນການດຳເນີນງານຂອງກອງທຶນຮ່ວມ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບ ຫຼື ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ.

**ມາດຕາ 40 ກອງປະຊຸມຜູ້ຖືໜ່ວຍລົງທຶນ**

ກອງປະຊຸມຜູ້ຖືໜ່ວຍລົງທຶນ ແມ່ນ ການຈັດຕັ້ງສູງສຸດ ຂອງກອງທຶນຮ່ວມ.

ກອງປະຊຸມຜູ້ຖືໜ່ວຍລົງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງ, ດັດແກ້ ກົດລະບຽບ ແລະ ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ;

2. ຮັບຮອງ ແລະ ດັດແກ້ນະໂຍບາຍກ່ຽວກັບການລົງທຶນ;

3. ກຳນົດ, ເພີ່ມ ຫຼື ຫຼຸດ ຄ່າຕອບແທນ ໃຫ້ແກ່ບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ;

4. ຄວບ ຫຼື ຍຸບເລີກ ກອງທຶນຮ່ວມ;

5. ປະຕິບັດສິດ ແລະ ໜ້າທີ່ ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບ ແລະ ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ.

ຂັ້ນຕອນ ແລະ ວິທີການຈັດຕັ້ງກອງປະຊຸມຜູ້ຖືໜ່ວຍລົງທຶນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 2
## ການຈົດທະບຽນ, ການຊື້-ຂາຍ ແລະ ການໄຖ່ຖອນ ໜ່ວຍລົງທຶນ

ມາດຕາ 41 **ການຈົດທະບຽນໜ່ວຍລົງທຶນ**

ກອງທຶນຮ່ວມປິດ ຕ້ອງເອົາໜ່ວຍລົງທຶນທັງໝົດ ໄປຈົດທະບຽນໃນຕະຫຼາດຫຼັກຊັບ ຕາມເງື່ອນໄຂ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງຕະຫຼາດຫຼັກຊັບ. ສຳລັບກອງທຶນຮ່ວມເປີດນັ້ນ ຈະເອົາໜ່ວຍລົງທຶນໄປຈົດທະບຽນ ຫຼື ບໍ່ຈົດທະບຽນໃນຕະຫຼາດຫຼັກຊັບ ກໍໄດ້.

ມາດຕາ 42 **ການຊື້-ຂາຍໜ່ວຍລົງທຶນ**

ໜ່ວຍລົງທຶນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງຊື້-ຂາຍ ແລະ ໂອນຜ່ານຕະຫຼາດຫຼັກຊັບ ຕາມລະບຽບການຂອງຕະຫຼາດຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 43 **ການໄຖ່ຖອນໜ່ວຍລົງທຶນ**

ກອງທຶນຮ່ວມປິດ ຮັບໄຖ່ຖອນໜ່ວຍລົງທຶນຈາກຜູ້ຖືໜ່ວຍລົງທຶນ ເມື່ອຄົບກຳນົດອາຍຸ ຂອງກອງທຶນຮ່ວມເທົ່ານັ້ນ.

ກອງທຶນຮ່ວມເປີດ ຮັບໄຖ່ຖອນໜ່ວຍລົງທຶນຈາກຜູ້ຖືໜ່ວຍລົງທຶນ ກ່ອນຄົບອາຍຸໄຖ່ຖອນຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງກອງທຶນຮ່ວມເປີດ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ມາດຕາ 44 **ການກຳນົດມູນຄ່າຊັບສິນສຸດທິຂອງກອງທຶນຮ່ວມ**

ທະນາຄານດູແລຊັບສິນ ເປັນຜູ້ກຳນົດມູນຄ່າຊັບສິນສຸດທິ ຂອງກອງທຶນຮ່ວມ.

ຫຼັກການ ແລະ ວິທີການ ກ່ຽວກັບການກຳນົດມູນຄ່າຊັບສິນສຸດທິຂອງກອງທຶນຮ່ວມ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 3
## ການຄວບ, ການຍຸບເລີກ ແລະ ການສະສາງ-ຊຳລະ ກອງທຶນຮ່ວມ

**ມາດຕາ 45 ການຄວບກອງທຶນຮ່ວມ**

ກອງທຶນຮ່ວມໃດໜຶ່ງ ທີ່ມີຈຸດປະສົງຄວບກັບກອງທຶນຮ່ວມອື່ນ ຕ້ອງໄດ້ຮັບອະນຸຍາດ ຈາກ ຄຄຊ ແລະ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 46 ການຍຸບເລີກກອງທຶນຮ່ວມ**

ກອງທຶນຮ່ວມໃດໜຶ່ງ ອາດຈະຖືກຍຸບເລີກດ້ວຍຄວາມສະໝັກໃຈ ຫຼື ຕາມກົດໝາຍ.

**ມາດຕາ 47 ການຍຸບເລີກດ້ວຍຄວາມສະໝັກໃຈ**

ການຍຸບເລີກດ້ວຍຄວາມສະໝັກໃຈ ແມ່ນ ການຍຸບເລີກກອງທຶນຮ່ວມ ບົນພື້ນຖານການຕົກລົງຂອງກອງປະຊຸມຜູ້ຖືໜ່ວຍລົງທຶນ ຊຶ່ງການຍຸບເລີກນັ້ນ ຕ້ອງມີຖານະການເງິນພຽງພໍ ເພື່ອສະສາງ-ຊຳລະ.

ກອງທຶນຮ່ວມ ທີ່ມີຈຸດປະສົງຍຸບເລີກ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບຕໍ່ ຄຄຊ ເພື່ອພິຈາລະນາ.

**ເອກະສານປະກອບການຂໍຍຸບເລີກ ມີ ດັ່ງນີ້:**

1. ຄຳຮ້ອງ ຕາມແບບພິມຂອງ ຄຄຊ;
2. ມະຕິກອງປະຊຸມຜູ້ຖືໜ່ວຍລົງທຶນ;
3. ເອກະສານລາຍງານການເງິນຂອງກອງທຶນຮ່ວມ ທີ່ໄດ້ຮັບການກວດສອບ;
4. ເອກະສານອື່ນ ຕາມການກຳນົດຂອງ ຄຄຊ.

ຄຄຊ ຈະພິຈາລະນາການຮ້ອງຂໍຍຸບເລີກ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ກອງທຶນຮ່ວມ ທີ່ໄດ້ຮັບອະນຸຍາດໃຫ້ຍຸບເລີກນັ້ນ ຕ້ອງປະກາດໃຫ້ມວນຊົນຊາບຢ່າງກວ້າງຂວາງ ໂດຍຜ່ານພາຫະນະສື່ມວນຊົນ ເປັນເວລາ ສິບຫ້າວັນຢ່າງຕໍ່ເນື່ອງ ນັບແຕ່ວັນໄດ້ຮັບອະນຸຍາດໃຫ້ຍຸບເລີກ ເປັນຕົ້ນໄປ.

**ມາດຕາ 48 ການຍຸບເລີກຕາມກົດໝາຍ**

**ການຍຸບເລີກຕາມກົດໝາຍ ແມ່ນ ການຍຸບເລີກກອງທຶນຮ່ວມ ຕາມກໍລະນີໃດໜຶ່ງ ດັ່ງນີ້:**

1. ຄົບອາຍຸຂອງກອງທຶນຮ່ວມ;
2. ໄດ້ຮັບການອະນຸຍາດສ້າງຕັ້ງ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;

3. ລະເມີດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ສົ່ງຜົນສະທ້ອນຢ່າງຮ້າຍແຮງ.

ຄຄຊ ຕ້ອງປະກາດ ໃຫ້ມວນຊົນຊາບ ກ່ຽວກັບການຍຸບເລີກກອງທຶນຮ່ວມ.

**ມາດຕາ 49 ການສະສາງ-ຊຳລະກອງທຶນຮ່ວມ**

ກອງທຶນຮ່ວມ ທີ່ຖືກຍຸບເລີກຕາມ ມາດຕາ 47 ແລະ 48 ຂອງກົດໝາຍສະບັບນີ້ ຕ້ອງດຳເນີນການສະສາງ-ຊຳລະ ຕາມລະບຽບການຂອງ ຄຄຊ, ກົດໝາຍວ່າດ້ວຍການລົ້ມລະລາຍ ຂອງວິສາຫະກິດ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ພາກທີ IV
## ສະຖາບັນສື່ກາງດ້ານຫຼັກຊັບ
### ໝວດທີ 1
### ບໍລິສັດຫຼັກຊັບ

**ມາດຕາ 50 ການສ້າງຕັ້ງບໍລິສັດຫຼັກຊັບ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບຕໍ່ ຄຄຊ. ບໍລິສັດຫຼັກຊັບ ສາມາດສ້າງຕັ້ງຂຶ້ນໄດ້ໃນຮູບແບບບໍລິສັດ ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ.

**ມາດຕາ 51 ເງື່ອນໄຂການສ້າງຕັ້ງບໍລິສັດຫຼັກຊັບ**

**ການສ້າງຕັ້ງບໍລິສັດຫຼັກຊັບ ມີເງື່ອນໄຂ ດັ່ງນີ້:**

1. ມີທຶນຈົດທະບຽນພຽງພໍ ຕາມການກຳນົດຂອງ ຄຄຊ;
2. ມີແຜນການດຳເນີນທຸລະກິດຢ່າງໜ້ອຍ ສາມປີທຳອິດ ພາຍຫຼັງການສ້າງຕັ້ງ;
3. ມີສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການທາງດ້ານທຸລະກິດຫຼັກຊັບ, ການເງິນ-ການທະນາຄານ ຫຼື ກົດໝາຍ ຢ່າງໜ້ອຍຫ້າປີ;
4. ມີຖານະການເງິນດີ ແລະ ໄດ້ຮັບການກວດສອບຈາກ ບໍລິສັດກວດສອບ ໃນກໍລະນີຜູ້ຂໍສ້າງຕັ້ງ ເປັນນິຕິບຸກຄົນ;
5. ມີຖານະການເງິນດີ, ມີຄວາມສາມາດທາງດ້ານການປະພຶດ, ບໍ່ຖືກດຳເນີນຄະດີ ຫຼື ຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ໃນສະຖານສໍ້ໂກງຊັບ, ຍັກຍອກຊັບ ແລະ ມີການກະທຳຜິດ ກ່ຽວກັບທຸລະກິດດ້ານຫຼັກຊັບ ໃນກໍລະນີຜູ້ຂໍສ້າງຕັ້ງເປັນບຸກຄົນ;

6. ມີເງື່ອນໄຂອື່ນ ຕາມການກຳນົດຂອງ ຄຄຊ.

**ມາດຕາ 52 ເອກະສານປະກອບການຂໍສ້າງຕັ້ງບໍລິສັດຫຼັກຊັບ**

**ເອກະສານປະກອບການຂໍສ້າງຕັ້ງບໍລິສັດຫຼັກຊັບ ມີ ດັ່ງນີ້:**

1. ຄຳຮ້ອງ ຕາມແບບພິມຂອງ ຄຄຊ;
2. ສັນຍາຮ່ວມທຶນ;
3. ກົດລະບຽບຂອງບໍລິສັດ;
4. ສຳເນົາໃບທະບຽນວິສາຫະກິດ ແລະ ກົດລະບຽບຂອງຜູ້ຂໍສ້າງຕັ້ງທີ່ມີຖານະເປັນນິຕິບຸກຄົນ;
5. ໃບຢັ້ງຢືນວຸດທິການສຶກສາ, ໃບແຈ້ງໂທດ, ປະຫວັດໃນການດຳເນີນທຸລະກິດ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ;
6. ບັນຊີລາຍຊື່ຜູ້ຖືຮຸ້ນ ແລະ ອັດຕາສ່ວນການຖືຮຸ້ນ, ປະຫວັດຫຍໍ້ຂອງຜູ້ຖືຮຸ້ນ ແລະ ສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ສຳລັບຜູ້ຖືຮຸ້ນທີ່ເປັນບຸກຄົນ;
7. ເອກະສານລາຍງານການເງິນ ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ ທີ່ໄດ້ຜ່ານການກວດສອບຈາກ ບໍລິສັດກວດສອບ;
8. ແຜນການດຳເນີນທຸລະກິດຢ່າງໜ້ອຍ ສາມປີທຳອິດ ພາຍຫຼັງການສ້າງຕັ້ງ;
9. ເອກະສານອື່ນ ຕາມການກຳນົດຂອງ ຄຄຊ.

**ມາດຕາ 53 ການພິຈາລະນາການຂໍສ້າງຕັ້ງບໍລິສັດຫຼັກຊັບ**

ເມື່ອໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບການຂໍສ້າງຕັ້ງບໍລິສັດຫຼັກຊັບ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ຄຄຊ ຕ້ອງພິຈາລະນາການຂໍສ້າງຕັ້ງດັ່ງກ່າວ, ຖ້າຫາກມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້ ກໍຈະອອກໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບຊົ່ວຄາວໃຫ້ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ຄຄຊ ຈະອອກໃບອະນຸຍາດສ້າງຕັ້ງຖາວອນ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນຜູ້ຂໍສ້າງຕັ້ງໄດ້ປະຕິບັດເງື່ອນໄຂເພີ່ມເຕີມສຳເລັດ ເປັນຕົ້ນໄປ.

**ເງື່ອນໄຂເພີ່ມເຕີມ ມີ ດັ່ງນີ້:**

1. ໄດ້ຖອກທຶນຄົບຖ້ວນຕາມອັດຕາສ່ວນຂອງຜູ້ຖືຮຸ້ນ;
2. ມີສຳນັກງານ ແລະ ອຸປະກອນຮັບໃຊ້ການດຳເນີນທຸລະກິດຫຼັກຊັບ ທີ່ເໝາະສົມ ແລະ ທັນສະໄໝ;

3. ມີລະບົບການປະຕິບັດວຽກງານໃນແຕ່ລະພະແນກການ, ລະບົບການກວດກາ, ການຄວບຄຸມພາຍໃນ ແລະ ການບໍລິຫານຄວາມສ່ຽງ;

4. ມີນັກວິຊາຊີບທຸລະກິດຫຼັກຊັບ ທີ່ມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ຕາມປະເພດທີ່ໄດ້ຮັບອະນຸຍາດ ແລະ ມີພະນັກງານວິຊາການ ໃນຈຳນວນທີ່ເໝາະສົມ;

5. ມີເງື່ອນໄຂອື່ນ ຕາມການກຳນົດຂອງ ຄຄຊ.

ໃນກໍລະນີ ຜູ້ຂໍສ້າງຕັ້ງ ຫາກບໍ່ປະຕິບັດເງື່ອນໄຂເພີ່ມເຕີມ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 3 ຂອງມາດຕານີ້ ພາຍໃນກຳນົດ ໜຶ່ງຮ້ອຍແປດສິບວັນ, ໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບຊົ່ວຄາວນັ້ນ ກໍຈະຕົກໄປ. ໃນກໍລະນີ ຜູ້ຂໍສ້າງຕັ້ງບໍລິສັດຫຼັກຊັບ ຫາກປະຕິບັດເງື່ອນໄຂດັ່ງກ່າວ ບໍ່ສຳເລັດ ແຕ່ມີເຫດຜົນພຽງພໍ ຄຄຊ ອາດຕໍ່ກຳນົດເວລາ ຂອງໃບອະນຸຍາດສ້າງຕັ້ງຊົ່ວຄາວໄດ້ ແຕ່ບໍ່ໃຫ້ເກີນ ເກົ້າສິບວັນ.

ພາຍຫຼັງທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນແລ້ວ ຜູ້ໄດ້ຮັບອະນຸຍາດ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ແລະ ດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ ແລະ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

**ມາດຕາ 54 ການສ້າງຕັ້ງສາຂາ ແລະ ໜ່ວຍບໍລິການ ຂອງບໍລິສັດຫຼັກຊັບພາຍໃນ**

ບໍລິສັດຫຼັກຊັບພາຍໃນ ສາມາດສ້າງຕັ້ງສາຂາ ຫຼື ໜ່ວຍບໍລິການຂອງຕົນ ຢູ່ພາຍໃນປະເທດ ຫຼື ຕ່າງປະເທດ ຕາມການອະນຸຍາດຂອງ ຄຄຊ.

ຄຄຊ ເປັນຜູ້ກຳນົດ ເງື່ອນໄຂກ່ຽວກັບການສ້າງຕັ້ງ ແລະ ຂອບເຂດການເຄື່ອນໄຫວຂອງ ສາຂາ ຫຼື ໜ່ວຍບໍລິການ ຂອງບໍລິສັດຫຼັກຊັບພາຍໃນ.

**ມາດຕາ 55 ການສ້າງຕັ້ງບໍລິສັດ, ສາຂາ ແລະ ຫ້ອງການຜູ້ຕາງໜ້າ ຂອງບໍລິສັດຫຼັກຊັບຕ່າງປະເທດ**

ບໍລິສັດຫຼັກຊັບຕ່າງປະເທດ ສາມາດສ້າງຕັ້ງ ບໍລິສັດຫຼັກຊັບ ຢູ່ ສປປ ລາວ ໃນຮູບແບບລົງທຶນຝ່າຍດຽວ, ຮ່ວມທຶນກັບສະຖາບັນການເງິນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມກົດໝາຍຂອງ ສປປ ລາວ ຫຼື ສາຂາ ຫຼື ຫ້ອງການຜູ້ຕາງໜ້າຂອງຕົນໂດຍໄດ້ຮັບອະນຸຍາດຈາກ ຄຄຊ.

ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງບໍລິສັດຫຼັກຊັບຕ່າງປະເທດ ໃຫ້ປະຕິບັດຄືກັນກັບການສ້າງຕັ້ງບໍລິສັດຫຼັກຊັບ ໂດຍບຸກຄົນ ແລະ ນິຕິບຸກຄົນ ພາຍໃນປະເທດ.

ຄຄຊ ເປັນຜູ້ກຳນົດ ເງື່ອນໄຂກ່ຽວກັບການສ້າງຕັ້ງ ແລະ ຂອບເຂດການເຄື່ອນໄຫວຂອງ ສາຂາ ຫຼື ຫ້ອງການຜູ້ຕາງໜ້າບໍລິສັດຫຼັກຊັບຕ່າງປະເທດ ຢູ່ ສປປ ລາວ.

**ມາດຕາ 56 ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ**

ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ແມ່ນ ໃບຢັ້ງຢືນການປະກອບອາຊີບ ເປັນນາຍໜ້າຊື້-ຂາຍຫຼັກຊັບ, ເປັນທີ່ປຶກສາດ້ານການເງິນ, ເປັນຜູ້ວິເຄາະຫຼັກຊັບ ຫຼື ເປັນຜູ້ບໍລິຫານກອງທຶນຮ່ວມ.

ຄຄຊ ເປັນຜູ້ອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ຕາມເງື່ອນໄຂ, ວິທີການ ແລະ ຂັ້ນຕອນ ທີ່ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 57 ການຖອກ ແລະ ການນໍາໃຊ້ທຶນຈົດທະບຽນຂອງບໍລິສັດຫຼັກຊັບ**

ຜູ້ໄດ້ຮັບໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບຊົ່ວຄາວ ຕ້ອງຖອກທຶນຈົດທະບຽນໃຫ້ຄົບຖ້ວນເຂົ້າບັນຊີເງິນຝາກຂອງຕົນ ທີ່ເປີດໄວ້ກັບທະນາຄານ ຕາມການກໍານົດຂອງ ຄຄຊ.

ການນໍາໃຊ້ທຶນຈົດທະບຽນ ເພື່ອກະກຽມຄວາມພ້ອມໃນການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດຫຼັກຊັບ ຕ້ອງມີແຜນການນໍາໃຊ້ທຶນຢ່າງລະອຽດ ແລະ ໄດ້ຮັບອະນຸຍາດຈາກ ຄຄຊ.

**ມາດຕາ 58 ການປະກາດໃຫ້ມວນຊົນຊາບ**

ບໍລິສັດຫຼັກຊັບ ທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວ ຕ້ອງປະກາດໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ພາຍໃນກໍານົດ ຫ້າວັນ ນັບແຕ່ວັນໄດ້ຮັບໃບທະບຽນວິສາຫະກິດ ເປັນຕົ້ນໄປ.

**ມາດຕາ 59 ໂຄງປະກອບການຈັດຕັ້ງຂອງບໍລິສັດຫຼັກຊັບ**

**ບໍລິສັດຫຼັກຊັບ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:**

1. ກອງປະຊຸມຜູ້ຖືຮຸ້ນ;
2. ສະພາບໍລິຫານ;
3. ຄະນະກໍາມະການສະເພາະດ້ານໃດໜຶ່ງຂອງສະພາບໍລິຫານ;
4. ຄະນະອໍານວຍການ;
5. ຄະນະພະແນກ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານວິຊາການຈໍານວນໜຶ່ງ.

ພາລະບົດບາດ, ສິດ, ໜ້າທີ່ ແລະ ລະບອບການເຄື່ອນໄຫວວຽກງານ ຂອງແຕ່ລະການຈັດຕັ້ງ ແມ່ນ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍວິສາຫະກິດ, ລະບຽບການ ຂອງ ຄຄຊ ແລະ ໃຫ້ກໍານົດໄວ້ໃນກົດລະບຽບຂອງບໍລິສັດຫຼັກຊັບ.

**ມາດຕາ 60 ກົດລະບຽບຂອງບໍລິສັດຫຼັກຊັບ**

ກົດລະບຽບຂອງບໍລິສັດຫຼັກຊັບ ຕ້ອງມີເນື້ອໃນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ໄດ້ຮັບການເຫັນດີ ຈາກ ຄຄຊ.

**ມາດຕາ 61 ການເຄື່ອນໄຫວທຸລະກິດຂອງບໍລິສັດຫຼັກຊັບ**

**ບໍລິສັດຫຼັກຊັບ ສາມາດເຄື່ອນໄຫວທຸລະກິດປະເພດໃດໜຶ່ງ ດັ່ງນີ້:**

1. ທີ່ປຶກສາດ້ານການເງິນ;
2. ນາຍໜ້າຊື້-ຂາຍຫຼັກຊັບ;
3. ຜູ້ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ.

**ມາດຕາ 62 ທີ່ປຶກສາດ້ານການເງິນ**

ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດໃຫ້ເປັນທີ່ປຶກສາດ້ານການເງິນ ສາມາດເຄື່ອນໄຫວໃຫ້ຄໍາປຶກສາ ກ່ຽວກັບການປັບປຸງໂຄງສ້າງດ້ານການຈັດຕັ້ງ, ການຄຸ້ມຄອງບໍລິຫານ, ດ້ານການເງິນ, ການເຄື່ອນໄຫວທຸລະກິດ ແລະ ອື່ນໆ ເພື່ອກະກຽມການອອກຈໍາໜ່າຍຫຼັກຊັບ ໃຫ້ແກ່ມວນຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ.

**ມາດຕາ 63 ນາຍໜ້າຊື້-ຂາຍຫຼັກຊັບ**

**ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດໃຫ້ເປັນນາຍໜ້າຊື້-ຂາຍຫຼັກຊັບ ສາມາດເຄື່ອນໄຫວ ດັ່ງນີ້:**

1. ເປັນສື່ກາງ ຫຼື ເປັນຕົວແທນ ເພື່ອດໍາເນີນທຸລະກໍາຊື້-ຂາຍຫຼັກຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍ ຂອງລູກຄ້າ;
2. ຊື້-ຂາຍຫຼັກຊັບໃນນາມບໍລິສັດຫຼັກຊັບ ໂດຍໃຊ້ເງິນ ແລະ ຫຼັກຊັບ ຂອງບໍລິສັດຫຼັກຊັບ;
3. ໃຫ້ຄໍາປຶກສາ ໂດຍກົງແກ່ຜູ້ລົງທຶນ ກ່ຽວກັບການລົງທຶນໃສ່ຫຼັກຊັບ ຫຼື ກຸ່ມຫຼັກຊັບ;
4. ໃຫ້ຄໍາປຶກສາດ້ານການເງິນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້.

**ມາດຕາ 64 ຜູ້ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ**

**ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດໃຫ້ເປັນຜູ້ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ສາມາດເຄື່ອນໄຫວ ດັ່ງນີ້:**

1. ກໍານົດລາຄາ ແລະ ຈໍານວນ ຫຼັກຊັບທີ່ຈະອອກຈໍາໜ່າຍ;
2. ໃຫ້ການຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ດ້ວຍການຊ່ວຍຈໍາໜ່າຍ ຫຼື ຮັບຊື້ຫຼັກຊັບບາງສ່ວນ ຫຼື ທັງໝົດ ຈາກບໍລິສັດອອກຈໍາໜ່າຍຫຼັກຊັບ ໃນສ່ວນທີ່ຈໍາໜ່າຍບໍ່ໝົດ ເພື່ອຮັບປະກັນ ຄວາມສໍາເລັດຂອງການອອກຈໍາໜ່າຍຫຼັກຊັບ;
3. ເຮັດໜ້າທີ່ ເປັນນາຍໜ້າຊື້-ຂາຍຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 63 ຂອງກົດໝາຍສະບັບນີ້.

**ມາດຕາ 65 ການປ່ຽນແປງການເຄື່ອນໄຫວທຸລະກິດຫຼັກຊັບ**

ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວທຸລະກິດຫຼັກຊັບ ປະເພດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຂອງກົດໝາຍສະບັບນີ້ ສາມາດຂໍປ່ຽນແປງການເຄື່ອນໄຫວທຸລະກິດຫຼັກຊັບຂອງຕົນຕໍ່ ຄຄຊ.

**ການຂໍປ່ຽນແປງການເຄື່ອນໄຫວທຸລະກິດຫຼັກຊັບ ຕ້ອງປະກອບເອກະສານ ດັ່ງນີ້:**

1. ຄຳຮ້ອງ ຕາມແບບພິມຂອງ ຄຄຊ;
2. ກົດລະບຽບຂອງບໍລິສັດຫຼັກຊັບ ສະບັບປັບປຸງ ທີ່ໄດ້ຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ;
3. ມະຕິຂອງກອງປະຊຸມຜູ້ຖືຮຸ້ນ;
4. ເອກະສານຢັ້ງຢືນການເພີ່ມທຶນ ໃນກໍລະນີ ຂໍປ່ຽນປະເພດການເຄື່ອນໄຫວທຸລະກິດຂອງ ບໍລິສັດຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 61 ຂອງກົດໝາຍສະບັບນີ້;
5. ເອກະສານອື່ນ ຕາມການກຳນົດຂອງ ຄຄຊ.

ຄຄຊ ຈະພິຈາລະນາການຂໍປ່ຽນແປງປະເພດ ການເຄື່ອນໄຫວທຸລະກິດຫຼັກຊັບ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ. ໃນກໍລະນີ ປະຕິເສດ ກໍໃຫ້ແຈ້ງຕອບ ເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 66 ການເພີ່ມ ຫຼື ຫຼຸດ ທຶນຈົດທະບຽນຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບໃດໜຶ່ງ ທີ່ມີຈຸດປະສົງເພີ່ມ ຫຼື ຫຼຸດ ທຶນຈົດທະບຽນ ບໍ່ວ່າກໍລະນີທົ່ວໄປ ຫຼື ໃນກໍລະນີ ປ່ຽນແປງປະເພດການເຄື່ອນໄຫວທຸລະກິດ ໃຫ້ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ.

**ມາດຕາ 67 ອັດຕາສ່ວນຄວາມພຽງພໍຂອງທຶນ**

ບໍລິສັດຫຼັກຊັບ ຕ້ອງຮັກສາອັດຕາສ່ວນຄວາມພຽງພໍຂອງທຶນ ຕາມລະບຽບການຂອງ ຄຄຊ ເພື່ອຮັບປະກັນຄວາມໝັ້ນຄົງ ຂອງຕົນ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງບໍລິສັດຫຼັກຊັບ**

**ບໍລິສັດຫຼັກຊັບ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ເຄື່ອນໄຫວທຸລະກິດຫຼັກຊັບ ຕາມປະເພດທີ່ໄດ້ຮັບອະນຸຍາດ;
2. ປັບປຸງ ແລະ ພັດທະນາ ລະບົບຄວບຄຸມພາຍໃນ, ການບໍລິຫານຄວາມສ່ຽງ, ເຕັກໂນໂລຊີ ຂໍ້ມູນຂ່າວສານ ແລະ ການປ້ອງກັນຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ ພາຍໃນບໍລິສັດ ຫຼື ກັບບຸກຄົນທີ່ກ່ຽວຂ້ອງ;

3. ແຍກບັນຊີຫຼັກຊັບ ແລະ ບັນຊີເງິນ ຂອງແຕ່ລະລູກຄ້າ ອອກຈາກບັນຊີຂອງບໍລິສັດຫຼັກຊັບ;

4. ສະໜອງຂໍ້ມູນໃຫ້ແກ່ລູກຄ້າຢ່າງຄົບຖ້ວນ, ຖືກຕ້ອງ, ຈະແຈ້ງ ແລະ ທັນເວລາ;

5. ໃຫ້ບູລິມະສິດແກ່ລູກຄ້າ ໃນການດໍາເນີນທຸລະກໍາການຊື້-ຂາຍຫຼັກຊັບ;

6. ໃຫ້ຄວາມຮູ້ເບື້ອງຕົ້ນ ກ່ຽວກັບການລົງທຶນໃນຫຼັກຊັບໃຫ້ຜູ້ລົງທຶນ ແລະ ປະເມີນຄວາມພ້ອມ ເພື່ອສ້າງຄວາມເຂົ້າໃຈ ແລະ ຄວາມຮັບຜິດຊອບຂອງຜູ້ລົງທຶນຕໍ່ຄວາມສ່ຽງ ທີ່ອາດເກີດຂຶ້ນ;

7. ຊອກຮູ້ຂໍ້ມູນກ່ຽວກັບລູກຄ້າ ເປັນຕົ້ນ ຊື່, ທີ່ຢູ່, ອາຊີບ, ບ່ອນປະຈໍາການ, ແຫຼ່ງທີ່ມາຂອງເງິນ ແລະ ຖານະການເງິນ ພ້ອມທັງຮັບປະກັນວ່າຜູ້ເປີດບັນຊີຫຼັກຊັບ ແມ່ນເຈົ້າຂອງບັນຊີທີ່ແທ້ຈິງ;

8. ຮັກສາຂໍ້ມູນ ແລະ ເອກະສານ ກ່ຽວກັບການເຄື່ອນໄຫວທຸລະກິດຫຼັກຊັບ ແລະ ລູກຄ້າໄວ້ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ຮັບປະກັນຄວາມປອດໄພ;

9. ຮັກສາຂໍ້ມູນທີ່ເປັນຄວາມລັບຂອງລູກຄ້າ ເວັ້ນເສຍແຕ່ກົດໝາຍໄດ້ກໍານົດໄວ້ເປັນຢ່າງອື່ນ;

10. ປະຕິບັດລະບອບການບັນຊີ, ການກວດສອບ, ສະຖິຕິ ແລະ ພັນທະທາງການເງິນອື່ນ ຕາມລະບຽບກົດໝາຍ.

**ມາດຕາ 69 ການປ່ຽນແປງລາຍການຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ສາມາດປ່ຽນແປງລາຍການໃດໜຶ່ງໄດ້ ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກ ຄຄຊ.

**ການປ່ຽນແປງລາຍການ ທີ່ຕ້ອງໄດ້ຮັບອະນຸຍາດ ມີ ດັ່ງນີ້:**

1. ການເພີ່ມ ຫຼື ຫຼຸດ ທຶນຈົດທະບຽນ;
2. ປະເພດການເຄື່ອນໄຫວທຸລະກິດຫຼັກຊັບ;
3. ຊື່, ສະຖານທີ່ຕັ້ງ, ການຄວບ ຫຼື ການຍຸບເລີກ ບໍລິສັດ, ສາຂາ, ໜ່ວຍບໍລິການ ຫຼື ຫ້ອງການຜູ້ຕາງໜ້າ;
4. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຍົກເວັ້ນ ການໂຈະເນື່ອງຈາກມີການລະເມີດລະບຽບກົດໝາຍ;
5. ການປ່ຽນແປງໂຄງປະກອບຜູ້ຖືຮຸ້ນ ແຕ່ຫ້າສ່ວນຮ້ອຍ ຂຶ້ນໄປ;
6. ການປ່ຽນແປງສະມາຊິກສະພາບໍລິຫານ, ຄະນະອໍານວຍການ ແລະ ຄະນະກໍາມະການກວດກາພາຍໃນ;
7. ການປ່ຽນແປງອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

ຄຄຊ ຈະພິຈາລະນາການຂໍປ່ຽນແປງ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 2 ຂອງມາດຕານີ້ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍປ່ຽນແປງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

**ມາດຕາ 70 ລະບອບບັນຊີຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ຕ້ອງປະຕິບັດລະບອບບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການບັນຊີ ແລະ ມາດຕະຖານການບັນຊີ ຂອງ ສປປ ລາວ.

ເອກະສານລາຍງານການເງິນປະຈຳປີ ຂອງບໍລິສັດຫຼັກຊັບ ຕ້ອງຜ່ານການກວດສອບຈາກບໍລິສັດກວດສອບ.

**ມາດຕາ 71 ການຍຸບເລີກບໍລິສັດຫຼັກຊັບ**

**ບໍລິສັດຫຼັກຊັບ ຈະຖືກຍຸບເລີກໃນກໍລະນີ ດັ່ງນີ້:**

1. ຕາມການຮ້ອງຂໍຂອງບໍລິສັດຫຼັກຊັບ ໂດຍອີງໃສ່ມະຕິຂອງກອງປະຊຸມຜູ້ຖືຮຸ້ນ;
2. ໄດ້ຮັບການອະນຸຍາດສ້າງຕັ້ງ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ທີ່ສ້າງຜົນເສຍຫາຍຢ່າງຫຼວງຫຼາຍ ໃຫ້ແກ່ລະບົບຕະຫຼາດທຶນ ແລະ ຄວາມໝັ້ນຄົງຂອງບໍລິສັດ;
3. ມີການຄວບບໍລິສັດເຂົ້າກັນ;
4. ມີການລະເມີດລະບຽບການ ກ່ຽວກັບການຮັກສາຄວາມໝັ້ນຄົງຂອງບໍລິສັດຫຼັກຊັບ ຕາມການກຳນົດຂອງ ຄຄຊ;
5. ຖືກສານຕັດສິນໃຫ້ລົ້ມລະລາຍ.

ພາຍຫຼັງທີ່ຖືກຍຸບເລີກແລ້ວ ຄຄຊ ຕ້ອງປະກາດໃຫ້ມວນຊົນຊາບ ຢ່າງກວ້າງຂວາງ ໂດຍຜ່ານພາຫະນະສື່ມວນຊົນເປັນເວລາ ສິບຫ້າວັນ ຢ່າງຕໍ່ເນື່ອງ ນັບແຕ່ວັນໄດ້ຖືກຍຸບເລີກ ເປັນຕົ້ນໄປ.

**ມາດຕາ 72 ການສະສາງ-ຊຳລະ**

ບໍລິສັດຫຼັກຊັບທີ່ຖືກຍຸບເລີກຕາມມາດຕາ 71 ຂອງກົດໝາຍສະບັບນີ້ ຕ້ອງດຳເນີນການສະສາງ-ຊຳລະ ພັນທະໜີ້ສິນຂອງຕົນ ໃຫ້ແກ່ພະນັກງານ, ລັດ ແລະ ເຈົ້າໜີ້ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ. ບໍລິສັດຫຼັກຊັບ ທີ່ຖືກຍຸບເລີກ ບໍ່ສາມາດນຳໃຊ້ຊັບສິນຂອງລູກຄ້າ ເພື່ອສະສາງ-ຊຳລະໜີ້.

ບໍລິສັດຫຼັກຊັບທີ່ຖືກຍຸບເລີກ ຕ້ອງໂອນບັນຊີລາຍຊື່ ລວມທັງຊັບສິນຂອງລູກຄ້າ ໄປໃຫ້ບໍລິສັດຫຼັກຊັບອື່ນ ໃນທັນທີ ເພື່ອສືບຕໍ່ໃຫ້ບໍລິການ ຕາມການເຫັນດີຂອງ ຄຄຊ. ໃນກໍລະນີຈຳເປັນ ຄຄຊ ສາມາດແຕ່ງຕັ້ງຄະນະກຳມະການສະເພາະກິດ ເພື່ອດຳເນີນການສະສາງ-ຊຳລະ.

## ໝວດທີ 2
## ບໍລິສັດບໍລິຫານຊັບສິນ

**ມາດຕາ 73 ການສ້າງຕັ້ງບໍລິສັດບໍລິຫານຊັບສິນ**

ບໍລິສັດບໍລິຫານຊັບສິນ ແມ່ນ ບໍລິສັດທີ່ດຳເນີນທຸລະກິດກ່ຽວກັບ ການສ້າງຕັ້ງ ແລະ ບໍລິຫານກອງທຶນຮ່ວມ ພ້ອມທັງບໍລິຫານຊັບສິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ.

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງບໍລິສັດບໍລິຫານຊັບສິນ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບການຂໍອະນຸຍາດ ຕໍ່ ຄຄຊ. ບໍລິສັດບໍລິຫານຊັບສິນ ສ້າງຕັ້ງຂຶ້ນໄດ້ໃນຮູບແບບ ບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ.

ບໍລິສັດບໍລິຫານຊັບສິນຕ່າງປະເທດ ສາມາດສ້າງຕັ້ງ ຢູ່ ສປປ ລາວ ໃນຮູບແບບລົງທຶນຝ່າຍດຽວ ຫຼື ຮ່ວມທຶນກັບສະຖາບັນການເງິນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມກົດໝາຍ ຂອງ ສປປ ລາວ ຫຼື ສາມາດສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າຂອງຕົນ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກ ຄຄຊ.

**ມາດຕາ 74 ເງື່ອນໄຂການສ້າງຕັ້ງບໍລິສັດບໍລິຫານຊັບສິນ**

**ການສ້າງຕັ້ງບໍລິສັດບໍລິຫານຊັບສິນ ນອກຈາກ ມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້ ຍັງຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:**

1. ມີຜູ້ບໍລິຫານ ທີ່ມີປະສົບການໃນການບໍລິຫານທີ່ດີ ໃນການບໍລິຫານກອງທຶນຮ່ວມ;
2. ມີຜູ້ບໍລິຫານກອງທຶນຮ່ວມ ທີ່ມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ປະເພດບໍລິຫານກອງທຶນຮ່ວມ ໃນຈຳນວນທີ່ເໝາະສົມ.

**ມາດຕາ 75 ການເຄື່ອນໄຫວທຸລະກິດຂອງບໍລິສັດບໍລິຫານຊັບສິນ**

**ບໍລິສັດບໍລິຫານຊັບສິນ ສາມາດເຄື່ອນໄຫວທຸລະກິດ ດັ່ງນີ້:**

1. ສ້າງຕັ້ງ ແລະ ບໍລິຫານກອງທຶນຮ່ວມ;
2. ບໍລິຫານຊັບສິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ.

**ມາດຕາ 76 ສິດ ແລະ ໜ້າທີ່ ຂອງບໍລິສັດບໍລິຫານຊັບສິນ**

**ບໍລິສັດບໍລິຫານຊັບສິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ດຳເນີນທຸລະກິດ ແລະ ໃຫ້ບໍລິການ ຕາມທີ່ໄດ້ຮັບອະນຸຍາດ;

2. ດຳເນີນການຂາຍ, ໄຖ່ຖອນຄືນໜ່ວຍລົງທຶນ ແລະ ຈົດທະບຽນໜ່ວຍລົງທຶນໃນຕະຫຼາດຫຼັກຊັບ ຫຼື ມອບ ໃຫ້ສະຖາບັນການເງິນໃດໜຶ່ງດຳເນີນການແທນ ຕາມການອະນຸຍາດຂອງ ຄຄຊ;

3. ປະຕິບັດຕາມກົດລະບຽບຂອງກອງທຶນຮ່ວມ, ສັນຍາດູແລຊັບສິນ, ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ແລະ ປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ;

4. ດຳເນີນການກວດສອບບັນຊີຂອງກອງທຶນຮ່ວມ, ລາຍງານ ແລະ ເປີດເຜີຍຂໍ້ມູນກ່ຽວກັບກອງທຶນຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

5. ປະຕິບັດລະບອບ ການບັນຊີ, ການກວດສອບ, ສະຖິຕິ ແລະ ພັນທະທາງການເງິນອື່ນ ຕາມລະບຽບກົດໝາຍ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ ຄຄຊ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 77 ການນຳໃຊ້ບົດບັນຍັດຂອງບໍລິສັດຫຼັກຊັບ

ນອກຈາກບົດບັນຍັດຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນໝວດນີ້ ການປະກອບເອກະສານການຂໍສ້າງຕັ້ງ, ການພິຈາລະນາການຂໍສ້າງຕັ້ງ, ການຖອກ ແລະ ການນຳໃຊ້ທຶນຈົດທະບຽນ, ການປະກາດໃຫ້ມວນຊົນຊາບ, ໂຄງປະກອບການຈັດຕັ້ງ, ກົດລະບຽບຂອງບໍລິສັດ, ການປ່ຽນແປງ, ການຄວບ, ລະບອບບັນຊີ, ການຍຸບເລີກ ແລະ ການສະສາງ-ຊຳລະ ຂອງບໍລິສັດບໍລິຫານຊັບສິນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນບົດບັນຍັດຂອງບໍລິສັດຫຼັກຊັບ.

## ໝວດທີ 3
## ທະນາຄານດູແລຊັບສິນ

### ມາດຕາ 78 ທະນາຄານດູແລຊັບສິນ

ທະນາຄານດູແລຊັບສິນ ແມ່ນ ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດຈາກ ຄຄຊ ໃຫ້ເຮັດໜ້າທີ່ ເປັນຜູ້ຮັກສາ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ.

### ມາດຕາ 79 ເງື່ອນໄຂການຂໍອະນຸຍາດເປັນທະນາຄານດູແລຊັບສິນ

**ທະນາຄານທຸລະກິດ ທີ່ມີຈຸດປະສົງເຮັດໜ້າທີ່ເປັນທະນາຄານດູແລຊັບສິນ ຕ້ອງມີເງື່ອນໄຂ ດັ່ງນີ້:**

1. ມີສະພາບຄ່ອງທາງການເງິນທີ່ດີ ແລະ ເປັນທີ່ຍອມຮັບຈາກຜູ້ລົງທຶນ;

2. ປະຕິບັດລະບຽບວ່າດ້ວຍ ຄວາມໝັ້ນຄົງ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດໄວ້;

3. ມີພະແນກຄຸ້ມຄອງຊັບສິນຂອງກອງທຶນຮ່ວມ ແລະ ຊັບສິນອື່ນ ທີ່ບໍລິສັດບໍລິຫານຊັບສິນ ເປັນຜູ້ບໍລິຫານ ແລະ ມີພະນັກງານວິຊາການທີ່ກ່ຽວຂ້ອງ ຕາມຕຳແໜ່ງງານໃນຈຳນວນທີ່ເໝາະສົມ;

4. ມີລະບົບ ການຄຸ້ມຄອງ ແລະ ບໍລິຫານຊັບສິນ, ການກວດກາພາຍໃນ ແລະ ບໍລິຫານຄວາມສ່ຽງ ລວມທັງລະບົບການຕິດຕາມບັນຊີເງິນ ແລະ ບັນຊີຫຼັກຊັບ ທີ່ຮັບປະກັນ ແລະ ຄ່ອງຕົວ;

5. ມີລະບົບສະສາງ-ຊຳລະທຸລະກຳຫຼັກຊັບ ທີ່ຮັບປະກັນ ແລະ ຄ່ອງຕົວ ທັງພາຍໃນ ແລະ ຕ່າງປະເທດ;

6. ມີເງື່ອນໄຂອື່ນ ຕາມການກຳນົດຂອງ ຄຄຊ.

**ມາດຕາ 80 ເອກະສານປະກອບການຂໍເປັນທະນາຄານດູແລຊັບສິນ**

**ເອກະສານປະກອບການຂໍເປັນທະນາຄານດູແລຊັບສິນ ມີ ດັ່ງນີ້:**

1. ຄຳຮ້ອງຕາມແບບພິມຂອງ ຄຄຊ;
2. ມະຕິຂອງກອງປະຊຸມສະພາບໍລິຫານ;
3. ສຳເນົາໃບທະບຽນວິສາຫະກິດ ແລະ ກົດລະບຽບພາຍໃນຂອງທະນາຄານ;
4. ເອກະສານລາຍງານການເງິນ ສາມປີຄືນຫຼັງ ຫຼື ນັບແຕ່ວັນສ້າງຕັ້ງ ທີ່ໄດ້ຮັບການກວດສອບ.

**ມາດຕາ 81 ການພິຈາລະນາການຂໍອະນຸຍາດເປັນທະນາຄານດູແລຊັບສິນ**

ເມື່ອໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບການຂໍເປັນທະນາຄານດູແລຊັບສິນ ຄົບຖ້ວນ ແລະ ຖືກຕ້ອງແລ້ວ ຄຄຊ ຈະພິຈາລະນາອະນຸຍາດເປັນທະນາຄານດູແລຊັບສິນ ພາຍໃນກຳນົດສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ. ໃນກໍລະນີ ປະຕິເສດ ກໍຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 82 ການເຄື່ອນໄຫວຂອງທະນາຄານດູແລຊັບສິນ**

**ທະນາຄານດູແລຊັບສິນ ສາມາດເຄື່ອນໄຫວທຸລະກິດ ດັ່ງນີ້:**

1. ຮັກສາ ແລະ ຄຸ້ມຄອງ ເງິນ, ຫຼັກຊັບ ຫຼື ຊັບສິນອື່ນ ຂອງຜູ້ລົງທຶນ;
2. ສະສາງ-ຊຳລະທຸລະກຳຫຼັກຊັບ;
3. ໂອນຫຼັກຊັບ;

4. ຂື້ນບັນຊີຫຼັກຊັບ;

5. ປະຕິບັດໜ້າທີ່ແທນຜູ້ລົງທຶນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອື່ນ ທີ່ຜູ້ລົງທຶນຄວນຈະໄດ້ຮັບ;

6. ສ້າງບົດລາຍງານ ກ່ຽວກັບການເຄື່ອນໄຫວທຸລະກຳຫຼັກຊັບ ເພື່ອສະໜອງໃຫ້ແກ່ຜູ້ລົງທຶນ;

7. ທົບທວນ, ກວດກາ ແລະ ປະເມີນຜົນການປະຕິບັດສິດ ແລະ ໜ້າທີ່ ຂອງຜູ້ບໍລິຫານກອງທຶນຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບ ຫຼື ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຜູ້ລົງທຶນ.

**ມາດຕາ 83 ສິດ ແລະ ໜ້າທີ່ ຂອງທະນາຄານດູແລຊັບສິນ**

**ທະນາຄານດູແລຊັບສິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ເປີດ ແລະ ຄຸ້ມຄອງ ບັນຊີເງິນຝາກ ແລະ ຄຸ້ມຄອງບັນຊີຫຼັກຊັບ ຂອງຜູ້ລົງທຶນ;

2. ໂອນເງິນ ເຂົ້າ-ອອກ ສປປ ລາວ ໃຫ້ແກ່ຜູ້ລົງທຶນທີ່ຢູ່ຕ່າງປະເທດ ໃນການຊື້-ຂາຍຫຼັກຊັບ;

3. ບໍລິການແລກປ່ຽນເງິນຕາຕ່າງປະເທດ ເພື່ອເປົ້າໝາຍຊື້-ຂາຍຫຼັກຊັບ;

4. ບໍລິການສະສາງ-ຊຳລະ ການຊື້-ຂາຍຫຼັກຊັບ;

5. ຕິດຕາມກວດກາແຫຼ່ງທີ່ມາຂອງເງິນ ຂອງຜູ້ລົງທຶນ;

6. ເກັບຮັກສາ ຂໍ້ມູນ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງກັບທຸລະກຳທາງການເງິນ;

7. ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຕາມການມອບໝາຍຂອງຜູ້ລົງທຶນ;

8. ຮັບ ແລະ ສົ່ງມອບເງິນປັນຜົນ, ດອກເບ້ຍ ແລະ ຜົນປະໂຫຍດອື່ນ ທີ່ເກີດຈາກຊັບສິນ ຫຼື ຫຼັກຊັບ ຂອງຜູ້ລົງທຶນ;

9. ສະໜອງຂໍ້ມູນ ກ່ຽວກັບບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ໃຫ້ຜູ້ລົງທຶນ;

10. ກຳນົດມູນຄ່າຊັບສິນສຸດທິຂອງກອງທຶນຮ່ວມ;

11. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ຄຄຊ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 84 ການໂຈະການເຄື່ອນໄຫວຂອງທະນາຄານດູແລຊັບສິນ**

ຄຄຊ ສາມາດສັ່ງໂຈະການເຄື່ອນໄຫວຂອງທະນາຄານດູແລຊັບສິນ ໃນກໍລະນີໃດໜຶ່ງດັ່ງນີ້:

1. ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;

2. ປະຕິບັດໜ້າທີ່ໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 83 ຂອງກົດໝາຍສະບັບນີ້ ບໍ່ມີປະສິດທິຜົນ;
3. ມີຄຳສັ່ງຂອງສານປະຊາຊົນ ໃຫ້ໂຈະການເຄື່ອນໄຫວ ກ່ຽວກັບການເຮັດໜ້າທີ່ດູແລຊັບສິນ;
4. ລະເມີດລະບຽບກົດໝາຍ ທີ່ບໍ່ສົ່ງຜົນສະທ້ອນຮ້າຍແຮງ ຕໍ່ລະບົບຕະຫຼາດທຶນ.

ພາຍຫຼັງຖືກໂຈະການເຄື່ອນໄຫວແລ້ວ ທະນາຄານດູແລຊັບສິນ ຕ້ອງປັບປຸງແກ້ໄຂ ຕາມກຳນົດເວລາທີ່ ຄຄຊ ໄດ້ກຳນົດໄວ້.

**ມາດຕາ 85 ການຖອນໃບອະນຸຍາດເປັນທະນາຄານດູແລຊັບສິນ**

**ຄຄຊ ສາມາດຖອນໃບອະນຸຍາດການເປັນທະນາຄານດູແລຊັບສິນ ໃນກໍລະນີໃດໜຶ່ງ ດັ່ງນີ້:**

1. ບໍ່ສາມາດແກ້ໄຂບັນຫາ ທີ່ໄດ້ກຳນົດໄວ້ໃນມາດຕາ 84 ຂອງກົດໝາຍສະບັບນີ້ ຕາມກຳນົດເວລາທີ່ ຄຄຊ ໄດ້ກຳນົດໄວ້;
2. ຖືກຖອນໃບທະບຽນວິສາຫະກິດ;
3. ລະເມີດລະບຽບກົດໝາຍ ທີ່ສົ່ງຜົນສະທ້ອນຮ້າຍແຮງ ຕໍ່ລະບົບຕະຫຼາດທຶນ.

## ໝວດທີ 4
## ບໍລິສັດກວດສອບ ແລະ ຜູ້ກວດສອບ

**ມາດຕາ 86 ການຮັບຮອງເອົາບໍລິສັດກວດສອບ**

ບໍລິສັດກວດສອບ ທີ່ຈະໃຫ້ບໍລິການກວດສອບແກ່ ຕະຫຼາດຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ກອງທຶນຮ່ວມ ແລະ ສະຖາບັນສື່ກາງດ້ານຫຼັກຊັບ ຕ້ອງໄດ້ຮັບການຮັບຮອງ ຈາກ ຄຄຊ.

**ມາດຕາ 87 ເງື່ອນໄຂການຮັບຮອງເອົາບໍລິສັດກວດສອບ**

**ບໍລິສັດກວດສອບ ທີ່ຈະຖືກຮັບຮອງ ຕ້ອງມີເງື່ອນໄຂ ດັ່ງນີ້:**

1. ໄດ້ສ້າງຕັ້ງ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ ຢ່າງໜ້ອຍ ສາມປີ ກ່ອນວັນຍື່ນຄຳຮ້ອງ ຕໍ່ ຄຄຊ, ກໍລະນີ ບໍລິສັດກວດສອບຄວບກັບບໍລິສັດອື່ນ ການຄວບດັ່ງກ່າວ ຕ້ອງມີອາຍຸຫຼາຍກວ່າຫົກເດືອນ;
2. ມີຜູ້ກວດສອບ ປະຈຳຢູ່ບໍລິສັດຢ່າງໜ້ອຍ ຫ້າຄົນ ຂຶ້ນໄປ ແລະມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 88 ຂອງກົດໝາຍສະບັບນີ້;
3. ມີທຶນຈົດທະບຽນ ຕ່ຳສຸດບໍ່ໃຫ້ຫຼຸດ ໜຶ່ງຕື້ກີບ;

4. ເປັນສະມາຊິກຂອງສະມາຄົມວິຊາຊີບນັກບັນຊີ ແລະນັກກວດສອບອິດສະລະລາວ;

5. ມີປະສົບການໃນການດຳເນີນງານດ້ານການບັນຊີ ແລະ ການກວດສອບ.

**ມາດຕາ 88 ເງື່ອນໄຂຂອງຜູ້ກວດສອບ**

**ຜູ້ກວດສອບ ປະຈຳຢູ່ບໍລິສັດກວດສອບ ທີ່ຈະຖືກຮັບຮອງ ຕ້ອງມີເງື່ອນໄຂ ດັ່ງນີ້:**

1. ເປັນສະມາຊິກ ຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະລາວ;

2. ມີປະສົບການດ້ານການກວດສອບ ຢ່າງໜ້ອຍ ສາມປີ;

3. ບໍ່ເຄີຍລະເມີດລະບຽບການ ກ່ຽວກັບການກວດສອບ ແລະ ກົດຈັນຍາບັນທາງດ້ານວິຊາຊີບ;

4. ບໍ່ຖືກດຳເນີນຄະດີ ຫຼື ຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ໃນສະຖານການສໍ້ໂກງຊັບ, ການຍັກຍອກຊັບ, ການໃຫ້ ຫຼື ຮັບສິນບົນ.

**ມາດຕາ 89 ເອກະສານປະກອບການຂໍການຮັບຮອງເອົາບໍລິສັດກວດສອບ**

**ເອກະສານປະກອບການຂໍການຮັບຮອງເອົາບໍລິສັດກວດສອບ ມີ ດັ່ງນີ້:**

1. ຄຳຮ້ອງຕາມແບບພິມຂອງ ຄຄຊ;

2. ສຳເນົາໃບທະບຽນວິສາຫະກິດ;

3. ສຳເນົາໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ;

4. ກົດລະບຽບພາຍໃນຂອງບໍລິສັດ;

5. ສຳເນົາໃບຢັ້ງຢືນການເປັນສະມາຊິກຂອງສະມາຄົມວິຊາຊີບນັກບັນຊີ ແລະ ນັກກວດສອບອິດສະລະລາວ;

6. ບົດລາຍງານການດຳເນີນງານ ແລະ ເອກະສານລາຍງານການເງິນ ທີ່ໄດ້ຮັບການກວດສອບຈາກບໍລິສັດກວດສອບ ສາມປີຄືນຫຼັງ ກ່ອນວັນຍື່ນຄຳຮ້ອງ;

7. ຈຳນວນ ແລະ ລາຍຊື່ຜູ້ກວດສອບ ພ້ອມດ້ວຍປະຫວັດຫຍໍ້ ແລະ ປະສົບການດ້ານການກວດສອບ. ນອກຈາກນັ້ນ ຍັງຕ້ອງມີເອກະສານປະກອບເພີ່ມເຕີມ ສຳລັບຜູ້ກວດສອບ ດັ່ງນີ້:

7.1. ສຳເນົາໃບຢັ້ງຢືນທີ່ປຶກສາບັນຊີ ຂອງຜູ້ກວດສອບ;

7.2. ສຳເນົາໃບຢັ້ງຢືນການເປັນສະມາຊິກຂອງສະມາຄົມວິຊາຊີບນັກບັນຊີ ແລະນັກກວດສອບອິດສະລະລາວ;

7.3. ໃບແຈ້ງໂທດ.

8. ເອກະສານອື່ນ ຕາມການກຳນົດຂອງ ຄຄຊ.

ເອກະສານປະກອບການຂໍການຮັບຮອງເອົາບໍລິສັດກວດສອບ ທີ່ເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ.

**ມາດຕາ 90 ການພິຈາລະນາການຂໍການຮັບຮອງເອົາບໍລິສັດກວດສອບ**

ພາຍຫຼັງໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບການຂໍການຮັບຮອງເອົາບໍລິສັດກວດສອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ ຄຄຊ ຕ້ອງພິຈາລະນາ ໃຫ້ການຮັບຮອງເອົາບໍລິສັດກວດສອບ ພາຍໃນກຳນົດ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ກໍໃຫ້ແຈ້ງຕອບ ເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ການຮັບຮອງເອົາບໍລິສັດກວດສອບ ມີອາຍຸການ ສາມປີ. ບໍລິສັດກວດສອບ ທີ່ມີຈຸດປະສົງຕໍ່ອາຍຸການຮັບຮອງ ໃຫ້ຍື່ນຄຳຮ້ອງຕໍ່ ຄຄຊ ຢ່າງໜ້ອຍ ສີ່ສິບຫ້າວັນ ກ່ອນວັນໝົດອາຍຸ.

**ມາດຕາ 91 ສິດ ແລະ ໜ້າທີ່ ຂອງບໍລິສັດກວດສອບ**

**ບໍລິສັດກວດສອບ ທີ່ຖືກຮັບຮອງ ນອກຈາກມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ກ່ຽວກັບການກວດສອບແລ້ວ ຍັງມີ ສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:**

1. ສຳເນົາເອກະສານ ຫຼື ສະເໜີໃຫ້ຫົວໜ່ວຍທີ່ຖືກກວດສອບ ແລະ ບໍລິສັດທີ່ກ່ຽວຂ້ອງ ສະໜອງຂໍ້ມູນດ້ານການບັນຊີ ແລະ ຂໍ້ມູນອື່ນທີ່ຈຳເປັນ;
2. ຍົກເລີກສັນຍາບໍລິການກວດສອບ ເມື່ອເຫັນວ່າ ການກວດສອບບໍ່ເປັນເອກະລາດ, ບໍ່ໄດ້ຮັບການຮ່ວມມື ຫຼື ຖືກບັງຄັບໃຫ້ດຳເນີນການໃດໜຶ່ງ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ;
3. ແຈ້ງໃຫ້ຄະນະບໍລິຫານຂອງຫົວໜ່ວຍທີ່ຖືກກວດສອບຊາບ ເມື່ອເຫັນວ່າມີການລະເມີດ ເພື່ອໃຫ້ຢຸດເຊົາການລະເມີດ ແລະ ຫາວິທີແກ້ໄຂ ພ້ອມທັງບົ່ງບອກການລະເມີດດັ່ງກ່າວໃນບົດລາຍງານການກວດສອບ ແລະ ລາຍງານຕໍ່ຄະນະຜູ້ບໍລິຫານ;
4. ລາຍງານຜົນການກວດສອບ ຕໍ່ ຄຄຊ ກ່ຽວກັບ:
   - 4.1. ການຍົກເລີກສັນຍາບໍລິການກວດສອບ;
   - 4.2. ການລະເມີດລະບຽບກົດໝາຍ;
   - 4.3. ຄວາມເສັຍຫາຍທີ່ອາດເກີດຂຶ້ນ ຫຼື ເກີດຂຶ້ນ ທີ່ມີມູນຄ່າແຕ່ ສິບສ່ວນຮ້ອຍຂອງມູນຄ່າຊັບສິນຂອງຫົວໜ່ວຍທີ່ຖືກກວດສອບ;
   - 4.5. ການປ່ຽນແປງມູນຄ່າຊັບສິນ ທີ່ຜິດປົກກະຕິ;
   - 4.6. ມູນຄ່າຊັບສິນທັງໝົດ ທີ່ບໍ່ພຽງພໍໃນການຊຳລະໜີ້.
5. ກວດສອບ ແລະ ທົບທວນລາຍການທີ່ບົ່ງໄວ້ໃນເອກະສານລາຍງານການເງິນ ຕາມການສະເໜີຂອງ ຄຄຊ;

6. ຮັບຜິດຊອບຕໍ່ຜົນການກວດສອບ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ໃນກໍລະນີ ຜົນການກວດສອບນັ້ນ ຫາກບໍ່ຖືກຕ້ອງຕາມຄວາມເປັນຈິງ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຫົວໜ່ວຍທີ່ຖືກກວດສອບ ຫຼື ຜູ້ນໍາໃຊ້ບົດລາຍງານກວດສອບດັ່ງກ່າວ.

**ມາດຕາ 92 ການໂຈະການຮັບຮອງ**

**ຄຄຊ ສາມາດໂຈະການຮັບຮອງເອົາບໍລິສັດກວດສອບ ໃນກໍລະນີໃດໜຶ່ງ ດັ່ງນີ້:**

1. ບໍ່ສາມາດປະຕິບັດຕາມເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 87 ແລະ 88 ຂອງກົດໝາຍສະບັບນີ້;
2. ຖືກດໍາເນີນຄະດີ ຫຼື ຖືກຮ້ອງຟ້ອງ ກ່ຽວກັບການກວດສອບ;
3. ລະເມີດລະບຽບກົດໝາຍ ທີ່ບໍ່ສົ່ງຜົນສະທ້ອນຮ້າຍແຮງ ຕໍ່ລະບົບຕະຫຼາດທຶນ.

ພາຍຫຼັງຖືກໂຈະການຮັບຮອງເອົາແລ້ວ ບໍລິສັດກວດສອບ ຕ້ອງປັບປຸງແກ້ໄຂ ຕາມກໍານົດເວລາທີ່ ຄຄຊ ໄດ້ກໍານົດໄວ້.

**ມາດຕາ 93 ການຖອນການຮັບຮອງ**

**ຄຄຊ ສາມາດຖອນການຮັບຮອງເອົາບໍລິສັດກວດສອບ ໃນກໍລະນີໃດໜຶ່ງ ດັ່ງນີ້:**

1. ບໍ່ສາມາດແກ້ໄຂບັນຫາ ທີ່ໄດ້ກໍານົດໄວ້ໃນມາດຕາ 92 ຂອງກົດໝາຍສະບັບນີ້ ຕາມກໍານົດເວລາທີ່ ຄຄຊ ໄດ້ກໍານົດໄວ້;
2. ຖືກຖອນໃບທະບຽນວິສາຫະກິດ;
3. ລະເມີດລະບຽບກົດໝາຍ ທີ່ສົ່ງຜົນສະທ້ອນຮ້າຍແຮງ ຕໍ່ລະບົບຕະຫຼາດທຶນ.

## ໝວດທີ 5
## ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື

**ມາດຕາ 94 ການຈັດລໍາດັບຄວາມໜ້າເຊື່ອຖື**

ການຈັດລໍາດັບຄວາມໜ້າເຊື່ອຖື ແມ່ນ ການຈັດລໍາດັບ ຄຸນນະພາບ ແລະ ຄວາມສ່ຽງຂອງຫຼັກຊັບ ເປັນຕົ້ນ ພັນທະບັດ ຫຼື ຮຸ້ນກູ້, ການຈັດລໍາດັບການຄຸ້ມຄອງບໍລິຫານ ແລະ ຖານະການເງິນ ຂອງບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ ຫຼື ສະຖາບັນສື່ກາງດ້ານຫຼັກຊັບ.

**ມາດຕາ 95 ການໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖື**

ບໍລິສັດ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງໃຫ້ການບໍລິການຈັດລໍາດັບຄວາມໜ້າເຊື່ອຖື ກ່ຽວກັບວຽກງານຫຼັກຊັບ ຢູ່ ສປປ ລາວ ຕ້ອງໄດ້ຮັບການຮັບຮອງ ຈາກ ຄຄຊ.

ສຳລັບການຂໍອະນຸຍາດສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 6
## ສະມາຄົມທຸລະກິດຫຼັກຊັບ

**ມາດຕາ 96 ສະມາຄົມທຸລະກິດຫຼັກຊັບ**

ສະມາຄົມທຸລະກິດຫຼັກຊັບ ແມ່ນ ການຈັດຕັ້ງທາງສັງຄົມ ທີ່ສ້າງຕັ້ງຂຶ້ນໂດຍສະຖາບັນສີກາງດ້ານຫຼັກຊັບ ບົນພື້ນຖານຄວາມສະໝັກໃຈ ມີໜ້າທີ່ສົ່ງເສີມ, ພັດທະນາທຸລະກິດຫຼັກຊັບ ແລະ ປົກປ້ອງສິດ ຜົນປະໂຫຍດອັນຊອບທຳຂອງສະມາຊິກສະມາຄົມ ໂດຍບໍ່ຫວັງຜົນກຳໄລ.

ສະມາຄົມທຸລະກິດຫຼັກຊັບ ສ້າງຕັ້ງ ແລະ ເຄື່ອນໄຫວ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍກ່ຽວກັບສະມາຄົມ ແລະ ລະບຽບການຂອງ ຄຄຊ.

**ມາດຕາ 97 ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດຫຼັກຊັບ**

**ສະມາຄົມທຸລະກິດຫຼັກຊັບ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບທຸລະກິດຫຼັກຊັບ ໃຫ້ແກ່ສະມາຊິກ ແລະ ສັງຄົມ;
2. ປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກ ພ້ອມທັງສັງລວມຄວາມຄິດເຫັນກ່ຽວກັບທຸລະກິດຫຼັກຊັບ ເພື່ອສະເໜີໃຫ້ ຄຄຊ ພິຈາລະນາ;
3. ສ້າງກົດລະບຽບຂອງສະມາຄົມ;
4. ສ້າງກົດຈັນຍາບັນຂອງນັກວິຊາຊີບທຸລະກິດຫຼັກຊັບ;
5. ຄົ້ນຄວ້າ ແລະ ຍົກລະດັບຄວາມຮູ້ ກ່ຽວກັບທຸລະກິດຫຼັກຊັບ ໃຫ້ແກ່ສະມາຊິກ;
6. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດຂອງສະມາຊິກ.

# ພາກທີ V
# ຕະຫຼາດຫຼັກຊັບ
## ໝວດທີ 1
## ການສ້າງຕັ້ງຕະຫຼາດຫຼັກຊັບ

ມາດຕາ 98 **ການສ້າງຕັ້ງຕະຫຼາດຫຼັກຊັບ**

ການສ້າງຕັ້ງຕະຫຼາດຫຼັກຊັບ ຕ້ອງໄດ້ຮັບອະນຸຍາດຈາກ ຄຄຊ ຕາມການຕົກລົງເຫັນດີຂອງລັດຖະບານ.

ຕະຫຼາດຫຼັກຊັບ ສາມາດສ້າງຕັ້ງຂຶ້ນໃນຮູບແບບບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ ຍົກເວັ້ນ ບໍລິສັດຈຳກັດຜູ້ດຽວ.

ການປ່ຽນແປງໂຄງປະກອບການຖືຮຸ້ນ ແລະ ການຍຸບເລີກຕະຫຼາດຫຼັກຊັບ ກໍຕ້ອງໄດ້ຮັບການອະນຸຍາດຈາກ ຄຄຊ.

ມາດຕາ 99 **ເງື່ອນໄຂຂອງຜູ້ຂໍສ້າງຕັ້ງຕະຫຼາດຫຼັກຊັບ**

**ຜູ້ຂໍສ້າງຕັ້ງຕະຫຼາດຫຼັກຊັບ ຕ້ອງມີເງື່ອນໄຂ ດັ່ງນີ້:**

1. ມີຖານະເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຖານະການເງິນດີ, ມີປະສົບການສູງໃນການເຄື່ອນໄຫວວຽກງານຕະຫຼາດຫຼັກຊັບ;
2. ມີທຶນຈົດທະບຽນ ຕາມການກຳນົດຂອງ ຄຄຊ;
3. ມີແຜນການດຳເນີນທຸລະກິດ ສາມປີທຳອິດ ແລະ ໂຄງຮ່າງການຈັດຕັ້ງຂອງຕະຫຼາດຫຼັກຊັບ.

ມາດຕາ 100 **ເອກະສານປະກອບການຂໍສ້າງຕັ້ງຕະຫຼາດຫຼັກຊັບ**

**ເອກະສານປະກອບການຂໍສ້າງຕັ້ງຕະຫຼາດຫຼັກຊັບ ມີ ດັ່ງນີ້:**

1. ຄຳຮ້ອງຕາມແບບພິມຂອງ ຄຄຊ;
2. ເອກະສານລາຍງານການເງິນ ແລະ ບົດລາຍງານຜົນການດຳເນີນງານຂອງຜູ້ຂໍສ້າງຕັ້ງ;
3. ສັນຍາສ້າງຕັ້ງບໍລິສັດຕະຫຼາດຫຼັກຊັບ;
4. ກົດລະບຽບຂອງບໍລິສັດຕະຫຼາດຫຼັກຊັບ;
5. ຊື່, ທີ່ຢູ່ ແລະ ສັນຊາດ ພ້ອມດ້ວຍຈຳນວນຮຸ້ນ ຂອງຜູ້ຂໍສ້າງຕັ້ງແຕ່ລະຄົນ;
6. ແຜນການດຳເນີນທຸລະກິດ ສາມປີທຳອິດ ພາຍຫຼັງການສ້າງຕັ້ງ;
7. ເອກະສານອື່ນ ຕາມການກຳນົດຂອງ ຄຄຊ.

**ມາດຕາ 101 ໂຄງປະກອບການຈັດຕັ້ງຂອງຕະຫຼາດຫຼັກຊັບ**

**ຕະຫຼາດຫຼັກຊັບ ມີໂຄງປະກອບການຈັດຕັ້ງ ດັ່ງນີ້:**

1. ກອງປະຊຸມຜູ້ຖືຮຸ້ນ;
2. ສະພາບໍລິຫານ ຊຶ່ງຕ້ອງມີສະມາຊິກພາຍນອກຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ ແລະ ປະທານສະພາບໍລິຫານ ຕ້ອງບໍ່ຄວບຕຳແໜ່ງຜູ້ອຳນວຍການ;
3. ຄະນະກຳມະການສະເພາະດ້ານໃດໜຶ່ງຂອງສະພາບໍລິຫານ ເປັນຕົ້ນ ຄະນະກຳມະການກວດສອບ, ຄະນະກຳມະການພິຈາລະນາເງິນເດືອນ ແລະ ນະໂຍບາຍ;
4. ຄະນະອຳນວຍການ;
5. ຄະນະພະແນກ ແລະ ພະນັກງານວິຊາການຈຳນວນໜຶ່ງ.

ສຳລັບ ພາລະບົດບາດ, ສິດ, ໜ້າທີ່ ແລະ ລະບອບການເຄື່ອນໄຫວວຽກງານຂອງ ແຕ່ລະການຈັດຕັ້ງ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍວິສາຫະກິດ, ລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງກຳນົດໄວ້ໃນກົດລະບຽບຂອງຕະຫຼາດຫຼັກຊັບ.

**ມາດຕາ 102 ເງື່ອນໄຂສຳລັບຜູ້ບໍລິຫານ**

**ຜູ້ບໍລິຫານຕະຫຼາດຫຼັກຊັບ ແມ່ນ ສະມາຊິກສະພາບໍລິຫານ, ຄະນະກຳມະການສະເພາະດ້ານໃດໜຶ່ງຂອງສະພາບໍລິຫານ ແລະ ຄະນະອຳນວຍການ ຊຶ່ງມີເງື່ອນໄຂ ດັ່ງນີ້:**

1. ມີວຸດທິການສຶກສາລະດັບປະລິນຍາຕີ ຂຶ້ນໄປ;
2. ມີປະສົບການທາງດ້ານ ການເງິນ-ການທະນາຄານ, ທຸລະກິດຫຼັກຊັບ, ກົດໝາຍ, ບັນຊີ, ກວດສອບ ຫຼື ບໍລິຫານທຸລະກິດ ຢ່າງໜ້ອຍ ສາມປີ;
3. ບໍ່ແມ່ນລັດຖະກອນ ທີ່ຖືກປົດຕຳແໜ່ງ ຫຼື ຖືກປົດອອກຈາກການເປັນລັດຖະກອນ;
4. ບໍ່ເຄີຍຖືກຖອນໃບຢັ້ງຢືນວິຊາຊີບ ເປັນຕົ້ນ ໃບຢັ້ງຢືນນັກວິຊາຊີບດ້ານການບັນຊີ, ກວດສອບ ຫຼື ທຸລະກິດຫຼັກຊັບ;
5. ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍ;
6. ບໍ່ເຄີຍເປັນຜູ້ບໍລິຫານວິສາຫະກິດໃດໜຶ່ງ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
7. ບໍ່ຖືກດຳເນີນຄະດີ ຫຼື ຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ໃນສະຖານລັກຊັບ, ການສໍ້ໂກງຊັບ, ການຍັກຍອກຊັບ, ການປອມແປງເອກະສານ, ການຮັບ ຫຼື ໃຫ້ສິນບົນ, ການສໍ້ລາດບັງຫຼວງ, ການຟອກເງິນ ຫຼື ການກະທຳຜິດ ກ່ຽວກັບທຸລະກິດດ້ານຫຼັກຊັບ.

ຜູ້ບໍລິຫານຕະຫຼາດຫຼັກຊັບ ທີ່ຂາດເງື່ອນໄຂໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 1 ຂອງມາດຕານີ້ ໃນໄລຍະດຳລົງຕຳແໜ່ງ ຈະຖືກຖອນ.

**ມາດຕາ 103 ກົດລະບຽບຂອງຕະຫຼາດຫຼັກຊັບ**

ກົດລະບຽບຂອງຕະຫຼາດຫຼັກຊັບ ຕ້ອງມີເນື້ອໃນຕົ້ນຕໍ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ ແລະ ໄດ້ຮັບການເຫັນດີ ຈາກ ຄຄຊ.

**ມາດຕາ 104 ການພິຈາລະນາການຂໍສ້າງຕັ້ງຕະຫຼາດຫຼັກຊັບ**

ພາຍຫຼັງທີ່ໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບການຂໍສ້າງຕັ້ງຕະຫຼາດຫຼັກຊັບ ຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 99 ແລະ 100 ຂອງກົດໝາຍສະບັບນີ້ແລ້ວ ຄຄຊ ຕ້ອງຄົ້ນຄວ້າ ແລະ ນໍາສະເໜີຕໍ່ ລັດຖະບານ ເພື່ອພິຈາລະນາ.

ຫຼັງຈາກລັດຖະບານຕົກລົງເຫັນດີໃຫ້ສ້າງຕັ້ງຕະຫຼາດຫຼັກຊັບແລ້ວ ຄຄຊ ຕ້ອງອອກໃບອະນຸຍາດສ້າງຕັ້ງຕະຫຼາດຫຼັກຊັບຊົ່ວຄາວ ພາຍໃນກໍານົດ ສາມສິບວັນ ນັບແຕ່ວັນລັດຖະບານໄດ້ຕົກລົງເຫັນດີເປັນຕົ້ນໄປ. ໃນກໍລະນີປະຕິເສດ ໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ຄຄຊ ຈະອອກໃບອະນຸຍາດສ້າງຕັ້ງຖາວອນ ພາຍໃນກໍານົດ ສາມສິບວັນ ນັບແຕ່ວັນຜູ້ຂໍສ້າງຕັ້ງໄດ້ປະຕິບັດເງື່ອນໄຂເພີ່ມເຕີມສໍາເລັດ ເປັນຕົ້ນໄປ.

**ເງື່ອນໄຂເພີ່ມເຕີມ ມີ ດັ່ງນີ້:**

1. ຖອກທຶນຈົດທະບຽນຄົບຖ້ວນ;
2. ມີ ສໍານັກງານ ແລະ ອຸປະກອນຮັບໃຊ້, ລະບົບຊື້-ຂາຍຫຼັກຊັບ, ລະບົບສະສາງ-ຊໍາລະທຸລະກໍາຫຼັກຊັບ, ລະບົບຂຶ້ນທະບຽນຫຼັກຊັບ, ຮັບຝາກຫຼັກຊັບ, ລະບົບຕິດຕາມການຊື້-ຂາຍຫຼັກຊັບແບບເອເລັກໂຕຣນິກ, ລະບົບເຄືອຂ່າຍ, ລະບົບຖານຂໍ້ມູນ ແລະ ລະບົບສໍາຮອງຂໍ້ມູນທີ່ເໝາະສົມ ແລະ ທັນສະໄໝ ລວມທັງລະບົບອື່ນ ທີ່ຈໍາເປັນ;
3. ມີລະບົບການປະຕິບັດວຽກງານໃນແຕ່ລະພະແນກການ, ລະບົບການກວດກາ ແລະ ການຄວບຄຸມພາຍໃນ;
4. ມີພະນັກງານວິຊາການ ໃນຈໍານວນທີ່ເໝາະສົມ ຕາມແຕ່ລະຕໍາແໜ່ງງານ;
5. ມີເງື່ອນໄຂອື່ນ ຕາມການກໍານົດຂອງ ຄຄຊ.

ໃນກໍລະນີຜູ້ຂໍສ້າງຕັ້ງ ຫາກບໍ່ປະຕິບັດຕາມເງື່ອນໄຂ ທີ່ໄດ້ກໍານົດໄວ້ໃນ ວັກທີ 4 ຂອງມາດຕານີ້ ພາຍໃນກໍານົດ ໜຶ່ງຮ້ອຍແປດສິບວັນ ໃບອະນຸຍາດສ້າງຕັ້ງຕະຫຼາດຫຼັກຊັບຊົ່ວຄາວນັ້ນ ກໍຈະຕົກໄປ. ຖ້າຜູ້ຂໍສ້າງຕັ້ງຕະຫຼາດຫຼັກຊັບ ຫາກປະຕິບັດເງື່ອນໄຂດັ່ງກ່າວບໍ່ສໍາເລັດ ແຕ່ມີເຫດຜົນພຽງພໍ ຄຄຊ ອາດຕໍ່ກໍານົດເວລາຂອງໃບອະນຸຍາດສ້າງຕັ້ງຊົ່ວຄາວ ແຕ່ບໍ່ໃຫ້ເກີນ ເກົ້າສິບວັນ.

ພາຍຫຼັງໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນແລ້ວ ຜູ້ຂໍສ້າງຕັ້ງຕະຫຼາດຫຼັກຊັບ ຕ້ອງເສຍຄ່າທຳນຽມຕາມລະບຽບການ, ແຈ້ງຂຶ້ນທະບຽນວິສາຫະກິດ ແລະ ດຳເນີນທຸລະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍວິສາຫະກິດ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 105 ການຖອກ ແລະ ການນຳໃຊ້ທຶນຈົດທະບຽນຂອງຕະຫຼາດຫຼັກຊັບ**

ການຖອກ ແລະ ການນຳໃຊ້ທຶນຈົດທະບຽນຂອງຕະຫຼາດຫຼັກຊັບ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 57 ຂອງກົດໝາຍສະບັບນີ້.

**ມາດຕາ 106 ສິດ ແລະ ໜ້າທີ່ ຂອງຕະຫຼາດຫຼັກຊັບ**

**ຕະຫຼາດຫຼັກຊັບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ, ສ້າງລະບຽບການກ່ຽວກັບການຄຸ້ມຄອງ ການຈົດທະບຽນ, ການຊື້-ຂາຍ, ການເປັນສະມາຊິກ, ການສະສາງ, ການຮັບຝາກຫຼັກຊັບ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ເພື່ອສະເໜີ ຄຄຊ ພິຈາລະນາ.;
2. ຈົດທະບຽນ ຫຼື ຍົກເລີກ ການຈົດທະບຽນຫຼັກຊັບ;
3. ອະນຸມັດ ຫຼື ຍົກເລີກ ການເປັນສະມາຊິກຂອງຕະຫຼາດຫຼັກຊັບ ຫຼື ສູນຮັບຝາກຫຼັກຊັບ;
4. ບໍລິການຊື້-ຂາຍຫຼັກຊັບຈົດທະບຽນ, ສະສາງທຸລະກຳຫຼັກຊັບ ແລະ ຊຳລະຫຼັກຊັບ;
5. ໂຈະ, ຢຸດເຊົາ ຫຼື ຍົກເລີກການຊື້-ຂາຍຫຼັກຊັບຈົດທະບຽນໃດໜຶ່ງ ໃນກໍລະນີຈຳເປັນ;
6. ຂຶ້ນເຄື່ອງໝາຍເຕືອນຕໍ່ຫຼັກຊັບໃດໜຶ່ງ ໃນກໍລະນີບໍລິສັດຈົດທະບຽນ ບໍ່ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;
7. ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງສະມາຊິກຕົນ, ສະມາຊິກຂອງສູນຮັບຝາກຫຼັກຊັບ ແລະ ບໍລິສັດຈົດທະບຽນ;
8. ຕິດຕາມການຊື້-ຂາຍຫຼັກຊັບຈົດທະບຽນ;
9. ສ້າງ, ພັດທະນາ ແລະ ບຳລຸງຮັກສາລະບົບຊື້-ຂາຍຫຼັກຊັບ, ສະສາງທຸລະກຳຫຼັກຊັບ, ຕິດຕາມການຊື້-ຂາຍຫຼັກຊັບ, ຖານຂໍ້ມູນຊື້-ຂາຍຫຼັກຊັບ ແລະ ລະບົບເຄືອຂ່າຍທີ່ເໝາະສົມ ແລະ ທັນສະໄໝ;
10. ຮັກສາຄວາມລັບຂອງລູກຄ້າ;
11. ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນໃຫ້ແກ່ ຄະນະກວດກາ, ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

12. ໂຄສະນາ ເຜີຍແຜ່ ແລະ ຈັດຝຶກອົບຮົມ ກ່ຽວກັບວຽກງານຫຼັກຊັບ ໃຫ້ແກ່ສະມາຊິກຕົນ, ບໍລິສັດຈົດທະບຽນ, ຜູ້ລົງທຶນ ແລະ ມວນຊົນທົ່ວໄປ;

13. ຮັບຜິດຊອບຕໍ່ຄວາມເສັຍຫາຍ ທີ່ເກີດຈາກຄວາມຜິດຂອງຕະຫຼາດຫຼັກຊັບ ໃນການເຄື່ອນໄຫວວຽກງານຂອງຕົນ ຍົກເວັ້ນຄວາມເສັຍຫາຍທີ່ເກີດຈາກເຫດສຸດວິໄສ;

14. ພົວພັນຮ່ວມມື ກັບຕະຫຼາດຫຼັກຊັບຕ່າງປະເທດ ແລະ ອົງການອື່ນ ກ່ຽວກັບວຽກງານຕະຫຼາດຫຼັກຊັບ;

15. ປະຕິບັດລະບອບການລາຍງານ ແລະ ເປີດເຜີຍຂໍ້ມູນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ;

16. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 107 ສະມາຊິກຂອງຕະຫຼາດຫຼັກຊັບ**

ສະມາຊິກຂອງຕະຫຼາດຫຼັກຊັບ ແມ່ນ ບັນດາບໍລິສັດຫຼັກຊັບ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍສະບັບນີ້ ແລະ ໄດ້ຜ່ານການຮັບຮອງຈາກຕະຫຼາດຫຼັກຊັບ.

**ສະມາຊິກຂອງຕະຫຼາດຫຼັກຊັບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ນໍາໃຊ້ລະບົບການຊື້-ຂາຍຫຼັກຊັບ ແລະ ການບໍລິການອື່ນ ຂອງຕະຫຼາດຫຼັກຊັບ;
2. ໄດ້ຮັບ ແລະ ເຂົ້າເຖິງຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບ;
3. ສະເໜີຄໍາເຫັນ ກ່ຽວກັບລະບົບການຊື້-ຂາຍຫຼັກຊັບຂອງຕະຫຼາດຫຼັກຊັບ;
4. ເສັຍຄ່າທໍານຽມ ແລະ ຄ່າບໍລິການ ຕາມລະບຽບກົດໝາຍ;
5. ປະຕິບັດລະບອບການລາຍງານ ແລະ ເປີດເຜີຍຂໍ້ມູນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 123 ແລະ 124 ຂອງກົດໝາຍສະບັບນີ້;
6. ປະຕິບັດ ສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 2
## ການເຄື່ອນໄຫວ ຂອງຕະຫຼາດຫຼັກຊັບ

**ມາດຕາ 108 ການເຄື່ອນໄຫວຂອງຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບ ສາມາດເຄື່ອນໄຫວໃຫ້ບໍລິການ ດັ່ງນີ້:

1. ຈົດທະບຽນຫຼັກຊັບ;
2. ຊື້-ຂາຍຫຼັກຊັບຈົດທະບຽນ;
3. ສະສາງ ແລະ ຊໍາລະ ທຸລະກໍາຫຼັກຊັບ;
4. ສ້າງ ແລະ ຄຸ້ມຄອງ ກອງທຶນປົກປ້ອງຄວາມສ່ຽງ;

5. ຕິດຕາມການຊື້-ຂາຍຫຼັກຊັບຈົດທະບຽນ;
6. ໃຫ້ບໍລິການອື່ນ.

### ມາດຕາ 109 ການຈົດທະບຽນຫຼັກຊັບ

ບໍລິສັດອອກຈຳໜ່າຍຫຼັກຊັບ ທີ່ມີຈຸດປະສົງນຳຫຼັກຊັບຂອງຕົນໄປຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີເງື່ອນໄຂທາງດ້ານທຶນ, ຜົນການດຳເນີນທຸລະກິດ, ຖານະການເງິນ, ໂຄງສ້າງຂອງຜູ້ຖືຮຸ້ນ ແລະ ເງື່ອນໄຂອື່ນ ຕາມການກຳນົດຂອງຕະຫຼາດຫຼັກຊັບ. ພາຍຫຼັງທີ່ໄດ້ຈົດທະບຽນຫຼັກຊັບແລ້ວ ບໍລິສັດອອກຈຳໜ່າຍຫຼັກຊັບ ຖືວ່າເປັນບໍລິສັດຈົດທະບຽນ ຊຶ່ງຕ້ອງປະຕິບັດຕາມລະບຽບການຂອງຕະຫຼາດຫຼັກຊັບ.

ຄຄຊ ເປັນຜູ້ກຳນົດເງື່ອນໄຂ ກ່ຽວກັບການຈົດທະບຽນຫຼັກຊັບຂອງບໍລິສັດ ທີ່ສ້າງຕັ້ງຂຶ້ນຕາມກົດໝາຍຂອງ ສປປ ລາວ ໃນຕະຫຼາດຫຼັກຊັບຕ່າງປະເທດ ແລະ ການຈົດທະບຽນຫຼັກຊັບຂອງບໍລິສັດຕ່າງປະເທດໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ.

### ມາດຕາ 110 ການຊື້-ຂາຍຫຼັກຊັບ

ການຊື້-ຂາຍຫຼັກຊັບ ແມ່ນ ການສັງລວມຄຳສັ່ງຊື້-ຂາຍຫຼັກຊັບ ແລະ ການຈັບຄູ່ຄຳສັ່ງຊື້-ຂາຍ ຕາມບູລິມະສິດ ທາງດ້ານເວລາ, ລາຄາ ຫຼື ຈຳນວນ.

ການຊື້-ຂາຍຫຼັກຊັບ ຕ້ອງມີລະບົບຈັບຄູ່ຄຳສັ່ງຊື້-ຂາຍທີ່ທັນສະໄໝ, ມີຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

ຫຼັກຊັບທີ່ຊື້-ຂາຍ ໃນຕະຫຼາດຫຼັກຊັບ ຕ້ອງເປັນຫຼັກຊັບທີ່ຈົດທະບຽນໃນຕະຫຼາດຫຼັກຊັບ.

ຜູ້ລົງທຶນຕ່າງປະເທດ ທີ່ມີຈຸດປະສົງຊື້-ຂາຍຫຼັກຊັບ ຕ້ອງປະຕິບັດຕາມລະບຽບການສະເພາະຂອງ ຄຄຊ.

### ມາດຕາ 111 ການສະສາງ ແລະ ຊຳລະ ທຸລະກຳຫຼັກຊັບ

ການສະສາງທຸລະກຳຫຼັກຊັບ ແມ່ນ ການຄຳນວນຜົນສຸດທິ ກ່ຽວກັບຫຼັກຊັບ ແລະ ເງິນຂອງສະມາຊິກ ທີ່ຕ້ອງສົ່ງມອບ ພາຍຫຼັງສິ້ນສຸດການຊື້-ຂາຍຫຼັກຊັບ ໃນແຕ່ລະວັນໂດຍອີງຕາມຜົນການຈັບຄູ່ຄຳສັ່ງຊື້-ຂາຍຫຼັກຊັບ.

ຕະຫຼາດຫຼັກຊັບ ເປັນໃຈກາງໃນການດຳເນີນການສົ່ງມອບຫຼັກຊັບ ແລະ ເງິນ ພ້ອມທັງກຳນົດໃຫ້ສະມາຊິກຂອງຕົນສົ່ງມອບຫຼັກຊັບ ແລະ ເງິນ ຕາມຜົນການຄຳນວນສຸດທິ ຢ່າງຄົບຖ້ວນ ພ້ອມທັງໃຫ້ການຄ້ຳປະກັນ ກ່ຽວກັບການສົ່ງມອບດັ່ງກ່າວ ຕາມຫຼັກການສົ່ງມອບຫຼັກຊັບ ແລະ ຊຳລະເງິນ ໃນເວລາດຽວກັນ.

ການຊຳລະຫຼັກຊັບ ແມ່ນ ໃຫ້ສູນຮັບຝາກຫຼັກຊັບ ເປັນຜູ້ດຳເນີນການ. ສ່ວນການຊຳລະເງິນ ແມ່ນ ທະນາຄານແຫ່ງ ສປປ ລາວ ເປັນຜູ້ດຳເນີນການ ໂດຍຜ່ານທະນາຄານດູແລຊັບສິນ.

ມາດຕາ 112 **ການສ້າງ ແລະ ການຄຸ້ມຄອງກອງທຶນປົກປ້ອງຄວາມສ່ຽງ**

ກອງທຶນປົກປ້ອງຄວາມສ່ຽງ ແມ່ນ ກອງທຶນ ທີ່ສ້າງຂຶ້ນຢູ່ຕະຫຼາດຫຼັກຊັບ ເພື່ອປົກປ້ອງຄວາມສ່ຽງໃນການຊຳລະເງິນ ໃນກໍລະນີ ສະມາຊິກໃດໜຶ່ງ ບໍ່ສາມາດປະຕິບັດພັນທະໃນການສົ່ງມອບເງິນ. ສະມາຊິກຂອງຕະຫຼາດຫຼັກຊັບ ຕ້ອງປະກອບເງິນເຂົ້າໃນກອງທຶນດັ່ງກ່າວ ຕາມລະບຽບການຂອງຕະຫຼາດຫຼັກຊັບ.

ກອງທຶນປົກປ້ອງຄວາມສ່ຽງ ມີຄະນະກຳມະການຄຸ້ມຄອງ ຊຶ່ງປະກອບດ້ວຍຕົວແທນ ຈາກຕະຫຼາດຫຼັກຊັບ ແລະ ສະມາຊິກຂອງຕະຫຼາດຫຼັກຊັບ.

ໃນການຄຸ້ມຄອງກອງທຶນປົກປ້ອງຄວາມສ່ຽງ ຕ້ອງເຮັດບັນຊີສະເພາະແຍກຈາກບັນຊີຊັບສິນຂອງຕະຫຼາດຫຼັກຊັບ ແລະ ຕ້ອງຝາກໄວ້ຢູ່ທະນາຄານໃດໜຶ່ງ ຕາມການກຳນົດຂອງ ຄຄຊ.

ລາຍລະອຽດກ່ຽວກັບການປະກອບທຶນ, ການຄຸ້ມຄອງບໍລິຫານ ແລະ ການນຳໃຊ້ກອງທຶນປົກປ້ອງຄວາມສ່ຽງ ໄດ້ກຳນົດໄວ້ໃນລະບຽບການສະເພາະ ຂອງຕະຫຼາດຫຼັກຊັບ.

ມາດຕາ 113 **ການຕິດຕາມການຊື້-ຂາຍຫຼັກຊັບຈົດທະບຽນ**

ຕະຫຼາດຫຼັກຊັບ ຕ້ອງມີໜ່ວຍງານວິຊາການສະເພາະ ແລະ ມີລະບົບເອເລັກໂຕຣນິກໃນການຕິດຕາມການຊື້-ຂາຍຫຼັກຊັບ ໃນເວລາຊື້-ຂາຍຕົວຈິງ ເພື່ອຊອກຫາການຊື້-ຂາຍ ຫຼັກຊັບທີ່ບໍ່ເປັນທຳ ແລະ ລາຍງານຕໍ່ ຄຄຊ.

ການຊື້-ຂາຍຫຼັກຊັບ ທີ່ບໍ່ເປັນທຳ ປະກອບດ້ວຍ ການປັ່ນຕະຫຼາດ, ການນຳໃຊ້ຂໍ້ມູນພາຍໃນ, ການປອມແປງເອກະສານລາຍງານການເງິນ ແລະ ການກະທຳອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 114 **ການໃຫ້ບໍລິການອື່ນ**

ໃນກໍລະນີຕະຫຼາດຫຼັກຊັບ ມີຈຸດປະສົງສະໜອງການໃຫ້ບໍລິການອື່ນ ນອກຈາກທີ່ໄດ້ບົ່ງໄວ້ໃນມາດຕາ 108 ຂໍ້ 1 ຫາ 5 ຂອງກົດໝາຍສະບັບນີ້ ເຊັ່ນ ປັບປຸງລະບົບການຊື້-ຂາຍ ຕະຫຼາດຫຼັກຊັບ ຕ້ອງສະເໜີ ຕໍ່ ຄຄຊ ເພື່ອພິຈາລະນາການອະນຸຍາດ .

## ໝວດທີ 3
## ສູນຮັບຝາກຫຼັກຊັບ

**ມາດຕາ 115 ສູນຮັບຝາກຫຼັກຊັບ**

ສູນຮັບຝາກຫຼັກຊັບ ແມ່ນ ການຈັດຕັ້ງໜຶ່ງຂອງຕະຫຼາດຫຼັກຊັບ ຊຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຂຶ້ນທະບຽນຫຼັກຊັບ;
2. ຮັບຝາກຫຼັກຊັບ;
3. ໂອນຫຼັກຊັບ;
4. ສ້າງປຶ້ມບັນຊີທະບຽນຜູ້ຖືຄອງຫຼັກຊັບ;
5. ປະຕິບັດໜ້າທີ່ແທນບໍລິສັດຈົດທະບຽນ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການອະນຸຍາດຂອງ ຄຄຊ.

**ມາດຕາ 116 ການຂຶ້ນທະບຽນຫຼັກຊັບ**

ການຂຶ້ນທະບຽນຫຼັກຊັບ ແມ່ນ ການຢັ້ງຢືນກຳມະສິດ ຫຼື ສິດອື່ນຕໍ່ຫຼັກຊັບ ຜ່ານການຊື້-ຂາຍ ຫຼື ຜ່ານການໂອນຫຼັກຊັບ.

**ມາດຕາ 117 ການຮັບຝາກຫຼັກຊັບ**

ບໍລິສັດຈົດທະບຽນ ຕ້ອງນຳຫຼັກຊັບຂອງຕົນໄປຝາກໄວ້ຢູ່ສູນຮັບຝາກຫຼັກຊັບ ກ່ອນດຳເນີນການຊື້-ຂາຍຫຼັກຊັບ ພ້ອມທັງມອບສິດໃຫ້ສູນຮັບຝາກຫຼັກຊັບ ເປັນຕົວແທນໃນການຂຶ້ນທະບຽນຫຼັກຊັບ ແລະ ຄຸ້ມຄອງປຶ້ມບັນຊີທະບຽນຜູ້ຖືຄອງຫຼັກຊັບ.

ບໍລິສັດອອກຈຳໜ່າຍຫຼັກຊັບ ສາມາດນຳຫຼັກຊັບຂອງຕົນ ໄປຂຶ້ນທະບຽນກັບສູນຮັບຝາກຫຼັກຊັບ ເພື່ອໃຫ້ສູນດັ່ງກ່າວ ປະຕິບັດໜ້າທີ່ແທນຕົນ ຕາມການຕົກລົງກັນ.

**ມາດຕາ 118 ການໂອນຫຼັກຊັບ**

ການໂອນຫຼັກຊັບ ແມ່ນ ການປ່ຽນແປງກຳມະສິດ ກ່ຽວກັບຫຼັກຊັບຂອງ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຈາກຜູ້ຖືຄອງຫຼັກຊັບໜຶ່ງໄປໃຫ້ຜູ້ຖືຄອງຫຼັກຊັບອື່ນ ດ້ວຍເຫດຜົນໃດໜຶ່ງ ທີ່ບໍ່ຜ່ານຂັ້ນຕອນການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບ. ການໂອນຫຼັກຊັບຕ້ອງປະຕິບັດຕາມວິທີການ ແລະ ຂັ້ນຕອນ ທີ່ ຄຄຊ ໄດ້ກຳນົດໄວ້.

ການໂອນຫຼັກຊັບ ມີຜົນສັກສິດ ນັບແຕ່ວັນໄດ້ບັນທຶກເຂົ້າໃນບັນຊີ ຂອງສູນຮັບຝາກຫຼັກຊັບ ຫຼື ນັບແຕ່ວັນໄດ້ບັນທຶກເຂົ້າໃນປຶ້ມບັນຊີທະບຽນຜູ້ຖືຄອງຫຼັກຊັບ.

**ມາດຕາ 119 ການສ້າງປຶ້ມບັນຊີທະບຽນຜູ້ຖືຄອງຫຼັກຊັບ**

ສູນຮັບຝາກຫຼັກຊັບ ຕ້ອງສ້າງປຶ້ມບັນຊີທະບຽນຜູ້ຖືຄອງຫຼັກຊັບ ຕາມການສະເໜີຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງບໍລິສັດດັ່ງກ່າວ ເຊັ່ນ ຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ, ຈ່າຍເງິນປັນຜົນ ແລະ ອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ.

**ມາດຕາ 120 ການປະຕິບັດໜ້າທີ່ແທນບໍລິສັດຈົດທະບຽນ**

ສູນຮັບຝາກຫຼັກຊັບ ຕ້ອງປະສານສົມທົບກັບບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນໃນການສະໜອງບໍລິການໃຫ້ແກ່ບໍລິສັດຈົດທະບຽນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນ ເຊັ່ນ ສົ່ງຈົດໝາຍເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ພ້ອມດ້ວຍເອກະສານຕ່າງໆ, ຈ່າຍເງິນປັນຜົນ ຫຼື ດອກເບ້ຍຮຸ້ນກູ້.

**ມາດຕາ 121 ສະມາຊິກຂອງສູນຮັບຝາກຫຼັກຊັບ**

**ສະມາຊິກຂອງສູນຮັບຝາກຫຼັກຊັບ ປະກອບດ້ວຍ:**

1. ບໍລິສັດຫຼັກຊັບ;
2. ທະນາຄານດູແລຊັບສິນ;
3. ບໍລິສັດບໍລິຫານຊັບສິນ;
4. ບໍລິສັດຈົດທະບຽນ;
5. ບໍລິສັດອອກຈຳໜ່າຍຫຼັກຊັບ;
6. ສູນຮັບຝາກຫຼັກຊັບ ຫຼື ທະນາຄານດູແລຊັບສິນ ຂອງຕ່າງປະເທດ;
7. ສະມາຊິກອື່ນ ຕາມການກຳນົດຂອງ ຄຄຊ.

ສະມາຊິກຂອງສູນຮັບຝາກຫຼັກຊັບ ຕ້ອງປະຕິບັດ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງສູນຮັບຝາກຫຼັກຊັບ.

**ມາດຕາ 122 ການລົ້ມລະລາຍຂອງສະມາຊິກຂອງສູນຮັບຝາກຫຼັກຊັບ**

ສະມາຊິກຂອງສູນຮັບຝາກຫຼັກຊັບ ທີ່ຖືກຮ້ອງຟ້ອງລົ້ມລະລາຍ ຫຼື ຖືກ ຄຄຊ ສັ່ງໂຈະການເຄື່ອນໄຫວຊົ່ວຄາວ ສູນຮັບຝາກຫຼັກຊັບ ຕ້ອງດຳເນີນການຊຳລະຫຼັກຊັບ ທີ່ຍັງຄົງຄ້າງໃຫ້ສຳເລັດ.

## ພາກທີ VI
## ການລາຍງານ, ການເປີດເຜີຍ ແລະ ການເກັບຮັກສາຂໍ້ມູນ

### ມາດຕາ 123 ການລາຍງານ

ຕະຫຼາດຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ກອງທຶນຮ່ວມ, ສະຖາບັນສີກາງດ້ານຫຼັກຊັບ ຕ້ອງປະຕິບັດລະບອບການລາຍງານໃຫ້ ຄຄຊ ຕາມລະບຽບການ ຂອງ ຄຄຊ. ການລາຍງານ ຕ້ອງຮັບປະກັນຄວາມຄົບຖ້ວນ, ຖືກຕ້ອງ, ຈະແຈ້ງ ແລະ ທັນເວລາ.

### ມາດຕາ 124 ການເປີດເຜີຍຂໍ້ມູນ

ຕະຫຼາດຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ກອງທຶນຮ່ວມ ແລະ ສະຖາບັນສີກາງດ້ານຫຼັກຊັບ ຕ້ອງປະຕິບັດລະບອບການເປີດເຜີຍຂໍ້ມູນ ຕາມລະບຽບການ ຂອງ ຄຄຊ. ຂໍ້ມູນທີ່ເປີດເຜີຍຕໍ່ມວນຊົນ ຕ້ອງມີຄວາມເປັນຈິງ ແລະ ເຊື່ອຖືໄດ້.

### ມາດຕາ 125 ການລາຍງານຂໍ້ມູນຂອງບຸກຄົນພາຍໃນ

ບຸກຄົນພາຍໃນ ແມ່ນ ບຸກຄົນທີ່ສາມາດເຂົ້າເຖິງຂໍ້ມູນພາຍໃນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ຊຶ່ງປະກອບດ້ວຍ:

1. ຜູ້ມີອຳນາດຄວບຄຸມ, ຜູ້ກວດກາ, ຄະນະພະແນກ ແລະ ພະນັກງານ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ສະຖາບັນສີກາງດ້ານຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
2. ຜູ້ບໍລິຫານ ແລະ ພະນັກງານ ຂອງ ຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການອອກຈຳໜ່າຍຫຼັກຊັບ;
3. ບຸກຄົນອື່ນ ຕາມການກຳນົດຂອງ ຄຄຊ.

ບຸກຄົນພາຍໃນ ຕ້ອງລາຍງານຂໍ້ມູນ ກ່ຽວກັບການຖືຄອງ ແລະ ການຊື້-ຂາຍ ຫຼັກຊັບຂອງຕົນ ໃຫ້ແກ່ການຈັດຕັ້ງຂອງຕົນ, ຄຄຊ ແລະ ຕະຫຼາດຫຼັກຊັບ ຕາມລະບຽບການ.

### ມາດຕາ 126 ການເກັບຮັກສາຂໍ້ມູນ

ຕະຫຼາດຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ກອງທຶນຮ່ວມ, ສະຖາບັນສີກາງດ້ານຫຼັກຊັບ ຕ້ອງເກັບຮັກສາຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງຕົນ ຢ່າງໜ້ອຍ ສິບປີ ຕາມລະບຽບການຂອງ ຄຄຊ.

## ພາກທີ VII
## ການສືບສວນ-ສອບສວນຄະດີກ່ຽວກັບຫຼັກຊັບ

**ມາດຕາ 127 ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ**

**ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນຄະດີກ່ຽວກັບຫຼັກຊັບ ມີ ດັ່ງນີ້:**

1. ມີການຮ້ອງຟ້ອງ ຫຼື ການແຈ້ງຄວາມ ຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການລະເມີດ ທີ່ເປັນການກະທຳຜິດທາງອາຍາໃນວຽກງານຫຼັກຊັບ;
2. ມີການເຂົ້າມອບຕົວຂອງຜູ້ກະທຳຜິດ;
3. ພົບເຫັນ ຮ່ອງຮອຍຂອງການກະທຳຜິດ ເຊັ່ນ ຂໍ້ມູນ ແລະ ຫຼັກຖານ ກ່ຽວກັບການປັ່ນຕະຫຼາດ, ການນຳໃຊ້ຂໍ້ມູນພາຍໃນ ແລະ ການປອມແປງເອກະສານລາຍງານການເງິນ.

**ມາດຕາ 128 ຂັ້ນຕອນການສືບສວນ-ສອບສວນ**

**ຂັ້ນຕອນການສືບສວນ-ສອບສວນຄະດີກ່ຽວກັບຫຼັກຊັບ ມີ ດັ່ງນີ້:**

1. ອອກຄຳສັ່ງເປີດການສືບສວນ- ສອບສວນ;
2. ດຳເນີນການສືບສວນ-ສອບສວນ;
3. ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ສົ່ງໃຫ້ໄອຍະການປະຊາຊົນ.

**ມາດຕາ 129 ການອອກຄຳສັ່ງເປີດການສືບສວນ-ສອບສວນ**

ຄຄຊ ເປັນຜູ້ອອກຄຳສັ່ງເປີດການສືບສວນ-ສອບສວນ ຖ້າເຫັນວ່າມີສາເຫດທີ່ພາໃຫ້ມີການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 127 ຂອງກົດໝາຍສະບັບນີ້ ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ. ເນື້ອໃນຂອງຄຳສັ່ງນັ້ນ ຕ້ອງບອກວັນ, ເວລາ ແລະ ສະຖານທີ່ອອກຄຳສັ່ງ, ຊື່ ແລະ ນາມສະກຸນ, ໜ້າທີ່ຕຳແໜ່ງຂອງຜູ້ອອກຄຳສັ່ງ, ສະຖານການກະທຳຜິດ ແລະ ມາດຕາທີ່ກ່ຽວຂ້ອງຂອງກົດໝາຍອາຍາ, ກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ໃນກໍລະນີ ທີ່ບໍ່ມີຂໍ້ມູນໜັກແໜ້ນໃຫ້ແກ່ການເປີດການສືບສວນ-ສອບສວນ ຫຼື ບໍ່ມີສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນນັ້ນ ຄຄຊ ຕ້ອງອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ ພ້ອມທັງແຈ້ງຄຳສັ່ງດັ່ງກ່າວໃຫ້ບຸກຄົນ ແລະ ການຈັດຕັ້ງທີ່ຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນຊາບ.

ຄຳສັ່ງບໍ່ເປີດການສືບສວນ-ສອບສວນ ຂອງ ຄຄຊ ນັ້ນ ຄູ່ຄວາມສາມາດຂໍອຸທອນຕໍ່ ໄອຍະການປະຊາຊົນແຂວງ, ນະຄອນ ໄດ້ພາຍໃນກຳນົດເວລາ ເຈັດວັນ ນັບແຕ່ວັນຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ.

### ມາດຕາ 130 **ການດຳເນີນການສືບສວນ-ສອບສວນ**

ການດຳເນີນການສືບສວນ-ສອບສວນ ຄະດີກ່ຽວກັບຫຼັກຊັບ ຕ້ອງນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ.

### ມາດຕາ 131 **ກຳນົດເວລາການສືບສວນ-ສອບສວນ**

ຄຄຊ ຕ້ອງດຳເນີນການສືບສວນ-ສອບສວນ, ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ພ້ອມດ້ວຍຂອງກາງ ສົ່ງໃຫ້ໄອຍະການປະຊາຊົນ ພາຍໃນກຳນົດເວລາ ສອງເດືອນ ສຳລັບການກະທຳຜິດ ໃນສະຖານໂທສານຸໂທດ ແລະ ສາມເດືອນ ໃນສະຖານຄະລຸໂທດ ນັບແຕ່ວັນອອກຄຳສັ່ງເປີດການສືບສວນ-ສອບສວນ ເປັນຕົ້ນໄປ.

ຖ້າເຫັນວ່າມີຄວາມຈຳເປັນຕ້ອງສືບຕໍ່ດຳເນີນການສືບສວນ-ສອບສວນນັ້ນ ຫົວໜ້າອົງການໄອຍະການປະຊາຊົນ ອາດຈະຕໍ່ກຳນົດເວລາໃນການສືບສວນ-ສອບສວນ ໄດ້ອີກເທື່ອລະສອງເດືອນ ແຕ່ລວມທັງໝົດບໍ່ໃຫ້ເກີນ ຫົກເດືອນ ສຳລັບການກະທຳຜິດ ໃນສະຖານໂທສານຸໂທດ ແລະ ເທື່ອລະສາມເດືອນ ແຕ່ລວມທັງໝົດບໍ່ໃຫ້ເກີນ ໜຶ່ງປີ ສຳລັບການກະທຳຜິດ ໃນສະຖານຄະລຸໂທດ ຕາມການສະເໜີຂອງ ຄຄຊ. ການສະເໜີຂໍຕໍ່ກຳນົດເວລາແຕ່ລະເທື່ອ ໃຫ້ດຳເນີນສິບຫ້າວັນ ກ່ອນໝົດກຳນົດການສືບສວນ-ສອບສວນ.

ໃນກໍລະນີ ທີ່ມີການສົ່ງສຳນວນຄະດີຄືນໃຫ້ ຄຄຊ ດຳເນີນການສືບສວນ-ສອບສວນ ເພີ່ມເຕີມນັ້ນ ກຳນົດເວລາການສືບສວນ-ສອບສວນເພີ່ມເຕີມ ແມ່ນ ບໍ່ໃຫ້ເກີນ ສອງເດືອນ ນັບແຕ່ວັນ ຄຄຊ ໄດ້ຮັບສຳນວນຄະດີ ເປັນຕົ້ນໄປ.

ໃນກໍລະນີ ທີ່ມີການສືບສວນ-ສອບສວນຄືນ ຄະດີທີ່ຖືກໂຈະ ຫຼື ຊັດມ້ຽນໄວ້ນັ້ນ ການສືບສວນ-ສອບສວນ ໃຫ້ປະຕິບັດຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນວັກ 1 ແລະ ວັກ 2 ຂອງມາດຕານີ້ ນັບແຕ່ວັນອອກຄຳສັ່ງໃຫ້ສືບສວນ-ສອບສວນຄະດີຄືນ ເປັນຕົ້ນໄປ.

ໃນການອະນຸຍາດ ຫຼື ບໍ່ອະນຸຍາດໃຫ້ຕໍ່ກຳນົດເວລາການສືບສວນ-ສອບສວນນັ້ນ ຫົວໜ້າອົງການໄອຍະການປະຊາຊົນ ຕ້ອງອອກຄຳສັ່ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ພາຍໃນ ສີ່ສິບແປດ ຊົ່ວໂມງ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ.

ມາດຕາ 132 **ການສະຫຼຸບ ແລະ ການປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ**

ພາຍຫຼັງສິ້ນສຸດການສືບສວນ-ສອບສວນ ຖ້າຫາກມີຂໍ້ມູນຫຼັກຖານທີ່ໜັກແໜ້ນວ່າການລະເມີດນັ້ນ ເປັນການກະທຳຜິດທາງອາຍາກ່ຽວກັບຫຼັກຊັບ ຄຄຊ ຕ້ອງສະຫຼຸບການສືບສວນ-ສອບສວນ, ປະກອບສຳນວນຄະດີ ແລ້ວສົ່ງໃຫ້ອົງການໄອຍະການປະຊາຊົນ ພິຈາລະນາສັ່ງຟ້ອງຂຶ້ນສານ.

ມາດຕາ 133 **ເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ**

ເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ ແມ່ນ ພະນັກງານສັງກັດລັດ ທີ່ຖືກແຕ່ງຕັ້ງ ໂດຍ ຄຄຊ ມີໜ້າທີ່ສືບສວນ-ສອບສວນ ຕາມກົດໝາຍສະບັບນີ້ ແລະ ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ.

ສຳລັບການຈັດຕັ້ງ, ການເຄື່ອນໄຫວ ແລະ ມາດຕະຖານຂອງເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ມາດຕາ 134 **ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ**

**ເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຮັບ ແລະ ບັນທຶກການແຈ້ງຄວາມ, ການສະເໜີ, ການລາຍງານ ຫຼື ການຮ້ອງຟ້ອງກ່ຽວກັບຄະດີຫຼັກຊັບ;
2. ອອກໝາຍຮຽກ, ໝາຍເຊີນ, ອອກຄຳສັ່ງນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມແຕ່ລະກໍລະນີ;
3. ເອົາຄຳໃຫ້ການຂອງຜູ້ຖືກສົງໄສ, ຜູ້ຖືກຫາ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ພະຍານ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ;
4. ເກັບກຳຂໍ້ມູນກ່ຽວກັບການເຄື່ອນໄຫວບັນຊີເງິນຝາກ ແລະ ບັນຊີຫຼັກຊັບຂອງຜູ້ຖືກຫາ ຈາກທະນາຄານດູແລຊັບສິນ, ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ໜ່ວຍບໍລິການໂອນເງິນ ແລະ ສະຖາບັນການເງິນອື່ນ;
5. ຊັນນະສູດບ່ອນກະທຳຜິດ, ກວດກາອຸປະກອນ, ລະບົບ ແລະ ພິສູດເອກະສານ ແລະ ຂໍ້ມູນທຸກຮູບແບບທີ່ຕິດພັນກັບຫຼັກຊັບ;
6. ພາຕົວ, ກັກຕົວ, ປ່ອຍຕົວ ຜູ້ຖືກຫາ ຕາມຄຳສັ່ງຂອງ ຄຄຊ;
7. ຊອກຫາ, ຈັບຕົວ, ພາຕົວ, ປ່ອຍຕົວພາງ ຜູ້ຖືກຫາ ຕາມຄຳສັ່ງຂອງ ຫົວໜ້າອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ;
8. ແຈ້ງຂໍ້ກ່າວຫາ, ສິດ ແລະ ພັນທະ ໃຫ້ຜູ້ຖືກສົງໄສ, ຜູ້ຖືກຫາ;

9. ປະຕິບັດຄຳສັ່ງ ແລະ ລາຍງານສະພາບການ ກ່ຽວກັບການດຳເນີນຄະດີຫຼັກຊັບ ຕໍ່ ຄຄຊ;

10. ເຮັດບົດສະຫຼຸບ ລາຍງານ ແລະ ປະກອບສຳນວນຄະດີຫຼັກຊັບ ສະເໜີຕໍ່ ຄຄຊ;

11. ຍຶດ ແລະ ເກັບຮັກສາຂອງກາງ ທີ່ພົວພັນກັບຄະດີຫຼັກຊັບ;

12. ສະຫຼຸບ ແລະ ລາຍງານກ່ຽວກັບຜົນຂອງການສືບສວນ-ສອບສວນ ຕໍ່ຫົວໜ້າ ຄຄຊ;

13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມຄຳສັ່ງຂອງ ຄຄຊ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ໃນການດຳເນີນຄະດີນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ ຕ້ອງຮັບຜິດຊອບ ຕໍ່ໜ້າກົດໝາຍ ແລະ ຄຄຊ.

## ພາກທີ VIII
## ຂໍ້ຫ້າມ

### ມາດຕາ 135 ຂໍ້ຫ້າມທົ່ວໄປ

**ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ບໍ່ວ່າທາງກົງ ຫຼື ທາງອ້ອມ ດັ່ງນີ້:**

1. ປັ່ນຕະຫຼາດ;
2. ນຳໃຊ້ຂໍ້ມູນພາຍໃນ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ;
3. ສ້າງ ແລະ ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ທີ່ມີຜົນກະທົບຕໍ່ການຕັດສິນໃຈຂອງຜູ້ລົງທຶນ ແລະ ເຮັດໃຫ້ຕະຫຼາດຫຼັກຊັບມີຄວາມຜັນຜວນ;
4. ຂັດຂວາງ ຫຼື ບໍ່ໃຫ້ການຮ່ວມມືໃນການປະຕິບັດໜ້າທີ່ຂອງ ອົງການຄຸ້ມຄອງ ແລະ ອົງການກວດກາວຽກງານຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
5. ສວຍໃຊ້ທຸລະກິດຫຼັກຊັບ ຫຼື ຊື້-ຂາຍຫຼັກຊັບ ເພື່ອຟອກເງິນ;
6. ນຳໃຊ້, ໃຫ້ໃຊ້ ບັນຊີ ແລະ ຊື່ ຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ ເພື່ອຊື້-ຂາຍຫຼັກຊັບ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

### ມາດຕາ 136 ຂໍ້ຫ້າມ ສຳລັບ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

**ຫ້າມ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:**

1. ອອກຈຳໜ່າຍຫຼັກຊັບໂດຍບໍ່ໄດ້ຮັບອະນຸຍາດ ຈາກ ຄຄຊ;
2. ອອກຈຳໜ່າຍຫຼັກຊັບ ບົນພື້ນຖານການສະໜອງຂໍ້ມູນບໍ່ຖືກຕ້ອງກັບຄວາມເປັນຈິງ ຫຼື ຂໍ້ມູນເທັດ ທຸກຮູບແບບ;

3. ນຳໃຊ້ ເງິນຈອງຊື້ຫຼັກຊັບ ຫຼື ທຶນທີ່ລະດົມໄດ້ ກ່ອນໄດ້ຮັບການຢັ້ງຢືນຜົນສຳເລັດການອອກຈຳໜ່າຍຫຼັກຊັບ ຈາກ ຄຄຊ, ນຳໃຊ້ທຶນທີ່ລະດົມໄດ້ ບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ປ່ຽນແປງຈຸດປະສົງການນຳໃຊ້ທຶນ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 137 ຂໍ້ຫ້າມ ສຳລັບ ບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ**

ຫ້າມ ບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ໃຫ້ບໍລິການຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ຫຼື ເປັນຕົວແທນໃນການອອກຈຳໜ່າຍຫຼັກຊັບ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ;

2. ໃຫ້ບໍລິການຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ຫຼື ເປັນທີ່ປຶກສາທາງດ້ານການເງິນໃຫ້ແກ່ບໍລິສັດທີ່ຖືຮຸ້ນໃນບໍລິສັດຕົນ ຫຼື ບໍລິສັດທີ່ຕົນຖືຮຸ້ນ ຫຼາຍກວ່າ ສິບສ່ວນຮ້ອຍ ຂອງຮຸ້ນທັງໝົດ;

3. ໂຄສະນາຈຳໜ່າຍຫຼັກຊັບ ໂດຍບໍ່ສອດຄ່ອງກັບເນື້ອໃນ ຕາມທີ່ໄດ້ບົ່ງໄວ້ໃນໜັງສືຊວນຊື້ ຫຼື ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ ຊຶ່ງເຮັດໃຫ້ຜູ້ລົງທຶນເຂົ້າໃຈຜິດ;

4. ໃຫ້ການຄ້ຳປະກັນການຈຳໜ່າຍຫຼັກຊັບ ທີ່ບໍ່ເປັນທຳ ແລະ ບໍ່ສອດຄ່ອງກັບລະບຽບກົດໝາຍ;

5. ສ້າງ, ພັດທະນາ ແລະ ສະໜອງ ຜະລິດຕະພັນດ້ານຫຼັກຊັບ ໃຫ້ແກ່ມວນຊົນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ຄຄຊ;

6. ຊື້-ຂາຍຫຼັກຊັບ, ນຳໃຊ້ເງິນ ຫຼື ຫຼັກຊັບ ຂອງລູກຄ້າໂດຍບໍ່ໄດ້ຮັບອະນຸຍາດ ຈາກລູກຄ້າ;

7. ຍຸຍົງໃຫ້ລູກຄ້າຕັດສິນໃຈຊື້-ຂາຍຫຼັກຊັບ ທີ່ບໍ່ສົມເຫດສົມຜົນ ເພື່ອຜົນປະໂຫຍດຂອງຕົນ ຫຼື ໃຫ້ຄຳໝັ້ນສັນຍາ ກ່ຽວກັບຜົນຕອບແທນຈາກການຊື້-ຂາຍຫຼັກຊັບ;

8. ເຜີຍແຜ່, ນຳໃຊ້ຂໍ້ມູນ ຂອງລູກຄ້າ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ ເວັ້ນເສຍແຕ່ການສະໜອງຂໍ້ມູນ ໃຫ້ແກ່ອົງການທີ່ມີສິດອຳນາດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

9. ຖືເອົາບູລິມະສິດໃນການຊື້-ຂາຍຫຼັກຊັບຂອງຕົນ ສູງກວ່າຂອງລູກຄ້າ;

10. ທວງເອົາ, ໃຫ້ ຫຼື ຮັບ ສິນບົນ ຫຼື ສິ່ງຕອບແທນອື່ນ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 138 ຂໍ້ຫ້າມ ສໍາລັບ ບໍລິສັດບໍລິຫານຊັບສິນ ແລະ ຜູ້ບໍລິຫານກອງທຶນຮ່ວມ**

ຫ້າມ ບໍລິສັດບໍລິຫານຊັບສິນ ແລະ ຜູ້ບໍລິຫານກອງທຶນຮ່ວມ ມີ ພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ສ້າງຕັ້ງກອງທຶນຮ່ວມ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຄຄຊ;
2. ລະດົມທຶນ ກ່ອນໄດ້ຮັບອະນຸຍາດ ຈາກ ຄຄຊ;
3. ກູ້ຊັບສິນໃຫ້ກອງທຶນຮ່ວມ ຫຼື ເອົາຊັບສິນຂອງກອງທຶນຮ່ວມໄປປ່ອຍກູ້ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ;
4. ເອົາຊັບສິນຂອງກອງທຶນຮ່ວມໜຶ່ງ ໄປລົງທຶນໃນກອງທຶນຮ່ວມອື່ນ ທີ່ຕົນບໍລິຫານ, ຊື້ຮຸ້ນ ຫຼື ຮຸ້ນກູ້ ຂອງທະນາຄານດູແລຊັບສິນ ທີ່ຕົນໃຊ້ບໍລິການ;
5. ເອົາຊັບສິນຂອງກອງທຶນຮ່ວມ ໄປຊື້ຫຼັກຊັບຂອງບໍລິສັດໃດໜຶ່ງ ທີ່ມີອໍານາດຄວບຄຸມໃນບໍລິສັດບໍລິຫານຊັບສິນ ຫຼື ທະນາຄານດູແລຊັບສິນ ທີ່ກ່ຽວຂ້ອງກັບກອງທຶນຮ່ວມ ນັ້ນ;
6. ນໍາໃຊ້ທຶນທີ່ລະດົມໄດ້ກ່ອນໄດ້ຮັບອະນຸຍາດ ຈາກ ຄຄຊ ຫຼື ລົງທຶນເຂົ້າໃນກິດຈະການ ທີ່ບໍ່ໄດ້ຮັບອະນຸຍາດ ຈາກ ຄຄຊ;
7. ນໍາໃຊ້ຊັບສິນຂອງກອງທຶນຮ່ວມຄໍ້າປະກັນການຂໍກູ້ຂອງຕົນ, ບຸກຄົນ ຫຼື ນິຕິບຸກຄົນ ແລະ ຊໍາລະໜີ້ສິນ ລວມທັງ ໃນກໍລະນີ ບໍລິສັດບໍລິຫານຊັບສິນ ຢູ່ໃນສະພາວະລົ້ມລະ ລາຍ;
8. ລວມບັນຊີ ຊັບສິນຂອງຕົນ ຫຼື ຊັບສິນຂອງບຸກຄົນອື່ນ ເຂົ້າໃນບັນຊີຊັບສິນຂອງກອງທຶນຮ່ວມ ທີ່ຕົນບໍລິຫານ;
9. ບໍລິຫານຊັບສິນຂອງກອງທຶນຮ່ວມ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໂດຍບໍ່ເປັນທໍາ;
10. ນໍາໃຊ້ຊັບສິນຂອງກອງທຶນຮ່ວມ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ ທີ່ບໍ່ແມ່ນຜູ້ຖືໜ່ວຍລົງທຶນຂອງກອງທຶນຮ່ວມນັ້ນ;
11. ສ້າງລາຍຮັບໃຫ້ຜູ້ຖືໜ່ວຍລົງທຶນ ດ້ວຍການລະເມີດລະບຽບກົດໝາຍ;
12. ທວງເອົາ, ໃຫ້ ຫຼື ຮັບ ສິນບົນ ຫຼື ສິ່ງຕອບແທນອື່ນ;
13. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

ສໍາລັບຜູ້ບໍລິຫານ ບໍລິສັດບໍລິຫານຊັບສິນ ແລະ ຜູ້ບໍລິຫານກອງທຶນຮ່ວມຍັງຫ້າມດໍາລົງຕໍາແໜ່ງໃດໜຶ່ງ ໃນທະນາຄານດູແລຊັບສິນ ຫຼື ບໍລິສັດບໍລິຫານຊັບສິນອື່ນ ຫຼື ມີສ່ວນຮ່ວມໃນທຸລະກໍາຫຼັກຊັບ ຫຼື ທຸລະກໍາອື່ນ ທີ່ສ້າງຜົນເສຍຫາຍໃຫ້ແກ່ຊັບສິນຂອງກອງທຶນຮ່ວມ ແລະ ຜົນປະໂຫຍດຂອງຜູ້ຖືໜ່ວຍລົງທຶນ.

**ມາດຕາ 139 ຂໍ້ຫ້າມ ສຳລັບ ທະນາຄານດູແລຊັບສິນ**

**ຫ້າມ ທະນາຄານດູແລຊັບສິນ, ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ມີພຶດຕິກຳໃດໜຶ່ງ ດັ່ງນີ້:**

1. ປ່ອຍກູ້ ໃຫ້ບໍລິສັດບໍລິຫານຊັບສິນ ທີ່ຕົນໃຫ້ບໍລິການ;
2. ຖືຮຸ້ນ ໃນບໍລິສັດບໍລິຫານຊັບສິນ ທີ່ຕົນໃຫ້ບໍລິການ ສູງກວ່າອັດຕາສ່ວນທີ່ ຄລຊ ໄດ້ກຳນົດ;
3. ລົງທຶນ ຫຼື ຊື້-ຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ທີ່ຕົນໃຫ້ບໍລິການ;
4. ໃຫ້ບໍລິການ ດູແລຊັບສິນ ແກ່ບໍລິສັດບໍລິຫານຊັບສິນ ທີ່ຖືຮຸ້ນໃນທະນາຄານຕົນ ຫຼື ທີ່ທະນາຄານຕົນຖືຮຸ້ນ;
5. ລວມບັນຊີຊັບສິນຂອງລູກຄ້າເຂົ້າກັນ ຫຼື ລວມບັນຊີຊັບສິນຂອງລູກຄ້າເຂົ້າກັບບັນຊີຊັບສິນຂອງຕົນ;
6. ນຳໃຊ້ຊັບສິນຂອງກອງທຶນຮ່ວມ ຊຳລະໜີ້ສິນທະນາຄານດູແລຊັບສິນ ລວມທັງໃນກໍລະນີທີ່ຢູ່ໃນສະພາວະລົ້ມລະລາຍ;
7. ທວງເອົາ, ໃຫ້ ຫຼື ຮັບ ສິນບົນ ຫຼື ສິ່ງຕອບແທນອື່ນ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

ສຳລັບ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ຂອງທະນາຄານດັ່ງກ່າວ ຍັງຫ້າມເປັນສະມາຊິກສະພາບໍລິຫານ ຂອງບໍລິສັດບໍລິຫານຊັບສິນທີ່ຕົນໃຫ້ບໍລິການ.

**ມາດຕາ 140 ຂໍ້ຫ້າມ ສຳລັບ ບໍລິສັດກວດສອບ ແລະ ຜູ້ກວດສອບ**

**ຫ້າມ ບໍລິສັດກວດສອບ ແລະ ຜູ້ກວດສອບ ໃຫ້ບໍລິການກວດສອບ ແກ່ເປົ້າໝາຍກວດສອບ ໃນປີການບັນຊີ ທີ່ຕົນໄດ້ໃຫ້ບໍລິການໃດໜຶ່ງ ດັ່ງນີ້:**

1. ບໍລິການທາງດ້ານການບັນຊີ ລວມທັງການສ້າງເອກະສານລາຍງານການເງິນ;
2. ອອກແບບ ແລະ ສ້າງລະບົບຂໍ້ມູນທາງດ້ານການເງິນ;
3. ປະເມີນມູນຄ່າ ຊັບສິນ, ໜີ້ສິນ ແລະ ທຶນ;
4. ຄຳນວນຄ່າສະເພາະທາງສະຖິຕິ;
5. ເປັນຜູ້ກວດສອບພາຍໃນ;
6. ໃຫ້ຄຳປຶກສາດ້ານການບໍລິຫານ, ການດຳເນີນງານ ແລະ ບຸກຄະລາກອນ;
7. ເປັນນາຍໜ້າ ຫຼື ທີ່ປຶກສາ ດ້ານການລົງທຶນ;
8. ທວງເອົາ, ໃຫ້ ຫຼື ຮັບ ສິນບົນ ຫຼື ສິ່ງຕອບແທນອື່ນ;
9. ເປັນທີ່ປຶກສາດ້ານກົດໝາຍ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

ມາດຕາ 141 **ຂໍ້ຫ້າມ ສໍາລັບ ຕະຫຼາດຫຼັກຊັບ**

**ຫ້າມ ຕະຫຼາດຫຼັກຊັບ, ສະມາຊິກສະພາບໍລິຫານ ແລະ ຄະນະອໍານວຍການ ມີ ພຶດຕິກໍາໃດໜຶ່ງ ດັ່ງນີ້:**

1. ເຄື່ອນໄຫວ ແລະ ໂອນກິດຈະການໃດໜຶ່ງ ຂອງຕະຫຼາດຫຼັກຊັບ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຄຄຊ;
2. ລົງທຶນໃນກິດຈະການ ຫຼື ວິສາຫະກິດອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຄຄຊ;
3. ແຈ້ງ ຫຼື ເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງ ຊຶ່ງສົ່ງຜົນກະທົບຕໍ່ຫຼັກຊັບ, ຜູ້ລົງທຶນ ແລະ ຕະຫຼາດຫຼັກຊັບ;
4. ເປີດເຜີຍ ຫຼື ນໍາໃຊ້ຂໍ້ມູນຂອງສະມາຊິກ ຫຼື ສະມາຊິກຂອງສູນຮັບຝາກຫຼັກຊັບ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ;
5. ເປີດການຊື້-ຂາຍຫຼັກຊັບ ທີ່ຢູ່ໃນໄລຍະຫ້າມຊື້-ຂາຍ ຫຼື ໂອນ;
6. ນໍາໃຊ້ບັນຊີຫຼັກຊັບຂອງສະມາຊິກ ແລະ ສະມາຊິກຂອງສູນຮັບຝາກຫຼັກຊັບ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນ;
7. ທວງເອົາ, ໃຫ້ ຫຼື ຮັບ ສິນບົນ ຫຼື ສິ່ງຕອບແທນອື່ນ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

ສໍາລັບ ສະມາຊິກສະພາບໍລິຫານ ແລະ ຄະນະອໍານວຍການ ຂອງຕະຫຼາດຫຼັກຊັບ ດັ່ງກ່າວ ຍັງຫ້າມເປັນສະມາຊິກສະພາບໍລິຫານຂອງ ບໍລິສັດຈົດທະບຽນ ແລະ ສະຖາບັນສື່ກາງດ້ານຫຼັກຊັບ.

ມາດຕາ 142 **ຂໍ້ຫ້າມ ສໍາລັບ ຜູ້ບໍລິຫານ ແລະ ພະນັກງານຂອງ ຄຄຊ**

**ຫ້າມ ຜູ້ບໍລິຫານ ແລະ ພະນັກງານຂອງ ຄຄຊ ມີ ພຶດຕິກໍາໃດໜຶ່ງ ດັ່ງນີ້:**

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຢູ່ໃນການຄຸ້ມຄອງຂອງຕົນ ກ່ອນໄດ້ຮັບອະນຸຍາດ;
2. ດໍາລົງຕໍາແໜ່ງໃດໜຶ່ງ ຫຼື ເປັນທີ່ປຶກສາຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຢູ່ໃນການຄຸ້ມຄອງຂອງຕົນ;
3. ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນ;
4. ໃຫ້ຂໍ້ມູນກ່ຽວກັບວຽກງານຫຼັກຊັບ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ແກ່ມວນຊົນ;
5. ສະໜອງ ແລະ ນໍາໃຊ້ ຂໍ້ມູນກ່ຽວກັບວຽກງານຫຼັກຊັບທີ່ຕົນຮູ້ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນ ຫຼັງຈາກອອກຈາກ ຄຄຊ ພາຍໃນກໍານົດເວລາ ໜຶ່ງປີ;
6. ທວງເອົາ, ໃຫ້ ຫຼື ຮັບ ສິນບົນ ຫຼື ສິ່ງຕອບແທນອື່ນ;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

# ພາກທີ IX
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 143 ຮູບການແກ້ໄຂຂໍ້ຂັດແຍ່ງ**

**ຂໍ້ຂັດແຍ່ງກ່ຽວກັບຫຼັກຊັບ ສາມາດແກ້ໄຂດ້ວຍຮູບການໃດໜຶ່ງ ດັ່ງນີ້:**

1. ການປະນີປະນອມ;
2. ການແກ້ໄຂໂດຍ ຄຄຊ;
3. ການແກ້ໄຂໂດຍອົງການແກ້ໄຂ້ຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂໂດຍສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 144 ການປະນີປະນອມ**

ໃນຂໍ້ຂັດແຍ່ງ ທີ່ເກີດຂື້ນລະຫວ່າງ ຜູ້ລົງທຶນດ້ວຍກັນ, ຜູ້ລົງທຶນກັບສະຖະບັນສື່ກາງດ້ານຫຼັກຊັບ ຫຼື ຕະຫຼາດຫຼັກຊັບກັບສະມາຊິກຂອງຕະຫຼາດຫຼັກຊັບ ຄູ່ກໍລະນີ ສາມາດດຳເນີນການປຶກສາຫາລື, ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 145 ການແກ້ໄຂໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບຫຼັກຊັບ ຄູ່ກໍລະນີ ມີສິດສະເໜີຕໍ່ ຄຄຊ ເພື່ອແກ້ໄຂ ຕາມລະບຽບການ.

**ມາດຕາ 146 ການແກ້ໄຂໂດຍອົງການແກ້ໄຂ້ຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບຫຼັກຊັບ ຄູ່ກໍລະນີ ມີສິດສະເໜີຕໍ່ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ ຕາມລະບຽບກົດໝາຍ.

**ມາດຕາ 147 ການແກ້ໄຂໂດຍສານປະຊາຊົນ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບຫຼັກຊັບ ຄູ່ກໍລະນີ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາ ຕັດສິນ ຕາມລະບຽບກົດໝາຍ.

**ມາດຕາ 148 ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບຫຼັກຊັບທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ X
## ການຄຸ້ມຄອງ ແລະ ກວດກາ ວຽກງານຫຼັກຊັບ
### ໝວດທີ 1
### ການຄຸ້ມຄອງວຽກງານຫຼັກຊັບ

ມາດຕາ 149 **ອົງການຄຸ້ມຄອງວຽກງານຫຼັກຊັບ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນອົງການຄຸ້ມຄອງວຽກງານຫຼັກຊັບ ມີຄວາມຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານຫຼັກຊັບ ບົນພື້ນຖານການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ເມື່ອມີຄວາມຈຳເປັນ.

ກົງຈັກການຈັດຕັ້ງຂອງອົງການຄຸ້ມຄອງວຽກງານຫຼັກຊັບ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ມາດຕາ 150 **ໂຄງປະກອບຂອງ ຄຄຊ**

ຄຄຊ ປະກອບດ້ວຍ ປະທານ, ຮອງປະທານ, ກຳມະການ ຈຳນວນໜຶ່ງ ແລະ ເລຂາ ຄຄຊ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ.

ຮອງນາຍົກລັດຖະມົນຕີ ເປັນປະທານ ຄຄຊ, ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ເປັນ ຮອງປະທານຜູ້ທີໜຶ່ງ ທັງເປັນຜູ້ປະຈຳການ, ລັດຖະມົນຕີວ່າການກະຊວງການເງິນ ເປັນຮອງປະທານຜູ້ທີສອງ ແລະ ລັດຖະມົນຕີຊ່ວຍວ່າການ ຫຼື ທຽບເທົ່າ ຈາກຂະແໜງການເສດຖະກິດ, ຍຸຕິທຳ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນກຳມະການ.

ມາດຕາ 151 **ພາລະບົດບາດຂອງ ຄຄຊ**

ຄຄຊ ມີພາລະບົດບາດເປັນເສນາທິການ ໃຫ້ລັດຖະບານ ໃນການຄຸ້ມຄອງມະຫາພາກທາງດ້ານວຽກງານຫຼັກຊັບ ຢ່າງລວມສູນໃນຂອບເຂດທົ່ວປະເທດ.

ມາດຕາ 152 **ສິດ ແລະ ໜ້າທີ່ ຂອງ ຄຄຊ**

**ຄຄຊ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ຄົ້ນຄວ້າ ສ້າງ, ປັບປຸງ ແຜນຍຸດທະສາດ, ນະໂຍບາຍ ແລະ ກົດໝາຍ ກ່ຽວກັບຫຼັກຊັບ ເພື່ອນຳສະເໜີລັດຖະບານ ພິຈາລະນາ;
2. ກຳນົດແຜນງານ ແລະ ໂຄງການເຄື່ອນໄຫວວຽກງານໃນແຕ່ລະໄລຍະ;
3. ອອກລະບຽບການ ກ່ຽວກັບວຽກງານຫຼັກຊັບ;

4. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ກ່ຽວກັບວຽກງານຫຼັກຊັບ ໃຫ້ແກ່ມວນຊົນ;

5. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານຫຼັກຊັບ;

6. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

7. ອະນຸຍາດໃຫ້ສ້າງຕັ້ງ ແລະ ຍຸບເລີກຕະຫຼາດຫຼັກຊັບ ຕາມການເຫັນດີຂອງລັດຖະບານ;

8. ໂຈະການເຄື່ອນໄຫວຊົ່ວຄາວຂອງຕະຫຼາດຫຼັກຊັບ ໃນກໍລະນີການຊື້-ຂາຍຫຼັກຊັບ ມີການເໜັງຕີງຜິດປົກກະຕິ ຫຼື ສະພາບເສດຖະກິດ-ສັງຄົມ ບໍ່ອຳນວຍໃຫ້ແກ່ການເຄື່ອນໄຫວຂອງຕະຫຼາດຫຼັກຊັບ;

9. ອະນຸຍາດໃຫ້ສ້າງຕັ້ງ, ໂຈະ, ຍຸບເລີກບໍລິສັດຫຼັກຊັບ, ບໍລິສັດບໍລິຫານຊັບສິນ, ບໍລິສັດຫຼັກຊັບພາຍໃນ, ສາຂາ ແລະ ໜ່ວຍບໍລິການ ຂອງບໍລິສັດຫຼັກຊັບພາຍໃນ;

10. ຮັບຮອງ, ໂຈະ, ຖອນການຮັບຮອງ ບໍລິສັດກວດສອບ, ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ທະນາຄານດູແລຊັບສິນ ແລະ ສະມາຄົມທຸລະກິດຫຼັກຊັບ;

11. ອະນຸຍາດ, ໂຈະ ແລະ ຍົກເລີກ ການອອກຈຳໜ່າຍຫຼັກຊັບ;

12. ອະນຸຍາດໃຫ້ສ້າງຕັ້ງ ແລະ ຍຸບເລີກ ກອງທຶນຮ່ວມ;

13. ສືບສວນ-ສອບສວນ ຄະດີກ່ຽວກັບຫຼັກຊັບ;

14. ໂຈະການເຄື່ອນໄຫວບັນຊີຫຼັກຊັບ ຫຼື ບັນຊີເງິນ ທີ່ຕິດພັນກັບການເຄື່ອນໄຫວວຽກງານຫຼັກຊັບ ເມື່ອມີການລະເມີດລະບຽບກົດໝາຍ;

15. ນຳໃຊ້ມາດຕະການທາງບໍລິຫານຕໍ່ ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;

16. ແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫຼັກຊັບ;

17. ປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ເພື່ອດຳເນີນຄະດີຕາມຂະບວນການຍຸຕິທຳ;

18. ພົວພັນ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານຫຼັກຊັບ;

19. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງຕົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

20. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

ມາດຕາ 153 **ລະບອບແບບແຜນວິທີເຮັດວຽກຂອງ ຄຄຊ**

ຄຄຊ ເຄື່ອນໄຫວວຽກງານຕາມລະບອບປະຊຸມ. ກອງປະຊຸມຂອງ ຄຄຊ ປະກອບດ້ວຍກອງປະຊຸມສາມັນ ແລະ ວິສາມັນ. ກອງປະຊຸມສາມັນເປີດຂຶ້ນ ສາມເດືອນຕໍ່ຄັ້ງ, ສ່ວນກອງ

ປະຊຸມວິສາມັນ ສາມາດເປີດຂຶ້ນເວລາໃດກໍໄດ້ ຖ້າວ່າມີຄວາມຈໍາເປັນ ຕາມການຮຽກຂອງ ປະທານ ຄຄຊ ຫຼື ຕາມການສະເໜີຂອງກໍາມະການຫຼາຍກວ່າເຄິ່ງໜຶ່ງ.

ກອງປະຊຸມ ຄຄຊ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີສະມາຊິກເຂົ້າຮ່ວມຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສະມາຊິກທັງໝົດ.

ກອງປະຊຸມ ຄຄຊ ຕົກລົງບັນຫາ ໂດຍຖືເອົາຕາມສຽງສ່ວນຫຼາຍຂອງສະມາຊິກ ທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີທາກມີສຽງເທົ່າກັນ ສຽງຂອງປະທານ ຄຄຊ ເປັນອັນຕັດສິນ.

## ໝວດທີ 2
## ການກວດກາວຽກງານຫຼັກຊັບ

### ມາດຕາ 154 ອົງການກວດກາວຽກງານຫຼັກຊັບ

ຄຄຊ ເປັນອົງການກວດກາວຽກງານຫຼັກຊັບ ມີໜ້າທີ່ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງ ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ກອງທຶນຮ່ວມ, ສະຖາບັນສື່ກາງດ້ານຫຼັກຊັບ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ຫົວໜ່ວຍອື່ນທີ່ກ່ຽວຂ້ອງ.

### ມາດຕາ 155 ເປົ້າໝາຍການກວດກາ

ເປົ້າໝາຍການກວດກາ ປະກອບດ້ວຍ ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ກອງທຶນຮ່ວມ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ຫົວໜ່ວຍອື່ນທີ່ກ່ຽວຂ້ອງ.

### ມາດຕາ 156 ເນື້ອໃນການກວດກາ

ອົງການກວດກາວຽກງານຫຼັກຊັບ ມີສິດກວດກາຮອບດ້ານ ຕໍ່ເປົ້າໝາຍການກວດກາ ເປັນຕົ້ນ ກວດກາການເຄື່ອນໄຫວທຸລະກິດ, ລະບົບເອເລັກໂຕຣນິກ ແລະ ກວດກາການປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 157 ຮູບການການກວດກາ

**ການກວດກາ ມີ ສາມຮູບການ ດັ່ງນີ້:**

1. ກວດກາ ປົກກະຕິ;
2. ກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາ ແບບກະທັນຫັນ.

ການກວດກາປົກກະຕິ ແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາ ອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາ ໂດຍຮີບດ່ວນ ຊຶ່ງບໍ່ມີການແຈ້ງ ໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ການກວດກາ ປະກອບດ້ວຍການກວດກາຕາມເອກະສານ ແລະ ການກວດກາກັບທີ່. ການກວດກາ ໃຫ້ປະຕິບັດຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

### ມາດຕາ 158 ຄະນະກວດກາ

ຄຄຊ ເປັນຜູ້ແຕ່ງຕັ້ງຄະນະກວດກາ ແຕ່ລະຄັ້ງ ຊຶ່ງປະກອບດ້ວຍ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງຂອງ ຄຄຊ ແລະ ຜູ້ຕາງໜ້າຈາກພາກສ່ວນອື່ນທີ່ກ່ຽວຂ້ອງ ໃນກໍລະນີທີ່ມີຄວາມຈຳເປັນ.

ຂໍ້ຕົກລົງແຕ່ງຕັ້ງຄະນະກວດກາ ຕ້ອງກຳນົດແຈ້ງກ່ຽວກັບຈຸດປະສົງ, ເປົ້າໝາຍ, ຂອບເຂດ ແລະ ກຳນົດເວລາໃນການກວດກາ.

### ມາດຕາ 159 ສິດ ແລະ ໜ້າທີ່ ຂອງຄະນະກວດກາ

**ຄະນະກວດກາມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ກວດກາເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ຕົກລົງແຕ່ງຕັ້ງຄະນະກວດກາ;
2. ກວດກາປຶ້ມບັນທຶກ, ປຶ້ມບັນຊີ, ເອກະສານ, ຂໍ້ມູນທາງເອເລັກໂຕຣນິກ ແລະ ບົດບັນທຶກຕ່າງໆ ກ່ຽວກັບການເຄື່ອນໄຫວທຸລະກິດຫຼັກຊັບ ຂອງເປົ້າໝາຍ;
3. ຮຽກເອົາຂໍ້ມູນ ແລະ ເອກະສານເພີ່ມເຕີມ ຈາກເປົ້າໝາຍ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
4. ຮຽກ ຫຼື ເຊີນ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະພະແນກ, ພະນັກງານວິຊາການ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ເພື່ອໃຫ້ຂໍ້ມູນ ກ່ຽວກັບການກວດກາ ພ້ອມທັງບັນທຶກການໃຫ້ຂໍ້ມູນດັ່ງກ່າວ;
5. ກວດກາສະຖານທີ່ເຮັດວຽກ, ສະຖານທີ່ເກັບມ້ຽນເອກະສານ ແລະ ລະບົບໂປຣແກຣມຕ່າງໆ ຂອງເປົ້າໝາຍຖືກກວດກາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
6. ສະເໜີໃຫ້ ຄຄຊ ນຳໃຊ້ມາດຕະການຊົ່ວຄາວໃດໜຶ່ງ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງ ຄະນະກວດກາ, ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
7. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການກວດກາເປົ້າໝາຍຖືກກວດກາ;

8. ສະຫຼຸບ ແລະ ລາຍງານຜົນການກວດກາຕໍ່ ຄຄຊ ແລະ ຕ້ອງຮັບຜິດຊອບຕໍ່ຜົນການກວດກາຂອງຕົນ;

9. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 160 **ພັນທະຂອງເປົ້າໝາຍຖືກກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ເປົ້າໝາຍຖືກກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີພັນທະໃຫ້ຄວາມຮ່ວມມືໃນການເຄື່ອນໄຫວປະຕິບັດໜ້າທີ່ ແລະ ສະໜອງຂໍ້ມູນ ຕາມການຮຽກຮ້ອງ ຂອງຄະນະກວດກາ.

ມາດຕາ 161 **ການກວດກາພາຍນອກ**

ການກວດກາພາຍນອກ ແມ່ນ ການກວດກາການປະຕິບັດໜ້າທີ່ຂອງ ຄຄຊ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍຸຕິທຳ.

**ການກວດກາພາຍນອກ ມີ ດັ່ງນີ້:**

1. ການກວດກາຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ;

2. ການກວດກາຂອງອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດກາລັດ ແລະ ກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ;

3. ການກວດກາຂອງອົງການກວດສອບແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດສອບແຫ່ງລັດ.

## ພາກທີ XI
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບຂອງອົງການຄຸ້ມຄອງວຽກງານຫຼັກຊັບ

ມາດຕາ 162 **ງົບປະມານ**

ງົບປະມານຂອງອົງການຄຸ້ມຄອງວຽກງານຫຼັກຊັບ ໃຫ້ນຳໃຊ້ງົບປະມານຂອງລັດ.

ມາດຕາ 163 **ເຄື່ອງໝາຍ ແລະ ຕາປະທັບຂອງອົງການຄຸ້ມຄອງວຽກງານຫຼັກຊັບ**

ອົງການຄຸ້ມຄອງວຽກງານຫຼັກຊັບ ມີເຄື່ອງໝາຍ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການຂອງຕົນ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 164 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການພັດທະນາຕະຫຼາດທຶນ, ການສະໜອງຂໍ້ມູນຂ່າວສານ ກ່ຽວກັບການລະເມີດລະບຽບກົດໝາຍກ່ຽວກັບວຽກງານຫຼັກຊັບ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 165 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

### ມາດຕາ 166 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຫຼັກ ຊັບ ຊຶ່ງເປັນການລະເມີດຄັ້ງທຳອິດ, ມີລັກສະນະເບົາ ແລະ ກໍ່ຄວາມເສັຍຫາຍບໍ່ເກີນ ຫ້າແສນກີບ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

### ມາດຕາ 167 ມາດຕະການທາງວິໄນ

ຜູ້ບໍລິຫານ ແລະ ພະນັກງານຂອງ ຄຄຊ ທີ່ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 142 ຂອງກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ກ່າວເຕືອນ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າ;
4. ໃຫ້ອອກຈາກລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງມອບຊັບສິນທີ່ໄດ້ມາໂດຍບໍ່ຖືກຕ້ອງນັ້ນ ແກ່ການຈັດຕັ້ງທີ່ຕົນສັງກັດໃຫ້ຄົບຖ້ວນ.

**ມາດຕາ 168 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຫຼັກຊັບ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:

1. ການປັ່ນຕະຫຼາດ ຈະຖືກປັບໃໝ ສາມເທົ່າ ຂອງກຳໄລທີ່ໄດ້ຈາກການປັ່ນຕະຫຼາດ ແລະ ໃນກໍລະນີບໍ່ມີກຳໄລ ຫຼື ມີກຳໄລຕ່ຳກວ່າ ສິບລ້ານກີບ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ຊາວຫ້າລ້ານກີບ. ໃນກໍລະນີນິຕິບຸກຄົນ ດຳເນີນການປັ່ນຕະຫຼາດ ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ກໍຈະຖືກປັບໃໝ ແຕ່ ສິບລ້ານ ຫາ ຊາວລ້ານກີບ;

2. ການນຳໃຊ້ຂໍ້ມູນພາຍໃນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 135 ຂໍ້ 2 ຂອງກົດໝາຍສະບັບນີ້ ຈະຖືກປັບໃໝ ສາມເທົ່າ ຂອງກຳໄລຈາກການຊື້-ຂາຍຫຼັກຊັບ. ໃນກໍລະນີ ບໍ່ມີກຳໄລ ຫຼື ມີກຳໄລຕ່ຳກວ່າ ສິບລ້ານກີບ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ຊາວຫ້າລ້ານກີບ;

3. ການນຳໃຊ້ ຫຼື ການໃຫ້ໃຊ້ບັນຊີ ແລະ ຊື່ ຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ ເພື່ອຊື້-ຂາຍຫຼັກຊັບ ຈະຖືກປັບໃໝ ສາມເທົ່າ ຂອງກຳໄລທີ່ໄດ້ຮັບຈາກການກະທຳ ດັ່ງກ່າວ. ໃນກໍລະນີ ບໍ່ມີກຳໄລ ຫຼື ມີລາຍຮັບຕ່ຳກວ່າ ຫ້າສິບລ້ານກີບ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ຊາວຫ້າລ້ານກີບ.

4. **ການອອກຈຳໜ່າຍຫຼັກຊັບ:**

4.1. ການອອກຈຳໜ່າຍຫຼັກຊັບ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສ່ວນຮ້ອຍ ຂອງເງິນທີ່ລະດົມໄດ້ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

4.2. ການອອກຈຳໜ່າຍຫຼັກຊັບບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ຫຼື ມີການຕົວະຂໍ້ມູນໃນທຸກຮູບແບບ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ ໃນກໍລະນີ ທີ່ຍັງບໍ່ທັນໄດ້ອອກຈຳໜ່າຍຫຼັກຊັບ, ຈະຖືກປັບໃໝ ສາມສ່ວນຮ້ອຍ ຂອງເງິນທີ່ລະດົມໄດ້ ເມື່ອເວລາອອກຈຳໜ່າຍຫຼັກຊັບແລ້ວ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

4.3. ການນຳໃຊ້ ເງິນຈອງຊື້ຫຼັກຊັບ ຫຼື ທຶນທີ່ລະດົມໄດ້ ກ່ອນໄດ້ຮັບການຢັ້ງຢືນ ຫຼື ນຳໃຊ້ທຶນທີ່ລະດົມມາໄດ້ ບໍ່ຖືກຕ້ອງຕາມເປົ້າໝາຍ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ລວມທັງ ຜູ້ມີອຳນາດຄວບຄຸມບໍລິສັດ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ຊາວຫ້າລ້ານກີບ.

5. **ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ:**

5.1. ການໃຫ້ບໍລິການຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ຫຼື ເປັນຕົວແທນໃນການອອກຈຳໜ່າຍຫຼັກຊັບ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ ຈະຖືກປັບໃໝ ດັ່ງນີ້:

- ໃນກໍລະນີ ມີລາຍຮັບເກີນກວ່າ ຫ້າສິບລ້ານກີບ ຈະຖືກປັບໃໝ ສາມເທົ່າ ຂອງລາຍຮັບ ທີ່ໄດ້ຮັບຈາກການບໍລິການດັ່ງກ່າວ;

- ໃນກໍລະນີ ບໍ່ມີລາຍຮັບ ຫຼື ມີລາຍຮັບຕໍ່າກວ່າ ຫ້າສິບລ້ານກີບ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ ;

- ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ຊາວຫ້າລ້ານກີບ.

5.2. ການໃຫ້ບໍລິການຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ຫຼື ເປັນທີ່ປຶກສາທາງດ້ານການເງິນ ໃຫ້ແກ່ບໍລິສັດທີ່ຖືຮຸ້ນໃນບໍລິສັດຕົນ ຫຼື ບໍລິສັດທີ່ຕົນຖືຮຸ້ນ ຫຼາຍກວ່າ ສິບສ່ວນຮ້ອຍຂອງຮຸ້ນທັງໝົດ ຈະຖືກປັບໃໝ ສາມເທົ່າ ຂອງລາຍຮັບ ທີ່ໄດ້ຮັບຈາກການໃຫ້ບໍລິການດັ່ງກ່າວ;

5.3. ການໂຄສະນາຈໍາໜ່າຍຫຼັກຊັບ ໂດຍບໍ່ສອດຄ່ອງກັບເນື້ອໃນ ຕາມທີ່ໄດ້ບົ່ງໄວ້ໃນໜັງສືຊວນຊື້ ຫຼື ບໍ່ຖືກຕ້ອງຕາມຄວາມເປັນຈິງ ຊຶ່ງເຮັດໃຫ້ຜູ້ລົງທຶນເຂົ້າໃຈຜິດ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

5.4. ການສ້າງ, ພັດທະນາ ແລະ ສະໜອງ ຜະລິດຕະພັນດ້ານຫຼັກຊັບໃຫ້ແກ່ມວນຊົນໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

5.5. ການຊື້-ຂາຍຫຼັກຊັບ, ນໍາໃຊ້ເງິນ ຫຼື ຫຼັກຊັບ ຂອງລູກຄ້າໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ດັ່ງນີ້:

- ໃນກໍລະນີ ມີກໍາໄລເກີນກວ່າ ສິບລ້ານກີບ ຈະຖືກປັບໃໝ ສາມເທົ່າ ຂອງກໍາໄລ;

- ໃນກໍລະນີ ບໍ່ມີກໍາໄລ ຫຼື ມີກໍາໄລຕໍ່າກວ່າ ສິບລ້ານກີບ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ຊາວຫ້າລ້ານກີບ;

- ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ຊາວຫ້າລ້ານກີບ;

5.6. ການເຜີຍແຜ່, ການນໍາໃຊ້ຂໍ້ມູນຂອງລູກຄ້າ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ສາມສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສິບຫ້າລ້ານ ຫາ ຊາວຫ້າລ້ານ ກີບ;

5.7. ການໃຫ້ບູລິມະສິດແກ່ຕົນ ໃນການຊື້-ຂາຍຫຼັກຊັບ ສູງກວ່າຂອງລູກຄ້າ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ.

6. ບໍລິສັດບໍລິຫານຊັບສິນ ແລະ ຜູ້ບໍລິຫານກອງທຶນຮ່ວມ:

6.1. ຜູ້ບໍລິຫານບໍລິສັດບໍລິຫານຊັບສິນ ແລະ ຜູ້ບໍລິຫານກອງທຶນຮ່ວມ ຊຶ່ງດໍາລົງຕໍາແໜ່ງໃດໜຶ່ງ ໃນທະນາຄານດູແລຊັບສິນ ຫຼື ບໍລິສັດບໍລິຫານຊັບສິນອື່ນ ຫຼື ມີສ່ວນຮ່ວມໃນ

ທຸລະກຳຫຼັກຊັບ ຫຼື ທຸລະກຳອື່ນ ທີ່ສ້າງຜົນເສຍຫາຍ ໃຫ້ແກ່ຊັບສິນຂອງກອງທຶນຮ່ວມ ແລະ ຜົນປະໂຫຍດຂອງຜູ້ຖືໜ່ວຍລົງທຶນ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ;

6.2. ການສ້າງຕັ້ງກອງທຶນຮ່ວມ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ ຫ້າສິບລ້ານ ຫາ ແປດສິບລ້ານກີບ;

6.3. ການລະດົມທຶນ ກ່ອນໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສ່ວນຮ້ອຍ ຂອງທຶນທີ່ລະດົມໄດ້;

6.4. ການກູ້ຊັບສິນໃຫ້ກອງທຶນຮ່ວມ ຫຼື ການເອົາຊັບສິນຂອງກອງທຶນຮ່ວມໄປປ່ອຍກູ້ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

6.5. ການເອົາຊັບສິນຂອງກອງທຶນຮ່ວມໜຶ່ງ ໄປລົງທຶນໃນກອງທຶນຮ່ວມອື່ນທີ່ຕົນບໍລິຫານ, ການຊື້ຮຸ້ນ ຫຼື ພັນທະບັດຂອງທະນາຄານດູແລຊັບສິນ ທີ່ຕົນໃຊ້ບໍລິການ ແລະ ບໍລິສັດບໍລິຫານຊັບສິນອື່ນ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

6.6. ການເອົາຊັບສິນຂອງກອງທຶນຮ່ວມ ໄປຊື້ຫຼັກຊັບຂອງບໍລິສັດໃດໜຶ່ງ ທີ່ເປັນຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມ ໃນບໍລິສັດບໍລິຫານຊັບສິນ ຫຼື ທະນາຄານດູແລຊັບສິນທີ່ກ່ຽວຂ້ອງກັບກອງທຶນຮ່ວມ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

6.7. ການນຳໃຊ້ທຶນທີ່ລະດົມໄດ້ ກ່ອນໄດ້ຮັບອະນຸຍາດຈາກ ຄຄຊ ຫຼື ລົງທຶນເຂົ້າໃນກິດຈະການທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ ໜຶ່ງຮ້ອຍລ້ານ ຫາ ໜຶ່ງຮ້ອຍຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

6.8. ການນຳໃຊ້ຊັບສິນຂອງກອງທຶນຮ່ວມຄ້ຳປະກັນການຂໍກູ້ຂອງຕົນ, ບຸກຄົນ ຫຼື ນິຕິບຸກຄົນ ແລະ ຊຳລະໜີ້ສິນ ລວມທັງໃນກໍລະນີບໍລິສັດບໍລິຫານຊັບສິນ ຢູ່ໃນສະພາວະລົ້ມລະລາຍ ຈະຖືກປັບໃໝ ແຕ່ ໜຶ່ງຮ້ອຍລ້ານ ຫາ ໜຶ່ງຮ້ອຍຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

6.9. ການລວມບັນຊີຊັບສິນຂອງຕົນ ຫຼື ຊັບສິນຂອງບຸກຄົນອື່ນ ເຂົ້າໃນບັນຊີຊັບສິນຂອງກອງທຶນຮ່ວມ ທີ່ຕົນບໍລິຫານ ຈະຖືກປັບໃໝ ແຕ່ ໜຶ່ງຮ້ອຍລ້ານ ຫາ ໜຶ່ງຮ້ອຍຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

6.10. ການບໍລິຫານຊັບສິນຂອງກອງທຶນຮ່ວມ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໂດຍບໍ່ເປັນທຳ ຈະຖືກປັບໃໝ ແຕ່ ໜຶ່ງຮ້ອຍລ້ານ ຫາ ໜຶ່ງຮ້ອຍຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

6.11. ການນຳໃຊ້ຊັບສິນຂອງກອງທຶນຮ່ວມ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ ທີ່ບໍ່ແມ່ນຜູ້ຖືໜ່ວຍລົງທຶນຂອງກອງທຶນນັ້ນ ຈະຖືກປັບໃໝ ແຕ່ ໜຶ່ງຮ້ອຍລ້ານ ຫາ ໜຶ່ງຮ້ອຍຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

6.12. ການຮັກສາ ແລະ ການຄຸ້ມຄອງ ຊັບສິນຂອງກອງທຶນຮ່ວມ ດ້ວຍຕົນເອງ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ.

7. **ທະນາຄານດູແລຊັບສິນ:**

7.1. ການຖືຮຸ້ນ ຫຼື ປ່ອຍກູ້ ໃຫ້ບໍລິສັດບໍລິຫານຊັບສິນ ທີ່ຕົນໃຫ້ບໍລິການ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ;

7.2. ການລົງທຶນ ຫຼື ຊື້-ຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ທີ່ຕົນໃຫ້ບໍລິການ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ;

7.3. ການໃຫ້ບໍລິການດູແລຊັບສິນ ແກ່ບໍລິສັດບໍລິຫານຊັບສິນ ທີ່ຖືຮຸ້ນໃນທະນາຄານຕົນ ຫຼື ທີ່ທະນາຄານຕົນຖືຮຸ້ນ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ;

7.4. ການລວມບັນຊີຊັບສິນຂອງລູກຄ້າເຂົ້າກັນ ຫຼື ລວມບັນຊີຊັບສິນຂອງລູກຄ້າ ເຂົ້າກັບບັນຊີຊັບສິນຂອງຕົນ ຈະຖືກປັບໃໝ ແຕ່ ໜຶ່ງຮ້ອຍລ້ານ ຫາ ໜຶ່ງຮ້ອຍຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

7.5. ການເປັນສະມາຊິກສະພາບໍລິຫານ ຂອງບໍລິສັດບໍລິຫານຊັບສິນ ທີ່ຕົນໃຫ້ບໍລິການ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ.

8. ບໍລິສັດກວດສອບ ແລະ ຜູ້ກວດສອບ ທີ່ກວດສອບເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 140 ຂອງກົດໝາຍສະບັບນີ້ ຈະຖືກປັບໃໝ ໜຶ່ງເທົ່າ ຂອງລາຍຮັບທີ່ໄດ້ຮັບຈາກການກວດສອບ.

9. **ຕະຫຼາດຫຼັກຊັບ:**

9.1. ການເຄື່ອນໄຫວ ແລະ ການໂອນກິດຈະການໃດໜຶ່ງ ຂອງຕະຫຼາດຫຼັກຊັບ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

9.2. ການລົງທຶນໃນກິດຈະການ ຫຼື ວິສາຫະກິດອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມເທົ່າ ຂອງລາຍຮັບ ທີ່ໄດ້ຈາກການລົງທຶນ. ໃນກໍລະນີ ບໍ່ມີລາຍຮັບ ຫຼື ມີລາຍຮັບຕໍ່າກວ່າ ສິບລ້ານກີບ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

9.3. ການແຈ້ງ ຫຼື ເຜີຍແຜ່ຂໍ້ມູນທີ່ບໍ່ຖືກຕ້ອງ ຊຶ່ງສົ່ງຜົນກະທົບຕໍ່ຫຼັກຊັບ, ຜູ້ລົງທຶນ ແລະ ຕະຫຼາດຫຼັກຊັບ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

9.4. ການເປີດເຜີຍ ຫຼື ການນໍາໃຊ້ຂໍ້ມູນຂອງສະມາຊິກ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

9.5. ການເປີດການຊື້-ຂາຍຫຼັກຊັບ ທີ່ຢູ່ໃນໄລຍະຫ້າມ ຊື້-ຂາຍ ຫຼື ໂອນ ຫຼັກຊັບ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ;

9.6. ການນໍາໃຊ້ບັນຊີຫຼັກຊັບຂອງ ສະມາຊິກ ແລະ ສະມາຊິກຂອງສູນຮັບຝາກຫຼັກຊັບ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ບຸກຄົນອື່ນ ຈະຖືກປັບໃໝ ແຕ່ ເຈັດສິບລ້ານ ຫາ ໜຶ່ງຮ້ອຍຫ້າສິບລ້ານກີບ. ຜູ້ບໍລິຫານ ແລະ ຜູ້ມີສ່ວນກ່ຽວຂ້ອງໂດຍກົງ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ.

10. ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ ທີ່ບໍ່ປະຕິບັດຕາມຫຼັກການຄຸ້ມຄອງບໍລິຫານທີ່ດີ ຈະຖືກປັບໃໝ ແຕ່ ເຈັດສິບ ຫາ ໜຶ່ງຮ້ອຍລ້ານກີບ.

ການລະເມີດອື່ນ ຕໍ່ກົດໝາຍສະບັບນີ້ ທີ່ບໍ່ໄດ້ກໍານົດໄວ້ໃນມາດຕານີ້ ຈະຖືກປັບໃໝ ຕາມລະບຽບການສະເພາະຂອງ ຄຄຊ.

**ມາດຕາ 169 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ແລະ ຂໍ້ຫ້າມ ຊຶ່ງໄດ້ກໍ່ຄວາມເສັຍຫາຍແກ່ຜູ້ອື່ນ ຈະຕ້ອງໃຊ້ແທນຄ່າເສັຍຫາຍຕາມມູນຄ່າຕົວຈິງ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 170 ມາດຕະການທາງອາຍາ**

ການຍຸຍົງໃຫ້ລູກຄ້າຕັດສິນໃຈຊື້-ຂາຍຫຼັກຊັບ ທີ່ບໍ່ສົມເຫດສົມຜົນ ເພື່ອຜົນປະໂຫຍດຂອງຕົນ ຫຼື ໃຫ້ຄໍາໝັ້ນສັນຍາ ກ່ຽວກັບຜົນຕອບແທນຈາກການຊື້-ຂາຍຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 7 ມາດຕາ 137 ຂອງກົດໝາຍສະບັບນີ້ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ ສາມສິບລ້ານ ຫາ ຫ້າສິບລ້ານກີບ.

ການສ້າງ ແລະ ສະໜອງຂໍ້ມູນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ມາດຕາ 135 ຂອງກົດໝາຍສະບັບນີ້ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ ສາມຮ້ອຍລ້ານ ຫາ ຫ້າຮ້ອຍລ້ານກີບ.

ມາດຕາ 171 **ມາດຕະການໂທດເພີ່ມ**

ນອກຈາກ ໂທດຕົ້ນຕໍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 170 ຂອງກົດໝາຍສະບັບນີ້ ຜູ້ກະທຳຜິດ ຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ຕາມແຕ່ລະກໍລະນີ ເປັນຕົ້ນ ຖືກຈຳກັດການເຄື່ອນໄຫວວຽກງານຫຼັກຊັບ, ໂຈະການເຄື່ອນໄຫວທຸລະກິດບາງສ່ວນ ຫຼື ທັງໝົດ, ຖອນໃບອະນຸຍາດສ້າງຕັ້ງ ຫຼື ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ແລະ ຖືກຮິບຊັບ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

ມາດຕາ 172 **ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ 173 **ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ຫົກສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້